# ວາລະການ
# ພັດທະນາຕົວເມືອງ
# ສະບັບໃໝ່

H III

HABITAT III

QUITO 17-20 OCTOBER 2016

United Nations Conference on Housing and Sustainable Urban Development

United Nations

# ສາລະບານ

ວາລະການພັດທະນາຕົວເມືອງສະບັບໃໝ່ ........................................................................9
ຖະແຫຼງການກິວໂຕກ່ຽວກັບການຕັ້ງຖິ່ນຖານຂອງມະນຸດແລະຕົວເມືອງແບບຍືນຍົງ.........................................11
ການຈັດຕັ້ງປະຕິບັດຖະແຫຼງການກິວໂຕກ່ຽວກັບ ວາລະການພັດທະນາຕົວເມືອງສະບັບໃໝ່...............................17

ມະຕິທີ່ຖືກຮັບຮອງໂດຍສະມັດຊາໃຫຍ່ ໃນວັນທີ 23 ທັນວາ 2016

[ໂດຍບໍ່ອ້າງອີງເຖິງຄະນະກຳມະການຫຼັກ (A/71/L.23)]

71/256. ວາລະການພັດທະນາຕົວເມືອງສະບັບໃໝ່

ສະມັດຊາໃຫຍ່,

ໂດຍທວນຄືນເຖິງມະຕິເລກທີ 67/216 ລົງວັນທີ 21 ທັນວາ 2012, ເຊິ່ງໄດ້ລະບຸການຈັດກອງປະຊຸມ ສະຫະປະຊາຊາດ (ສປຊ) ກ່ຽວກັບ ທີ່ຢູ່ອາໄສ ແລະ ການພັດທະນາຕົວເມືອງແບບຍືນຍົງ (Habitat III), ແລະ ມະຕິເລກທີ 68/239 ລົງວັນທີ 27 ທັນວາ 2013, 69/226 ລົງວັນທີ 19 ທັນວາ 2014 ແລະ 70/210 ລົງວັນທີ 22 ທັນວາ 2015,

1. ສະແດງຄວາມຮູ້ສຶກຂອບໃຈເປັນຢ່າງຍິ່ງໄປຍັງລັດຖະບານ ແລະ ປະຊາຊົນຂອງປະເທດ ເອກວາດໍ ທີ່ເປັນເຈົ້າພາບຈັດກອງປະຊຸມ ສປຊ ກ່ຽວກັບ ທີ່ຢູ່ອາໄສ ແລະ ການພັດທະນາຕົວເມືອງແບບຍືນຍົງ (Habitat III), ແຕ່ວັນທີ 17-20 ຕຸລາ 2016 ແລະ ໃຫ້ຄວາມຊ່ວຍເຫຼືອທີ່ຈຳເປັນທຸກຢ່າງ.

2. ອະນຸມັດເອົາວາລະການພັດທະນາຕົວເມືອງສະບັບໃໝ່ຖືກຮັບຮອງໂດຍກອງປະຊຸມ ສປຊ ກ່ຽວກັບ ທີ່ຢູ່ອາໄສ ແລະ ການພັດທະນາຕົວເມືອງແບບຍືນຍົງ (Habitat III) ເຊິ່ງຖືກລະບຸໃນພາກເພີ່ມເຕີມຂອງມະຕິສະບັບປະຈຸບັນ.

ກອງປະຊຸມຄົບຄະນະ ຄັ້ງທີ 68

ວັນທີ 23 ທັນວາ 2016

# ວາລະການພັດທະນາຕົວເມືອງສະບັບໃໝ່

ຖະແຫຼງການກົວໂຕ ກ່ຽວກັບການ
ຕັ້ງຖິ່ນຖານຂອງມະນຸດ ແລະ
ຕົວເມືອງແບບຍືນຍົງສໍາລັບທຸກຄົນ

ພາກເພີ່ມເຕີມ

ວາລະການພັດທະນາຕົວເມືອງສະບັບໃໝ່

## ຖະແຫຼງການກິວໂຕກ່ຽວກັບການຕັ້ງຖິ່ນຖານຂອງມະນຸດ ແລະ ຕົວເມືອງແບບຍືນຍົງສຳລັບທຸກຄົນ

1. ພວກເຮົາ, ຫົວໜ້າຂອງລັດ ແລະ ລັດຖະບານ, ລັດຖະມົນຕີ ແລະ ຕົວແທນຂັ້ນສູງ ໄດ້ເຂົ້າຮ່ວມກອງປະຊຸມ ສປຊ ກ່ຽວກັບ ທີ່ພັກອາໄສ ແລະ ການພັດທະນາຕົວເມືອງແບບຍືນຍົງ (Habitat III) ເລີ່ມແຕ່ວັນທີ 17-20 ຕຸລາ 2016 ໃນເມືອງກິວໂຕ, ໂດຍການເຂົ້າຮ່ວມຂອງລັດຖະບານທ້ອງຖິ່ນ ແລະ ພາກ, ລັດຖະສະພາ, ອົງການຈັດຕັ້ງທາງສັງຄົມ, ປະຊາຊົນພື້ນເມືອງ ແລະ ຊຸມຊົນໃນທ້ອງຖິ່ນ, ພາກສ່ວນເອກະຊົນ, ຜູ້ດຳເນີນງານ ແລະ ຊ່ຽວຊານ, ປະຊາຄົມດ້ານການສຶກສາ ແລະ ວິທະຍາສາດ, ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອຮັບຮອງເອົາວາລະການພັດທະນາຕົວເມືອງສະບັບໃໝ່.

2. ພາຍໃນປີ 2050, ປະຊາກອນທີ່ອາໄສຢູ່ໃນຕົວເມືອງຢູ່ໃນໂລກ ຄາດວ່າຈະເພີ່ມຂຶ້ນສອງເທົ່າ, ເຮັດໃຫ້ການສ້າງເມືອງ ກາຍເປັນກະແສຂອງໂລກໃນສະຕະວັດທີຊາວເອັດ. ປະຊາກອນ, ກິດຈະກຳທາງເສດຖະກິດ, ການພົວພັນທາງວັດທະນາທຳ ແລະ ສັງຄົມ, ພ້ອມກັນກັບ ຜົນກະທົບທາງດ້ານມະນຸດສະທຳ ແລະ ສະພາບແວດລ້ອມ ເປັນວຽກຈຸດສຸມທີ່ກຳລັງເພີ່ມຂຶ້ນໃນຕົວເມືອງ. ນີ້ແມ່ນສິ່ງທ້າທາຍຕໍ່ຄວາມຍືນຍົງທາງດ້ານທີ່ຢູ່ອາໄສ, ພື້ນຖານໂຄ່ງລ່າງ, ການບໍລິການຂັ້ນພື້ນຖານ, ຄວາມໝັ້ນຄົງຂອງອາຫານ, ສຸຂະພາບ, ການສຶກສາ, ອາຊີບທີ່ມີຄຸນຄ່າ, ຄວາມປອດໄພ ແລະ ຊັບພະຍາກອນທຳມະຊາດ ແລະ ອື່ນໆ.

3. ນັບແຕ່ກອງປະຊຸມ ສປຊ ວ່າດ້ວຍການຕັ້ງຖິ່ນຖານຂອງມະນຸດທີ່ຈັດຂຶ້ນຢູ່ເມືອງແວນຄູເວີ, ປະເທດຄານາດາ ໃນປີ 1976 ແລະ ເມືອງ ອິສຕັນບູຣ, ປະເທດຕວກກີ ໃນປີ 1996 ແລະ ການຮັບຮອງເອົາເປົ້າໝາຍສະຫະສະວັດແຫ່ງການພັດທະນາ ໃນປີ 2000, ພວກເຮົາໄດ້ເຫັນການປັບປຸງໃນເລື່ອງຄຸນນະພາບຂອງຊີວິດຂອງຜູ້ທີ່ອາໄສໃນຕົວເມືອງຫຼາຍລ້ານຄົນ, ລວມທັງຜູ້ອາໄສຢູ່ໃນຊຸມຊົນແອອັດ ແລະ ຢູ່ເຂດທີ່ມີການຕັ້ງຖິ່ນຖານນອກລະບົບ. ເຖິງຢ່າງໃດກໍ່ຕາມ, ການຄົງຢູ່ຂອງຄວາມທຸກຍາກໃນຫຼາຍຮູບແບບ, ການເພີ່ມຂຶ້ນຂອງຄວາມບໍ່ສະເໝີພາບ ແລະ ຄວາມເຊື່ອມໂຊມຂອງສະພາບແວດລ້ອມຍັງຄົງຄ້າງເປັນອຸປະສັກຕໍ່ການພັດທະນາແບບຍືນຍົງໃນທົ່ວໂລກ, ເຊິ່ງການແບ່ງແຍກທາງເສດຖະກິດ ແລະ ສັງຄົມ ແລະ ການແບ່ງແຍກດ້ານພື້ນທີ່ ແມ່ນບໍ່ສາມາດຫຼີກລ່ຽງໄດ້ໃນຄວາມເປັນຈິງໃນຕົວເມືອງ ແລະ ການຕັ້ງຖິ່ນຖານຂອງມະນຸດ.

4. ພວກເຮົາຍັງຫ່າງເຫີນຜົນໄດ້ຮັບທີ່ພຽງພໍໃນການແກ້ໄຂ ໃນສິ່ງເຫຼົ່ານີ້ ແລະ ສິ່ງທ້າທາຍອື່ນທີ່ມີຢູ່ ແລະ ກຳລັງຂະຫຍາຍຕົວ, ແລະ ມີຄວາມຄຳເປັນທີ່ຈະຕ້ອງຫາຜົນປະໂຫຍດນຳໂອກາດທີ່ມີຢູ່ໃນຕົວເມືອງ ເຊິ່ງເປັນພາກສ່ວນສຳຄັນຂອງການຂະຫຍາຍຕົວຂອງເສດຖະກິດແບບຍືນຍົງ ແລະ ມີສ່ວນຮ່ວມ, ການພັດທະນາວັດທະນະທຳ ແລະ ສັງຄົມ, ການຮັກສາສິ່ງແວດລ້ອມ, ແລະ ການປະກອບສ່ວນດ້ານທ່າແຮງຕໍ່ກັບເພື່ອຜົນສຳເລັດຂອງການພັດທະນາແບບຍືນຍົງ ແລະ ສາມາດປ່ຽນແປງໄດ້.

5. ໂດຍການແກ້ໄຂຄືນກ່ຽວກັບວິທີທາງການຕັ້ງຖິ່ນຖານຂອງມະນຸດ ແລະ ຕົວເມືອງ ເຊິ່ງໄດ້ຖືກວາງແຜນ, ອອກແບບ, ລົງທຶນ, ພັດທະນາ, ມີການຄວບຄຸມ ແລະ ຄຸ້ມຄອງນີ້, ວາລະການພັດທະນາຕົວເມືອງສະບັບໃໝ່ຈະຊ່ວຍລຶບລ້າງຄວາມທຸກຍາກ ແລະ ຄວາມອຶດຫິວ ໃນທຸກຮູບແບບ ແລະ ທຸກມິຕິ; ຫຼຸດຜ່ອນຄວາມບໍ່ສະເໝີພາບ; ສົ່ງເສີມການຂະຫຍາຍຕົວຂອງເສດຖະກິດແບບຍືນຍົງ ແລະ ມີສ່ວນຮ່ວມ; ບັນລຸຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ແລະ ເດັກຍິງທຸກຄົນ ເພື່ອຈະໄດ້ມີສ່ວນຮ່ວມຢ່າງເຕັມສ່ວນໃນການພັດທະນາແບບຍືນຍົງ; ປັບປຸງສຸຂະພາບ ແລະ ການເປັນຢູ່ທີ່ດີ; ເສີມສ້າງຄວາມໝັ້ນຄົງ; ແລະ ການຮັກສາສິ່ງແວດລ້ອມ.

6. ພວກເຮົາພິຈາລະນາເຖິງຜົນສຳເລັດທີ່ສຳຄັນຂອງປີ 2015, ໂດຍສະເພາະ ວາລະການພັດທະນາແບບຍືນຍົງ ປີ 2030,[1] ລວມມີເປົ້າໝາຍການພັດທະນາແບບຍືນຍົງ, ວາລະແຜນງານຂອງກອງປະຊຸມສາກົນກ່ຽວກັບການເງິນເພື່ອການພັດທະນາຄັ້ງທີ 3 ຢູ່ທີ່ ອັດດີສອາບາບາ,[2] ຂໍ້ຕົກລົງປາຣີທີ່ຖືກຮັບຮອງພາຍໃຕ້ສົນທິສັນຍາສະຫະປະຊາ

[1] Resolution 70/1.
[2] Resolution 69/313, annex.



Garden and Route, looking down from the Victory Gate of Vientiane, Laos © Shutterstock

ຊາດວ່າດ້ວຍການປ່ຽນແປງດິນຟ້າອາກາດ,[3] ຂອບແຜນງານເຊັນໄດສໍາລັບການຫຼຸດຜ່ອນຄວາມສ່ຽງທາງດ້ານໄພພິບັດ ປີ 2015-2030,[4] ແຜນງານວຽນນາສໍາລັບປະເທດກໍາລັງພັດທະນາທີ່ບໍ່ມີຊາຍແດນຕິດກັບທະເລໃນຊ່ວງໄລຍະສິບປີ (ທົດສະວັດ) ແຕ່ປີ 2014-2024,[5] ແຜນງານເລັ່ງລັດການແກ້ໄຂອາການເດັກນ້ອຍເກີດໃໝ່ເສຍຊີວິດກະທັນຫັນ (SAMOA) ແລະ[6] ແຜນງານອິສຕັນບູຣສໍາລັບການຈັດຕັ້ງປະຕິບັດໃນປະເທດທີ່ດ້ອຍພັດທະນາໃນຊ່ວງໄລຍະສິບປີ (ທົດສະວັດ) ແຕ່ປີ 2011-2020. ນອກຈາກນີ້,[7] ພວກເຮົາຍັງພິຈາລະນາເຖິງຖະແຫຼງການຣິໂອວ່າດ້ວຍສິ່ງແວດລ້ອມ  ແລະ ການພັດທະນາ ຢູ່ Rio,[8] ກອງປະຊຸມສຸດຍອດລະດັບໂລກ ວ່າດ້ວຍການພັດທະນາແບບຍືນຍົງ, ກອງປະຊຸມສຸດຍອດລະດັບໂລກ ວ່າດ້ວຍການພັດທະນາສັງຄົມ, ແຜນງານການຈັດຕັ້ງປະຕິບັດຂອງກອງປະຊຸມສາກົນວ່າດ້ວຍປະຊາກອນ ແລະ ການພັດທະນາ,[9] ແຜນປະຕິບັດງານປັກກິ່ງ,[10] ກອງປະຊຸມ ສປຊ ວ່າດ້ວຍການພັດທະນາ ແລະ ການຈັດຕັ້ງປະຕິບັດຕາມກອງປະຊຸມເຫຼົ່ານີ້.

7. ໃນຂະນະທີ່ຮັບຮູ້ວ່າ ບໍ່ມີຜົນການຕົກລົງລະຫວ່າງລັດຖະບານ, ພວກເຮົາກໍໃຫ້ຄວາມສົນໃຈຕໍ່ກັບກອງປະຊຸມສຸດຍອດມະນຸດສະທໍາໂລກທີ່ໄດ້ຈັດຂຶ້ນໃນເດືອນພຶດສະພາ 2016 ຢູ່ເມືອງອິສຕັນບູຣ.

8. ພວກເຮົາຮັບຮູ້ການປະກອບສ່ວນຂອງລັດຖະບານລະດັບຊາດ, ພາກ ແລະ ທ້ອງຖິ່ນ, ໃນການກໍານົດວາລະການພັດທະນາຕົວເມືອງສະບັບໃໝ່ ແລະ ໃຫ້ຄວາມສົນໃຈຕໍ່ກັບກອງປະຊຸມລະດັບໂລກຄັ້ງທີ່ສອງຂອງລັດຖະບານໃນລະດັບພາກພື້ນ ແລະ ທ້ອງຖິ່ນ.

9. ວາລະການພັດທະນາຕົວເມືອງ ສະບັບໃໝ່ຢັ້ງຢືນເຖິງການໃຫ້ຄໍາໝັ້ນສັນຍາຂອງພວກເຮົາໃນ ທົ່ວໂລກ ຕໍ່ກັບການພັດທະນາຕົວເມືອງແບບຍືນຍົງ ເຊິ່ງເປັນບາດກ້າວສໍາຄັນສໍາລັບການຮັບຮູ້ການພັດທະນາແບບຍືນຍົງທີ່ມີວິທີການເຊື່ອມສານ ແລະ ປະສານກັນໃນລະດັບໂລກ, ພາກພື້ນ, ຊາດ, ພາກ, ແລະ ທ້ອງຖິ່ນ, ພ້ອມກັບການເຂົ້າຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງທັງໝົດ. ການຈັດຕັ້ງປະຕິບັດວາລະການພັດທະນາຕົວເມືອງສະບັບໃໝ່ປະກອບສ່ວນຕໍ່ກັບການຈັດຕັ້ງປະຕິບັດ ແລະ ການດັດປັບວາລະການການພັດທະນາແບບຍືນຍົງ ປີ 2030 ໃຫ້ເຂົ້າກັບທ້ອງຖິ່ນດ້ວຍວິທີການເຊື່ອມສານ ແລະ ຕໍ່ກັບຜົນສໍາເລັດຂອງເປົ້າໝາຍການພັດທະນາແບບຍືນຍົງ ແລະ ຄາດໝາຍສູ້ຊົນ, ລວມມີ ເປົ້າໝາຍທີ 11 ກ່ຽວກັບການສ້າງຕົວເມືອງ ແລະ ການຕັ້ງຖິ່ນຖານຂອງມະນຸດ ແບບມີສ່ວນຮ່ວມ, ປອດໄພ, ໝັ້ນຄົງ ແລະ ຍືນຍົງ.

10. ວາລະການພັດທະນາຕົວເມືອງສະບັບໃໝ່ຮັບຮູ້ວ່າ ວັດທະນະທໍາ ແລະ ຄວາມຫຼາກຫຼາຍທາງວັດທະນາທໍາແມ່ນແຫຼ່ງຂໍ້ມູນທີ່ອຸດົມສົມບູນຂອງມວນມະນຸດ ແລະ ຕອບສະໜອງການປະກອບສ່ວນທີ່ສໍາຄັນຕໍ່ການພັດທະນາແບບຍືນຍົງຂອງຕົວເມືອງ, ການຕັ້ງຖິ່ນຖານຂອງມະນຸດ ແລະ ພົນລະເມືອງ, ສ້າງຄວາມເຂັ້ມແຂງໃຫ້ແກ່ເຂົາເຈົ້າກ່ຽວກັບບົດບາດການຈັດຕັ້ງປະຕິບັດບັນດາໂຄງການລິເລີ່ມດ້ານການພັດທະນາຢ່າງມີຄວາມກະຕືລືລົ້ນ ແລະ ມີຄວາມເປັນອັນໜຶ່ງດຽວກັນ. ວາລະການພັດທະນາຕົວເມືອງສະບັບໃໝ່ຍັງຮັບຮູ້ວ່າ ວັດທະນະທໍາຄວນຈະຖືກພິຈາລະນາເປັນຊ່ອງທາງໃນການສົ່ງເສີມ ແລະ ການຈັດຕັ້ງປະຕິບັດຮູບແບບ ການຜະລິດ ແລະ ການບໍລິໂພກ ແບບໃໝ່ທີ່ປະກອບສ່ວນໃຫ້ການນໍາໃຊ້ ຊັບພະຍາກອນຢ່າງມີຄວາມຮັບຜິດຊອບ  ແລະ ແກ້ໄຂຜົນກະທົບໃນທາງລົບຂອງການປ່ຽນແປງດິນຟ້າອາກາດ.

---

[3] See FCCC/CP/2015/10/Add.1, decision 1/CP.21, annex.
[4] Resolution 69/283, annex II.
[5] Resolution 69/137, annex II.
[6] Resolution 69/15, annex.
[7] Report of the Fourth United Nations Conference on the Least Developed Countries, Istanbul, Turkey, 9–13 May 2011 (A/CONF.219/7), chap. II.
[8] Report of the United Nations Conference on Environment and Development, Rio de Janeiro, 3 14 June 1992, vol. I, Resolutions Adopted by the Conference (United Nations publication, Sales No. E.93.I.8 and corrigendum), resolution 1, annex I.
[9] Report of the International Conference on Population and Development, Cairo, 5–13 September 1994 (United Nations publication, Sales No. E.95.XIII.18), chap. I, resolution 1, annex.
[10] Report of the Fourth World Conference on Women, Beijing, 4–15 September 1995 (United Nations publication, Sales No. E.96.IV.13), chap. I, resolution 1, annex II.

ວິໄສທັດ ຮ່ວມກັນຂອງພວກເຮົາ

11. ພວກເຮົາມີວິໄສທັດຮ່ວມກັນກ່ຽວກັບຕົວເມືອງສໍາລັບທຸກຄົນ ເຊິ່ງອ້າງອີງເຖິງການຊົມໃຊ້ ແລະ ຄວາມສຸກທີ່ເທົ່າທຽມກັນຢູ່ຕົວເມືອງ ແລະ ການຕັ້ງຖິ່ນຖານຂອງມະນຸດ, ຊອກຫາທີ່ນທາງສົ່ງເສີມຄວາມທົ່ວເຖິງ ແລະ ຮັບປະກັນວ່າຜູ້ອາໄສຢູ່ທັງໝົດໃນຍຸກປະຈຸບັນ ແລະ ອະນາຄົດ ທີ່ບໍ່ມີການແບ່ງແຍກໃດໆ, ພວກເຂົາສາມາດອາໄສຢູ່ ແລະ ສ້າງຕົວເມືອງ ແລະ ການຕັ້ງຖິ່ນຖານຂອງມະນຸດ ທີ່ທ່ຽງທໍາ, ປອດໄພ, ດີຕໍ່ສຸຂະພາບ, ເຂົ້າເຖິງງ່າຍ, ລາຄາບໍ່ແພງ, ໝັ້ນຄົງ ແລະ ຍືນຍົງ ເພື່ອປັບປຸງຄວາມຈະເລີນຮຸ່ງເຮືອງ ແລະ ຄຸນນະພາບຊີວິດຂອງທຸກຄົນ. ພວກເຮົາຮັບຮູ້ເຖິງຄວາມພະຍາຍາມຂອງລັດຖະບານລະດັບຊາດ ແລະ ລະດັບທ້ອງຖິ່ນທີ່ນັບຖືວິໄສທັດນີ້ ໂດຍອີງໃສ່ “”ສິດຕໍ່ກັບຕົວເມືອງ” ທີ່ຖືກກໍານົດໄວ້ໃນນິຕິກໍາ, ຖະແຫຼງການ ແລະ ກົດບັດທາງການເມືອງ.

12. ພວກເຮົາມີເປົ້າໝາຍທີ່ຈະບັນລຸການຕັ້ງຖິ່ນຖານຂອງມະນຸດ ແລະ ຕົວເມືອງ ບ່ອນທີ່ປະຊາຊົນທັງໝົດສາມາດມີຄວາມສຸກທີ່ໄດ້ຮັບໂອກາດ ແລະ ສິດສະເໝີພາບກັນ, ພ້ອມທັງເສລີພາບທີ່ເປັນພື້ນຖານຂອງເຂົາເຈົ້າ, ເຊິ່ງອີງໃສ່ຈຸດປະສົງ ແລະ ຫຼັກການຂອງກົດບັດ ສປຊ, ລວມມີການເຄົາລົບກົດໝາຍສາກົນຢ່າງເຕັມສ່ວນ. ໃນເລື່ອງນີ້, ວາລະການພັດທະນາຕົວເມືອງສະບັບໃໝ່ມີພື້ນຖານມາຈາກຖະແຫຼງສາກົນວ່າດ້ວຍສິດທິມະນຸດ,[11] ສົນທິສັນຍາກ່ຽວກັບສິດທິມະນຸດສາກົນ, ຖະແຫຼງການສະຫະສະວັດ[12] ແລະ ຜົນໄດ້ຮັບຂອງກອງປະຊຸມສຸດຍອດລະດັບໂລກ ປີ 2005.[13] ວາລະດັ່ງກ່າວກໍໄດ້ຖືກແຈ້ງໃນເອກະສານອື່ນໆ ເຊັ່ນ: ຖະແຫຼງວ່າດ້ວຍສິດຕໍ່ກັບການພັດທະນາ [14].

13. ພວກເຮົາພິຈາລະນາການຕັ້ງຖິ່ນຖານຂອງມະນຸດ ແລະ ຕົວເມືອງ ທີ່:

(a) ສາມາດປະຕິບັດໜ້າທີ່ທາງສັງຄົມໄດ້, ລວມມີບົດບາດຂອງດິນຕໍ່ນິເວດວິທະຍາ ແລະ ສັງຄົມ, ພ້ອມກັບການບັນລຸ ການຮັບຮູ້ສິດ ກ່ຽວກັບການມີທີ່ຢູ່ອາໄສທີ່ພຽງພໍ ເຊິ່ງເປັນອົງປະກອບໜຶ່ງ ຂອງສິດໃນມາດຕະຖານທີ່ພຽງພໍຂອງການດໍາລົງຊີວິດ, ບໍ່ມີການແບ່ງແຍກ, ເຂົ້າເຖິງນໍ້າທີ່ປອດໄພ ແລະ ລາຄາບໍ່ແພງ ແລະ ສຸຂະອານາໄມ, ພ້ອມກັນກັບການເຂົ້າເຖິງສິນຄ້າສາທາລະນະ ແລະ ການບໍລິການທີ່ມີຄຸນນະພາບໃນທຸກຂົງເຂດ ເຊັ່ນ: ການໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ, ສຸຂະພາບ, ການສຶກສາ, ພື້ນຖານໂຄ່ງລ່າງ, ການເດີນທາງ ແລະ ການຂົນສົ່ງ, ພະລັງງານ, ຄຸນນະພາບອາກາດ ແລະ ການດໍາລົງຊີວິດ.

(b) ມີການມີສ່ວນຮ່ວມ, ສົ່ງເສີມການມີສ່ວນຮ່ວມຂອງພົນລະເມືອງ, ກໍ່ໃຫ້ເກີດມີຄວາມຮູ້ສຶກຂອງຄວາມເປັນເຈົ້າຂອງ ແລະ ການເປັນເຈົ້າການໃນກຸ່ມຜູ້ທີ່ອາໄສຢູ່ທັງໝົດ, ໃຫ້ບູລິມະສິດສະຖານທີ່ສາທາລະນະທີ່ປອດໄພ, ມີສ່ວນຮ່ວມ, ເຂົ້າເຖິງໄດ້, ມີສີຂຽວ ແລະ ມີຄຸນນະພາບ ທີ່ເໝາະສໍາລັບຄອບຄົວ, ເພີ່ມທະວີການພົວພັນທາງສັງຄົມ ແລະ ລະຫວ່າງໄວອາຍຸ, ການສະແດງອອກທາງວັດທະນະທໍາ ແລະ ການມີສ່ວນຮ່ວມທາງການເມືອງຕາມຄວາມເໝາະສົມ ແລະ ສົ່ງເສີມຄວາມສາມັກຄີໃນສັງຄົມ, ມີສ່ວນຮ່ວມ ແລະ ຄວາມປອດໄພໃນສັງຄົມທີ່ຫຼາກຫຼາຍ ແລະ ສະຫງົບສຸກ, ພົນລະເມືອງທັງໝົດສົມຫວັງກັບຄວາມຕ້ອງການ, ຮັບຮູ້ຄວາມຕ້ອງການທີ່ພິເສດຂອງສິ່ງເຫຼົ່ານັ້ນໃນສະຖານະການທີ່ບໍ່ໝັ້ນຄົງ.

(c) ບັນລຸຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກຍິງທຸກຄົນ ໂດຍຈະຮັບປະກັນ ການມີສ່ວນຮ່ວມຢ່າງເຕັມສ່ວນ ແລະ ມີປະສິດທິພາບ ແລະ ສິດສະເໝີພາບກັນໃນທຸກຂົງເຂດ ແລະ ການນໍາພາການຕັດສິນໃຈໃນທຸກລະດັບ ໂດຍຈະຮັບປະກັນວຽກທີ່ມີຄຸນຄ່າ ແລະ ໄດ້ລາຍຮັບທີ່ເໝາະສົມກັບວຽກ ຫຼື ວຽກເໝາະສົມກັບລາຄາ ສໍາລັບຜູ້ຍິງທຸກຄົນ, ໂດຍຈະປ້ອງກັນ ແລະ ທໍາລາຍການແບ່ງແຍກທຸກຮູບແບບ, ຄວາມຮຸນແຮງ ແລະ ການທໍາຮ້າຍຕໍ່ກັບແມ່ຍິງ ແລະ ເດັກນ້ອຍໃນສະຖານທີ່ສາທາລະນະ ແລະ ສ່ວນບຸກຄົນ;

(d) ປະເຊີນໜ້າກັບສິ່ງທ້າທາຍ ແລະ ໂອກາດຂອງ ການຂະຫຍາຍຕົວທາງດ້ານເສດຖະກິດ ແບບຍືນຍົງ ແລະ ມີສ່ວນຮ່ວມ ໃນອະນາຄົດ ແລະ ປະຈຸບັນ, ຈະໃຫ້ອໍານາດໃນການປັບປ່ຽນໂຄງສ້າງຕົວເມືອງ, ຜົນຜະລິດສູງ, ກິດຈະກໍາເພີ່ມມູນຄ່າ ແລະ ຊັບພະຍາກອນທີ່ມີປະສິດທິພາບ, ຈະຄວບຄຸມ ເສດຖະກິດທ້ອງຖິ່ນ ແລະ ຮັບຮູ້ການປະກອບສ່ວນຂອງເສດຖະກິດນອກລະບົບ ໃນຂະນະທີ່ສະໜັບສະໜູນການປ່ຽນເປັນເສດຖະກິດ ໃນລະບົບແບບຍືນຍົງ;

[11] Resolution 217 A (III).
[12] Resolution 55/2.
[13] Resolution 60/1.
[14] Resolution 41/128, annex.

(e) ປະຕິບັດວຽກງານກ່ຽວກັບດິນແດນໂດຍການດຳເນີນງານ ແລະ ການຄຸ້ມຄອງທາງດ້ານຊາຍແດນທີ່ມີຄວາມດຸນດ່ຽງລະຫວ່າງສູນກາງກັບຜູ້ຂັບເຄື່ອນ, ການພັດທະນາດິນແດນ ແລະ ຕົວເມືອງແບບເຊື່ອມສານ ແລະ ຍືນຍົງໃນທຸກລະດັບ.

(f) ສະໜັບສະໜູນການລົງທຶນ ແລະ ວາງແຜນການຕອບສະໜອງທາງດ້ານບົດບາດຍິງ-ຊາຍ ແລະ ໄວອາຍຸແບບຍືນຍົງ, ການເດີນທາງທີ່ເຂົ້າເຖິງ ແລະ ປອດໄພຕໍ່ທຸກຄົນ, ລະບົບການຂົນສົ່ງທີ່ມີປະສິດທິພາບສຳລັບຜູ້ໂດຍສານ ແລະ ສິ່ງສິນຄ້າ, ຈະເຊື່ອມຕໍ່ແບບມີປະສິດທິພາບລະຫວ່າງຄົນ, ສະຖານທີ່, ສິນຄ້າ, ການບໍລິການ ແລະໂອກາດທາງເສດຖະກິດ;

(g) ຮັບຮອງ ແລະ ຈັດຕັ້ງປະຕິບັດການຄຸ້ມຄອງ ແລະ ການຫຼຸດຜ່ອນຄວາມສ່ຽງທາງໄພພິບັດ, ຫຼຸດຜ່ອນຄວາມບໍ່ໝັ້ນຄົງ, ສ້າງຄວາມທົນທານ ແລະ ຄວາມຮັບຜິດຊອບຕໍ່ທຳມະຊາດ ແລະ ອັນຕະລາຍຈາກສິ່ງທີ່ມະນຸດສ້າງຂຶ້ນ, ປັບປຸງການບັນເທົາ ແລະ ການປັບຕົວຕໍ່ ການປ່ຽນແປງດິນຟ້າອາກາດ;

(h) ປ້ອງກັນ, ຮັກສາ, ເກັບຮັກສາ ແລະ ສົ່ງເສີມລະບົບນິເວດ, ນ້ຳ, ທີ່ຢູ່ອາໄສໃນ ທຳມະຊາດ ແລະ ຊີວະນາໆພັນ, ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ປ່ຽນແປງຮູບແບບການຜະລິດ ແລະ ບໍລິໂພກແບບຍືນຍົງ.

ຫຼັກການ ແລະ ຄຳໝັ້ນສັນຍາຂອງພວກເຮົາ

14. ເພື່ອເຮັດໃຫ້ວິໄສທັດຂອງພວກເຮົາໄດ້ຮັບຄວາມສຳເລັດ, ພວກເຮົາໄດ້ ຮັບຮອງເອົາວາລະການພັດທະນາເມືອງສະບັບໃໝ່ທີ່ຖືກລະບຸໂດຍຫຼັກການທີ່ເຊື່ອມຕໍ່ກັບຫຼັກການຕ່າງໆ ດັ່ງລຸ່ມນີ້:

(a) ບໍ່ຖິ້ມໃຜຜູ້ໜຶ່ງໄວ້ຂ້າງຫຼັງ, ໂດຍການລຶບລ້າງຄວາມທຸກຍາກໃນທຸກຮູບແບບ ແລະ ທຸກມິຕິ, ລວມມີການລຶບລ້າງຄວາມທຸກຍາກຢ່າງຈິງຈັງ, ຈະຮັບປະກັນໂອກາດ ແລະ ສິດສະເໝີພາບ, ຄວາມຫຼາກຫຼາຍທາງເສດຖະກິດສັງຄົມ ແລະ ວັດທະນາທຳ, ແລະ ການເຊື່ອມສານໃນພື້ນທີ່ຂອງເມືອງ, ຈະເພີ່ມທະວີຄວາມສາມາດໃນການດຳລົງຊີວິດ, ການສຶກສາ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ, ສຸຂະພາບ ແລະ ການເປັນຢູ່ທີ່ດີ, ລວມທັງຈະລຶບລ້າງການລະບາດຂອງເຊື້ອໂລກເອດສ໌, ວັນນະໂລກ ແລະ ໄຂ້ມາລາເລຍ, ຈະສົ່ງເສີມຄວາມປອດໄພ ແລະ ກຳຈັດການແບ່ງແຍກ ແລະ ຄວາມຮຸນແຮງທຸກຮູບແບບ, ຈະຮັບປະກັນການມີສ່ວນຮ່ວມກັບສາທາລະນະ - ຈະຕອບສະໜອງການໄດ້ຮັບຄວາມສະເໝີພາບ ແລະ ຄວາມປອດໄພສຳລັບທຸກຄົນ, ຈະຕອບສະໜອງໃຫ້ທຸກຄົນໄດ້ຮັບຄວາມສະເໝີພາບທາງພື້ນຖານໂຄງລ່າງດ້ານສັງຄົມ ແລະ ທຳມະຊາດ ແລະ ພື້ນຖານການບໍລິການ ພ້ອມກັນກັບ ການມີທີ່ຢູ່ອາໄສແບບພໍພຽງ.

(b) ຮັບປະກັນເສດຖະກິດຂອງຕົວເມືອງແບບມີສ່ວນຮ່ວມ ແລະ ຍືນຍົງ ໂດຍການນຳໃຊ້ປະໂຫຍດຈາກການລວມຕົວກັນຂອງຕົວເມືອງທີ່ມີການວາງແຜນທີ່ດີ, ລວມມີອັດຕາການຜະລິດສູງ, ມີຄວາມສາມາດແຂ່ງຂັນກັບຜູ້ອື່ນ, ແລະ ນະວະຕະກຳໃໝ່, ຈະສົ່ງເສີມການຈ້າງງານໃນການຜະລິດເຕັມສ່ວນ ແລະ ວຽກທີ່ໝັ້ນຄົງສຳລັບທຸກຄົນ, ຈະຮັບປະກັນການສ້າງວຽກທີ່ມີໝັ້ນຄົງ ແລະ ເຂົ້າເຖິງທຸກຄົນຢ່າງສະເໝີພາບທາງດ້ານໂອກາດ, ຊັບພະຍາກອນການຜະລິດ ແລະ ເສດຖະກິດ, ຈະປ້ອງກັນການເກງກຳໄລໃນການຊື້-ຂາຍດິນ, ຈະສົ່ງເສີມການຮັກສາໃນການຄອບຄອງທີ່ດິນ ແລະ ຄຸ້ມຄອງການຫຼຸດລົງຂອງຕົວເມືອງຕາມຄວາມເໝາະສົມ.

(c) ຮັບປະກັນຄວາມຍືນຍົງທາງສິ່ງແວດລ້ອມໂດຍການສົ່ງເສີມການນຳໃຊ້ພະລັງງານທີ່ສະອາດ,ດິນ ແລະ ຊັບພະຍາກອນໃນການພັດທະນາຕົວເມືອງແບບຍືນຍົງ, ຈະຮັກສາລະບົບນິເວດ ແລະ ຊີວະນາໆພັນ, ລວມທັງການຮັບຮອງແບບແຜນການດຳລົງຊີວິດທີ່ດີທີ່ສອດຄ່ອງກັບທຳມະຊາດ, ຈະສົ່ງເສີມຮູບແບບການຜະລິດ ແລະ ບໍລິໂພກແບບຍືນຍົງ, ຈະກໍ່ສ້າງຄວາມທົນທານ/ຍືນຍົງຂອງເມືອງ, ຈະຫຼຸດຜ່ອນຄວາມສ່ຽງທາງໄພພິບັດ ແລະ ການປັບຕົວໃຫ້ເຂົ້າກັບການປ່ຽນແປງທາງສະພາບອາກາດ.

15. ພວກເຮົາມຸ່ງໝັ້ນທີ່ຈະສືບຕໍ່ເຮັດວຽກໃນການປ່ຽນແປງວາລະການພັດທະນາເມືອງສະບັບໃໝ່ຈະດຳເນີນການດັ່ງລຸ່ມນີ້:

(a) ການແກ້ໄຂຄືນແນວທາງທີ່ພວກເຮົາວາງແຜນ, ລົງທຶນ, ພັດທະນາ, ປົກຄອງ ແລະ ຈັດການຄຸ້ມຄອງການຕັ້ງຖິ່ນຖານຂອງມະນຸດ ແລະ ຕົວເມືອງ, ຈະຮັບຮູ້ການພັດທະນາດິນແດນ ແລະ ເມືອງແບບຍືນຍົງເຊິ່ງມີຄວາມສຳຄັນຕໍ່ການບັນລຸຜົນສຳເລັດຂອງການພັດທະນາແບບຍືນຍົງ ແລະ ຄວາມຈະເລີນຖາວອນຕໍ່ທຸກຄົນ.

(b) ຈະຮັບຮູ້ບົດບາດການນຳພາຂອງລັດຖະບານແຫ່ງຊາດ ຕາມຄວາມເໝາະສົມໃນການກຳນົດ ແລະ ຈັດຕັ້ງປະຕິບັດຂອງນະໂຍບາຍການພັດທະນາເມືອງຢ່າງມີປະສິດທິພາບ ແລະ ມີສ່ວນຮ່ວມ ແລະ ກົດໝາຍສຳລັບການພັດທະນາຕົວເມືອງແບບຍືນຍົງ, ການຊ່ວຍເຫຼືອທີ່ສຳຄັນຢ່າງສະເໝີພາບຂອງລັດຖະບານທ້ອງຖິ່ນ ແລະ ພາກ, ພ້ອມດຽວກັນກັບສັງຄົມສິງເຄາະ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນວິທີການທີ່ໂປ່ງໃສ ແລະ ຮັບຜິດຊອບ.

(c) ຮັບຮອງວິທີເຊື່ອມສານແບບຍືນຍົງ, ຖືເອົາປະຊາຊົນເປັນກາງ, ການຕອບສະໜອງດ້ານບົດບາດຍິງ-ຊາຍ ແລະ ໄວອາຍຸແບບມີສ່ວນຮ່ວມ ແລະ ການພັດທະນາດິນແດນ ແລະ ເມືອງໂດຍການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ການພັດທະນາຄວາມສາມາດ ແລະ ການດຳເນີນງານໃນທຸກລະດັບ, ອີງໃສ່ພື້ນຖານຜູ້ຂັບຂີ່ຂອງການປ່ຽນແປງ, ລວມທັງ:

(i) ຈະພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍການພັດທະນາເມືອງໃນລະດັບທີ່ເໝາະສົມ, ລວມທັງຄວາມສຳພັນຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງໃນລະດັບທ້ອງຖິ່ນ-ຊາດ, ຈະສ້າງລະບົບເຊື່ອມສານຂອງການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງ, ຈະສົ່ງເສີມການຮ່ວມມືລະຫວ່າງລັດຖະບານຂອງທຸກໆລະດັບໃຫ້ສາມາດໄດ້ຮັບຜົນສຳເລັດຂອງການເຊື່ອມສານໃນການພັດທະນາເມືອງແບບຍືນຍົງ;

(ii) ຈະເພີ່ມທະວີການປົກຄອງເມືອງຄຽງຄູ່ກັບສຽງຂອງກົນໄກ ແລະ ສະຖາບັນທີ່ກະຈາຍອຳນາດ ແລະ ມີສ່ວນຮ່ວມກັບພາກສ່ວນທີ່ກ່ຽວຂ້ອງກັບຕົວເມືອງ, ພ້ອມກັບການກວດກາ ແລະ ຄວາມດຸນດ່ຽງຢ່າງເໝາະສົມ, ຈະຕອບສະໜອງຄວາມສາມາດຄາດຄະເນ ແລະ ປະສານກັນໃນແຜນການພັດທະນາຕົວເມືອງທີ່ສາມາດມີສ່ວນຮ່ວມໃນສັງຄົມ, ຍືນຍົງ, ການຂະຫຍາຍຕົວທາງເສດຖະກິດແບບມີສ່ວນຮ່ວມ ແລະ ຍືນຍົງ ແລະ ການຮັກສາສິ່ງແວດລ້ອມ;

(iii) ການຟື້ນຟູໃນຄວາມເຂັ້ມແຂງ ການອອກແບບ ແລະ ການວາງແຜນການພັດທະນາດິນແດນ ແລະ ຕົວເມືອງແບບເຊື່ອມສານ ໃນໄລຍະຍາວ ແນໃສ່ເພີ່ມປະສິດທິພາບເດີນແດນໃນທຸກຮູບແບບ ແລະ ສິ່ງຜົນດີໃນການສ້າງເມືອງ.

(iv) ຈະສົ່ງເສີມເຄື່ອງມື ແລະ ຂອບວຽກງານດ້ານການເງິນແບບຍືນຍົງ, ມີປະສິດທິພາບ ແລະ ມີນະວະຕະກຳທີ່ສາມາດສ້າງຄວາມເຂັ້ມແຂງໃຫ້ລະບົບງົບປະມານໃນຂັ້ນທ້ອງຖິ່ນ ແລະ ການເງິນໃນເທດສະບານເພື່ອສ້າງ, ສະໜັບສະໜູນ, ແລະ ມີສ່ວນຮ່ວມໃຫ້ເກີດມູນຄ່າໂດຍການພັດທະນາເມືອງໃນແບບມີສ່ວນຮ່ວມ.

ຮຽກຮ້ອງໃຫ້ມີການດຳເນີນງານ

16. ໃນຂະນະທີ່ສະພາບການສະເພາະຂອງເມືອງໃນທຸກໆຂະໜາດ, ບັນດາໝູ່ບ້ານ ແລະ ເມືອງ, ພວກເຮົາຢືນຢັນວ່າວາລະການພັດທະນາຕົວເມືອງສະບັບໃໝ່ແມ່ນມີຄວາມເປັນສາກົນໃນດ້ານຂອບເຂດ, ການມີສ່ວນຮ່ວມ, ແລະ ມີປະຊາຊົນເປັນຈຸດໃຈກາງ, ຮັກສາໂລກ ແລະ ມີວິໄສທັດໃນໄລຍະຍາວ, ການດຳເນີນງານ ແລະ ໃຫ້ບູລິມະສິດໃນລະດັບໂລກ, ພາກພື້ນ, ປະເທດ, ພາກ, ຂົງເຂດ ແມ່ນລັດຖະບານ ແລະ ພາກສ່ວນອື່ນທີ່ມີສ່ວນກ່ຽວຂ້ອງໃນແຕ່ລະປະເທດ ສາມາດຮັບຮອງເອົາອີງໃສ່ຄວາມຈຳເປັນຂອງເຂົາເຈົ້າ.

17. ພວກເຮົາຈະເຮັດວຽກໃນວາລະການພັດທະນາເມືອງສະບັບໃໝ່ໃນປະເທດຂອງພວກເຮົາເອງ ແລະ ໃນລະດັບພາກພື້ນ ແລະ ໂລກ, ຈະມີການຄຳນຶງເຖິງຄວາມຈິງທີ່ແຕກຕ່າງຂອງແຕ່ລະປະເທດ, ລະດັບ ແລະ ຄວາມສາມາດຂອງການພັດທະນາ, ແລະ ຈະເຄົາລົບ ແລະ ປະຕິບັດຕາມກົດໝາຍແຫ່ງຊາດ ຄຽງຄູ່ກັບບູລິມະສິດ ແລະ ນະໂຍບາຍ.

18. ພວກເຮົາຢືນຢັນອີກຄັ້ງກ່ຽວກັບຫຼັກການທັງໝົດຂອງຖະແຫຼງການ Rio ກ່ຽວກັບການພັດທະນາ ແລະ ສິ່ງແວດລ້ອມ ເຊັ່ນ: ຫຼັກການທົ່ວໄປ ແຕ່ມີຄວາມແຕກຕ່າງທາງໜ້າທີ່ຮັບຜິດຊອບ ເຊິ່ງຖືກລະບຸໃນຫຼັກການທີ່ 7.

19. ພວກເຮົາຮັບຮູ້ວ່າໃນການຈັດຕັ້ງປະຕິບັດວາລະການພັດທະນາເມືອງສະບັບໃໝ່ ສິ່ງທີ່ຕ້ອງໃສ່ໃຈສຳຄັນ ຄວນຈະໄດ້ຮັບການແກ້ໄຂທີ່ເປັນໜຶ່ງດຽວ ແລະ ມີຕົວຕົນ/ປະກົດອອກມາໃນສິ່ງທ້າທາຍຂອງການພັດທະນາເມືອງກຳລັງພະເຊີນໃນທຸກໆປະເທດ, ໂດຍສະເພາະແມ່ນ ບັນດາປະເທດກຳລັງພັດທະນາ ລວມມີ ປະເທດ Africa , ປະເທດດ້ອຍພັດທະນາ, ປະເທດກຳລັງພັດທະນາທີ່ບໍ່ມີຊາຍແດນຕິດກັບທະເລ ແລະ ລັດກຳລັງພັດທະນາໃນໝູ່ເກາະນ້ອຍໆ, ພ້ອມກັນນີ້ສິ່ງທ້າທາຍສະເພາະທີ່ກຳລັງພະເຊີນໃນບັນດາປະເທດທີ່ມີລາຍຮັບໃນລະດັບປານກາງ. ຄວາມມຸ່ງໝັ້ນທີ່ພິເສດຄວນຈະຖືກສົ່ງໃຫ້ປະເທດໃນສະຖານະການທີ່ມີຄວາມຂັດແຍ່ງ, ປະເທດ ແລະ ດິນແດນພາຍໃນການປົກຄອງຂອງຕ່າງຊາດ/ປະເທດ, ປະເທດທີ່ມີການຕໍ່ສູ້ ແລະ ປະເທດທີ່ໄດ້ຮັບຜົນກະທົບຈາກໄພພິບັດທີ່ມະນຸດສ້າງຂຶ້ນ ແລະ ທຳມະຊາດ.

20. ພວກເຮົາຮັບຮູ້ເຖິງຄວາມຈຳເປັນທີ່ໃຫ້ຄວາມເອົາໃຈໃສ່ທີ່ສຳຄັນເພື່ອຈະແກ້ໄຂຫຼາຍຮູບແບບຂອງການແບ່ງແຍກທີ່ຖືກພະເຊີນໜ້າຢູ່ ເຊັ່ນ: ແມ່ຍິງ ແລະ ເດັກຍິງ, ເດັກນ້ອຍ ແລະ ໄວໜຸ່ມ, ຄົນພິການ, ປະຊາຊົນທີ່ຕິດເຊື້ອໂລກເອດສ໌, ຄົນສູງອາຍຸ, ຄົນພື້ນເມືອງ ແລະ ຊຸມຊົນໃນທ້ອງຖິ່ນ, ຜູ້ທີ່ອາໄສຢູ່ໃນພື້ນທີ່ແອອັດ ແລະ ບໍ່ຖືກຕາມຫຼັກການ/ນອກລະບົບ, ຄົນຂາດທີ່ຢູ່ອາໄສ, ກຳມະກອນ, ຊາວນາທີ່ຂາດແຄນດິນນາ ແລະ ຊາວປະມົງ, ຜູ້ລີ້ໄພ, ຜູ້ກັບຖິ່ນຖານ, ຄົນຂາດທີ່ຢູ່ອາໄສພາຍໃນ ແລະ ຜູ້ອົບພະຍົກ ໂດຍທີ່ບໍ່ຄຳນຶງເຖິງສະພາບການຍ້າຍຖິ່ນຖານຂອງເຂົາເຈົ້າ.

21. ພວກເຮົາຊຸກຍູ້ລັດຖະບານຂອງທຸກໆຊາດ, ພາກພື້ນ ແລະ ທ້ອງຖິ່ນ, ແລະ ພາກສ່ວນທັງໝົດທີ່ກ່ຽວຂ້ອງໃຫ້ສອດຄ່ອງກັບກົດໝາຍ ແລະ ນະໂຍບາຍແຫ່ງຊາດໃຫ້ຟື້ນຟູ (ສະພາບການດຳລົງຊີວິດ), ສ້າງຄວາມເຂັ້ມແຂງ ແລະ ສ້າງຄວາມສຳພັນ, ຈະເພີ່ມທະວີການຮ່ວມມື ແລະ ການປະສານໃນການຈັດຕັ້ງປະຕິບັດຕາມວາລະການພັດທະນາຕົວເມືອງສະບັບໃໝ່ຢ່າງມີປະສິດທິພາບ ແລະ ຮັບຮູ້ວິໄສທັດແບບມີສ່ວນຮ່ວມຂອງພວກເຮົາ.

22. ພວກເຮົາຮັບຮອງເອົາວາລະການພັດທະນາຕົວເມືອງສະບັບໃໝ່ນີ້ຕາມວິໄສທັດຮ່ວມກັນ/ແບບລວມກຸ່ມ ແລະ ຄຳໝັ້ນສັນຍາທາງການເມືອງ ເພື່ອສົ່ງເສີມ ແລະ ເຂົ້າໃຈການພັດທະນາເມືອງແບບຍືນຍົງ, ແລະ ເປັນໂອກາດທີ່ສຳຄັນທາງປະຫວັດສາດທີ່ສະແດງບົດບາດທີ່ສຳຄັນຂອງຕົວເມືອງ ແລະ ການຕັ້ງຖິ່ນຖານຂອງມະນຸດ ໃນການເປັນຜູ້ກະຕຸ້ນການພັດທະນາແບບຍືນຍົງຕໍ່ການສ້າງເມືອງໃນໂລກເພີ່ມຂຶ້ນເລື້ອຍໆ.

ແຜນການຈັດຕັ້ງປະຕິບັດ Quito ສຳລັບວາລະການພັດທະນາຕົວເມືອງສະບັບໃໝ່

23. ພວກເຮົາແກ້ໄຂຄືນເພື່ອຈັດຕັ້ງປະຕິບັດວາລະການພັດທະນາຕົວເມືອງສະບັບໃໝ່ເປັນເຄື່ອງມືທີ່ສຳຄັນສຳລັບການເຮັດໃຫ້ລັດຖະບານແຫ່ງຊາດ, ພາກ ແລະ ທ້ອງຖິ່ນ ແລະ ພາກສ່ວນທີ່ມີສ່ວນກ່ຽວຂ້ອງທັງໝົດປະສົບຜົນສຳເລັດໃນການພັດທະນາຕົວເມືອງແບບຍືນຍົງ.

ຄຳໝັ້ນສັນຍາທີ່ປະກົດຜົນເປັນຈິງເພື່ອການພັດທະນາຕົວເມືອງແບບຍືນຍົງ

24. ນຳໃຊ້ອຳນາດຢ່າງເຕັມສ່ວນໃນການພັດທະນາເມືອງແບບຍືນຍົງ, ພວກເຮົາເຮັດຕາມຄຳໝັ້ນສັນຍາທີ່ປະກົດຜົນເປັນຈິງຜ່ານການປ່ຽນແປງຕົວເມືອງທີ່ຖືກລະບຸໃນຂະໜາດແບບເຊື່ອມສານ ແລະ ເປັນອັນໜຶ່ງອັນດຽວຂອງການພັດທະນາແບບຍືນຍົງ ເຊັ່ນ: ສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ.

ການພັດທະນາເມືອງແບບຍືນຍົງເພື່ອການລຶບລ້າງຄວາມທຸກຍາກ ແລະ ການມີສ່ວນຮ່ວມຢູ່ໃນສັງຄົມ

25. ພວກເຮົາຮັບຮູ້ວ່າການລຶບລ້າງບັນຫາຄວາມທຸກຍາກໃນທຸກໆຂະໜາດ ແລະ ຮູບແບບ, ລວມທັງຄວາມທຸກຍາກຮຸນແຮງ ແມ່ນສິ່ງທ້າທາຍຫຼາຍທີ່ສຸດໃນທົ່ວໂລກ ແລະ ເປັນຄວາມຕ້ອງການທີ່ຈຳເປັນຫຼາຍສຳລັບການພັດທະນາແບບຍືນຍົງ. ພວກເຮົາຍັງຮັບຮູ້ວ່າການເພີ່ມຂຶ້ນຂອງຄວາມບໍ່ສະເໝີພາບ ແລະ ການຄົງຢູ່ທີ່ມີຄວາມຫຼາກຫຼາຍ ຂອງຄວາມທຸກຍາກ, ເຊິ່ງກວມເອົາຈຳນວນທີ່ກຳລັງເພີ່ມຂຶ້ນຂອງພື້ນທີ່ແອອັດ ແລະ ຜູ້ອາໄສຢູ່ບ່ອນທີ່ບໍ່ຖືກຕ້ອງຕາມຫຼັກການຕັ້ງຖິ່ນຖານ ( ນອກລະບົບ), ແມ່ນຈະສົ່ງຜົນຕໍ່ທັງບັນດາປະເທດທີ່ກຳລັງພັດທະນາ ແລະ ພັດທະນາແລ້ວ, ເຊິ່ງອີງການຈັດຕັ້ງກ່ຽວກັບດິນແດນ, ມີຄວາມສາມາດເຂົ້າເຖິງ ແລະ ອອກແບບຂອງພື້ນທີ່ຂອງເມືອງ, ພ້ອມກັນນີ້ ການຈັດກຽມພື້ນຖານການບໍລິການ ແລະ ພື້ນຖານໂຄງລ່າງໄປພ້ອມກັບນະໂຍບາຍການພັດທະນາ ສາມາດສົ່ງເສີມ ຫຼື ຂັດຂວາງຄວາມສາມັກຄີ, ຄວາມສະເໝີພາບ, ແລະ ການມີສ່ວນຮ່ວມໃນສັງຄົມ

26. ພວກເຮົາມຸ່ງໝັ້ນໃນການພັດທະນາຊົນນະບົດ ແລະ ຕົວເມືອງ ທີ່ຖືເອົາປະຊາຊົນເປັນກາງ, ຮັກສາໂລກ, ການຕອບສະໜອງດ້ານບົດບາດຍິງ-ຊາຍ ແລະ ໄວອາຍຸ, ມີຄວາມເຂົ້າໃຈຕໍ່ສິດທິມະນຸດ ແລະ ອິດສະຫຼະພາບທີ່ເປັນພື້ນຖານຂອງທຸກຄົນ, ຈະອຳນວຍຄວາມສະດວກໃນການດຳລົງຊີວິດຮ່ວມກັນ, ຈະກຳຈັດ ການແບ່ງແຍກ ແລະ ຄວາມຮຸນແຮງທຸກຮູບແບບ, ຈະຂະຫຍາຍອຳນາດໃຫ້ແກ່ຊຸມຊົນ ແລະ ສ່ວນບຸກຄົນ ໃນຂະນະດຽວກັນ ຈະໃຫ້ການມີສ່ວນຮ່ວມທີ່ມີຄວາມສຳຄັນ ແລະ ເຕັມທີ່. ຍິ່ງໄປກວ່ານັ້ນ ພວກເຮົາມຸ່ງໝັ້ນຈະສົ່ງເສີມວັດທະນາທຳ ແລະ ການເຄົາລົບຄວາມສະເໝີພາບ ແລະ ການມີຫຼາຍຮູບແບບທີ່ເປັນອົງປະກອບທີ່ສຳຄັນໃນການເປັນມະນຸດ ແລະ ການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງ.

27. ພວກເຮົາຢືນຢັນ ໃນຄຳໝັ້ນສັນຍາຂອງພວກເຮົາເຊິ່ງບໍ່ມີໃຜຜູ້ໜຶ່ງຈະຖືກປະລະ ແລະ ພວກເຮົາຍັງມຸ່ງໝັ້ນທີ່ຈະສົ່ງເສີມໂອກາດທີ່ມີສ່ວນຮ່ວມຢ່າງສະເໝີພາບ ແລະ ເປັນປະໂຫຍດ ເຊິ່ງເມືອງສາມາດສະໜອງ ແລະ ສາມາດໃຫ້ຜູ້ອາໄສຢູ່ທັງໝົດ, ບໍ່ວ່າຈະດຳລົງຊີວິດໃນການຕັ້ງຖິ່ນຖານໃນລະບົບ ຫຼື ນອກລະບົບກໍຕາມ ຈະນຳໄປສູ່ຊີວິດທີ່ມີຄວາມໝັ້ນຄົງ, ເໝາະສົມ ແລະ ໜ້າຍົກຍ້ອງ, ໄດ້ຮັບຄວາມເປັນມະນຸດຢ່າງເຕັມສ່ວນ.

28. ພວກເຮົາມຸ່ງໝັ້ນທີ່ຈະຮັບປະກັນການເຄົາລົບສິດທິມະນຸດຂອງຜູ້ລີ້ໄພ, ຄົນຂາດທີ່ຢູ່ອາໄສພາຍໃນ ແລະ ຜູ້ອົບພະຍົກໂດຍທີ່ບໍ່ຄຳນຶງເຖິງສະພາບການ ອົບພະຍົກຂອງເຂົາເຈົ້າ, ສົ່ງເສີມເມືອງທີ່ມີຄວາມມຸ່ງໝັ້ນໃນການຮ່ວມມືສາກົນ, ຈະຄຳນຶງເຖິງສະພາບການຂອງປະເທດ ແລະ ຈະຮັບຮູ້ວ່າເຖິງມີການຍົກຍ້າຍຂອງປະຊາກອນຈຳນວນຫຼາຍເຂົ້າໃນຕົວເມືອງ ເຮັດໃຫ້ເມືອງເກີດບັນຫາມີສິ່ງທີ່ທ້າທາຍຫຼາຍຮູບແບບ, ມັນຍັງມີຄວາມໝາຍສຳຄັນຕໍ່ການຊ່ວຍເຫຼືອທາງສັງຄົມ, ເສດຖະກິດ, ແລະ ວັດທະນາທຳຕໍ່ຊີວິດໃນເມືອງ. ຍິ່ງໄປກວ່ານັ້ນ ພວກເຮົາຍັງມຸ່ງໝັ້ນທີ່ຈະສ້າງຄວາມເຂັ້ມແຂງທີ່ຈະເກີດຈາກການປະສານງານກັນລະຫວ່າງການອົບພະຍົກສາກົນ ແລະ ການພັດທະນາໃນລະດັບໂລກ, ພາກພື້ນ, ປະເທດ, ພາກ ແລະ ລະດັບທ້ອງຖິ່ນ, ຈະຮັບປະກັນການອົບພະຍົກທີ່ປອດໄພ, ຕາມຂັ້ນຕອນ ແລະ ຖືກຕ້ອງ, ຜ່ານນະໂຍບາຍການອົບພະຍົກທີ່ວາງແຜນ ແລະ ຈັດການເປັນຢ່າງດີ, ຈະສົ່ງເສີມອຳນາດການປົກຄອງຂັ້ນທ້ອງຖິ່ນໃນການສ້າງຕັ້ງຂອບວຽກງານທີ່ເຮັດໃຫ້ການຊ່ວຍເຫຼືອມີຜົນດີຕໍ່ການອົບພະຍົກໄປຢູ່ເມືອງ ແລະ ສ້າງຄວາມເຂັ້ມແຂງໃນການເຊື່ອມຕໍ່ຂອງຊົນນະບົດຫາເມືອງ.

29. ພວກເຮົາມຸ່ງໝັ້ນໃນການສ້າງຄວາມເຂັ້ມແຂງໃນບົດບາດການປະສານຂອງລັດຖະບານທ້ອງຖິ່ນ,ພາກ, ແລະ ປະເທດຕາມຄວາມເໝາະສົມ, ແລະ ການຮ່ວມມືຂອງເຂົາເຈົ້າກັບໜ່ວຍງານສາທາລະນະອື່ນໆ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານໃນການຈັດກຽມຂອງສັງຄົມ ແລະ ພື້ນຖານການບໍລິການເພື່ອໝົດທຸກຄົນ, ລວມທັງການລົງທຶນການຜະລິດໃນຊຸມຊົນທີ່ບໍ່ໝັ້ນຄົງທີ່ສຸດຕໍ່ໄພພິບັດ ແລະ ຜົນກະທົບເຫຼົ່ານັ້ນຈະຖືກເຮັດໃຫ້ເກີດຂຶ້ນອີກ ແລະ ຂະຫຍາຍອອກເປັນວິກິດການຕໍ່ມະນຸດຊາດ. ພວກເຮົາຍັງມຸ່ງໝັ້ນທີ່ຈະສົ່ງເສີມການບໍລິການທີ່ພໍພຽງ, ທີ່ພັກອາໄສ ແລະ ໂອກາດສຳລັບວຽກທີ່ເຮັດການຜະລິດ ແລະ ໝັ້ນຄົງໃຫ້ແກ່ຜູ້ທີ່ຖືກວິກິດການກະທົບໃນການກໍ່ຕັ້ງເມືອງ, ຈະເຮັດວຽກກັບຊຸມຊົນ ແລະ ລັດຖະບານໃນທ້ອງຖິ່ນເພື່ອຊອກຫາໂອກາດໃນການພົວພັນ ແລະ ການພັດທະນາການທ້ອງຖິ່ນ, ທຶນທານ, ແລະ ການແກ້ໄຂບັນຫາສະຫງ່າຜ່າເຜີຍ ໃນຂະນະດຽວກັນ ຈະຮັບປະກັນວ່າຄວາມຊ່ວຍເຫຼືອກໍ່ຍັງສົ່ງຜົນກະທົບຕໍ່ຄົນ ແລະ ຊຸມຊົນທີ່ມີຄວາມມຸ່ງໝັ້ນເພື່ອປ້ອງກັນການເຊື່ອມຖອຍໃນການພັດທະນາຂອງເຂົາ.

30. ພວກເຮົາຮັບຮູ້ເຖິງຄວາມຈຳເປັນຂອງລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມໃຫ້ສືບຕໍ່ສະໜັບສະໜູນການບໍລິການຕົວເມືອງໃຫ້ມີຄວາມໝັ້ນຄົງທົນທານໃນເວລາມີການປະທະທາງອາວຸດ. ພວກເຮົາຍັງຮັບຮູ້ເຖິງຄວາມຈຳເປັນທີ່ຢືນຢັນຄືນຕໍ່ການເຄົາລົບກົດໝາຍມະນຸດສະທຳສາກົນ.

31. ພວກເຮົາມຸ່ງໝັ້ນທີ່ຈະສົ່ງເສີມນະໂຍບາຍທີ່ພັກອາໄສໃນລະດັບຊາດ, ພາກ, ແລະ ຊຸມຊົນ, ທີ່ສະໜັບສະໜູນຄວາມຮັບຮູ້ໄປຕາມຂັ້ນຕອນຂອງສິດຕໍ່ທີ່ພັກອາໄສໃຫ້ພຽງພໍສຳລັບທຸກຄົນແມ່ນອົງປະກອບໜຶ່ງຂອງສິດໃນມາດຕະຖານການດຳລົງຊີວິດທີ່ພຽງພໍ, ເຊິ່ງແກ້ໄຂທຸກຮູບແບບຂອງການແບ່ງແຍກ ແລະ ຄວາມຮຸນແຮງ ແລະ ປ້ອງກັນການບີບບັງຄັບໄລ່ອອກແບບບໍ່ມີເຫດຜົນ, ເນັ້ນໃສ່ຄວາມຈຳເປັນຂອງການຂາດທີ່ພັກອາໄສ, ຄົນທີ່ຕົກຢູ່ໃນສະພາບການທີ່ບໍ່ໝັ້ນຄົງ, ກຸ່ມຄົນທີ່ມີລາຍໄດ້ຕ່ຳ ແລະ ຄົນພິການ, ໃນຂະນະດຽວກັນການມີສ່ວນຮ່ວມ ແລະ ການເຮັດສັນຍາຂອງຊຸມຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງໃນເຮັດໃຫ້ມີການວາງແຜນ ແລະ ການຈັດຕັ້ງປະຕິບັດຂອງນະໂຍບາຍເຫຼົ່ານີ້, ລວມທັງການສະໜັບສະໜູນໃນການຜະລິດຂອງສັງຄົມຂອງທີ່ພັກອາໄສ, ອີງຕາມມາດຕະຖານ ແລະ ກົດໝາຍສາກົນ.

32. ພວກເຮົາມຸ່ງໝັ້ນທີ່ຈະສົ່ງເສີມການພັດທະນານະໂຍບາຍຂອງທີ່ພັກອາໄສໃນການເຊື່ອມສານການຕອບສະໜອງບົດບາດຍິງ-ຊາຍ ແລະ ໄວອາຍຸເພດ ແລະ ຫຼັກການທົ່ວທຸກພາກສ່ວນ, ໂດຍສະເພາະແມ່ນ ການຈ້າງງານ, ການສຶກສາ, ສາທາລະນະສຸກ ແລະ ພາກສ່ວນເຊື່ອມສານທາງສັງຄົມ ໃນທຸກໆລະດັບຂອງລັດຖະບານ - ຫຼັກການ ແລະ ນະໂຍບາຍທີ່ເອົາເຂົ້າຮ່ວມກັນເພື່ອການຈັດຕຽມທີ່ພັກອາໄສທີ່ພຽງພໍ, ສາມາດຫາໄດ້, ສາມາດເຂົ້າເຖິງ, ຊັບພະຍາກອນທີ່ມີປະສິດທິພາບ, ປອດໄພ, ທົນທານ, ເຊື່ອມຕໍ່ ແລະ ຕັ້ງຢູ່ພື້ນທີ່ເໝາະສົມ, ກັບຄວາມຕັ້ງໃຈພິເສດຕໍ່ປັດໃຈໃກ້ຄຽງ ແລະ ຈະສ້າງຄວາມເຂັ້ມແຂງຂອງຄວາມສຳພັນທາງດ້ານດິນແດນກັບໂຄງສ້າງເມືອງທີ່ຍັງເຫຼືອ ແລະ ພື້ນທີ່ວຽກງານໃນອ້ອມແອ້ມ.

33. ພວກເຮົາຈະກະຕຸ້ນການສະໜອງທີ່ຫຼາກຫຼາຍໃນທາງເລືອກດ້ານທີ່ພັກອາໄສໃຫ້ພຽງພໍ ເຊັ່ນ: ຄວາມປອດໄພ, ສາມາດຫາໄດ້ ແລະ ເຂົ້າເຖິງຂອງກຸ່ມຄົນໃນສັງຄົມທີ່ມີຄວາມແຕກຕ່າງກັນທາງດ້ານລາຍຮັບ, ຈະຄຳນຶງເຖິງການເຊື່ອມສານທາງດ້ານວັດທະນາທຳ ແລະ ເສດຖະກິດສັງຄົມຂອງຂອບເຂດຊຸມຊົນ, ຄົນຂາດທີ່ພັກອາໄສເຊິ່ງສິ່ງເຫຼົ່ານັ້ນຢູ່ໃນສະພາບທີ່ບໍ່ມີຄວາມໝັ້ນຄົງ ແລະ ຈະປ້ອງກັນການແບ່ງແຍກ. ພວກເຮົາຈະໃຊ້ມາດຕະການທີ່ເໝາະສົມເພື່ອປັບປຸງເງື່ອນໄຂການດຳລົງຊີວິດຂອງປະຊາຊົນທີ່ຂາດທີ່ພັກອາໄສ, ຄຽງຄູ່ກັບທັດສະນະທີ່ຈະອຳນວຍຄວາມສະດວກຂອງການມີສ່ວນຮ່ວມໃນສັງຄົມແບບເຕັມສ່ວນ, ກໍ່ຈະປ້ອງກັນ ແລະ ກຳຈັດການຂາດທີ່ພັກອາໄສ, ພ້ອມກັບການຕອບໂຕ້ ແລະ ກຳຈັດການກໍ່ອາດຊະຍາກຳ.

34. ພວກເຮົາມຸ່ງໝັ້ນທີ່ຈະສົ່ງເສີມການເຂົ້າເຖິງພື້ນທາງໂຄງລ່າງທາງສັງຄົມ ແລະ ພື້ນຖານທຳມະຊາດແບບຍືນຍົງສຳລັບທຸກຄົນໄດ້ ແລະ ຍຸດຕິທຳ, ບໍ່ມີການແບ່ງແຍກ, ລວມທັງ ສາມາດຄອບຄອງນຳໃຊ້ດິນ,ທີ່ພັກອາໄສ, ພະລັງງານທີ່ສາມາດຟື້ນຟູ ແລະ ທັນສະໄໝ, ນ້ຳດື່ມ ແລະ ສຸຂາອານາໄມທີ່ສະອາດ, ຄວາມປອດໄພ, ໂພຊະນາການ ແລະ ອາຫານທີ່ພຽງພໍ, ການກຳຈັດສິ່ງເສດເຫຼືອ, ການຍົກຍ້າຍແບບຍືນຍົງ, ສາທາລະນະສຸກ ແລະ ການວາງແຜນຄອບຄົວ, ການສຶກສາ, ວັດທະນາທຳ, ເຕັກໂນໂລຢີຂໍ້ມູນຂ່າວສານ ແລະ ການສື່ສານ. ພວກເຮົາຍັງສືບຕໍ່ມຸ່ງໝັ້ນທີ່ຈະຮັບປະກັນວ່າການບໍລິການເຫຼົ່ານີ້ແມ່ນສອດຄ່ອງກັບສິດ ແລະ ຄວາມຈຳເປັນຂອງແມ່ຍິງ, ເດັກນ້ອຍ ແລະ ຊາວໜຸ່ມ, ຄົນສູງອາຍຸ ແລະ ຄົນພິການ, ຜູ້ອົບພະຍົກ, ຄົນພື້ນເມືອງ ແລະ ຊຸມຊົນໃນທ້ອງຖິ່ນ ຕາມຄວາມເໝາະສົມ ແລະ ກຸ່ມຄົນອື່ນໆໃນສະພາບທີ່ບໍ່ໝັ້ນຄົງ . ໃນເລື່ອງນີ້, ພວກເຮົາສະໜັບສະໜູນການກຳຈັດອຸປະສັກຕໍ່ກົດໝາຍ, ສະຖາບັນ, ເສດຖະກິດສັງຄົມ ແລະ ຮ່າງກາຍ.

35. ພວກເຮົາມຸ່ງໝັ້ນທີ່ຈະສົ່ງເສີມລັດຖະບານຕາມລະດັບທີ່ມີຄວາມເໝາະສົມ, ລວມທັງໃນຂັ້ນທ້ອງຖິ່ນ ແລະ ພາກ, ເພີ່ມສະຕິຮັກສາຄວາມປອດໄພໃນການຄອບຄອງດິນສຳລັບທຸກຄົນ, ຈະຮັບຮູ້ຄວາມຫຼາກຫຼາຍປະເພດຂອງການຄອບຄອງ, ຈະພັດທະນາການແກ້ໄຂບັນຫາຕໍ່ການຕອບສະໜອງດ້ານສິ່ງແວດລ້ອມ, ບົດບາດຍິງ-ຊາຍ, ແລະ ໄວອາຍຸ ແລະ ຕາມເປົ້າໝາຍທີ່ເໝາະສົມພາຍໃນຂອບເຂດທີ່ຕໍ່ເນື່ອງຂອງດິນ ແລະ ສິດທາງຊັບສິນ, ກັບຄວາມເອົາໃຈໃສ່ສະເພາະຄວາມປອດໄພຂອງການຄອບຄອງດິນສຳລັບແມ່ຍິງແມ່ນມີຄວາມສຳຄັນໃນການກະຈາຍອຳນາດໃຫ້ແກ່ເຂົາເຈົ້າ, ລວມທັງຜ່ານລະບົບການຄຸ້ມຄອງທີ່ມີປະສິດທິພາບ.

36. ພວກເຮົາມຸ່ງໝັ້ນຈະສົ່ງເສີມມາດຕະການທີ່ເໝາະສົມໃນການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງ ເຊິ່ງອຳນວຍຄວາມສະດວກໃຫ້ແກ່ຄົນພິການໃນການໄດ້ຮັບພື້ນຖານຄວາມສະເໝີພາບຄືກັບຜູ້ອື່ນ, ສິ່ງແວດລ້ອມທາງກາຍະພາບຂອງເມືອງ, ໂດຍສະເພາະສະຖານທີ່ສາທາລະນະ, ການຂົນສົ່ງສາທາລະນະ,ທີ່ພັກອາໄສ, ການສຶກສາ ແລະ ສິ່ງອຳນວຍຄວາມສະດວກແກ່ສຸຂະພາບ, ການສື່ສານ ແລະ ຂໍ້ມູນຂ່າວສານສາທາລະນະ (ລວມທັງເທັກໂນໂລຍີ ແລະ ລະບົບຂອງການສື່ສານ ແລະ ຂໍ້ມູນຂ່າວສານ) ແລະ ສິ່ງອຳນວຍຄວາມສະດວກ ແລະ ການບໍລິການອື່ນໆທີ່ເປີດ ຫຼື ຈັດກຽມໃຫ້ສາທາລະນະ/ປະຊາຊົນທັງໃນພື້ນທີ່ຊົນນະບົດ ແລະ ຕົວເມືອງ.

37. ພວກເຮົາມຸ່ງໝັ້ນຈະສົ່ງເສີມສະຖານທີ່ສາທາລະນະທີ່ມີຄຸນນະພາບ, ປອດໄພ, ມີສ່ວນຮ່ວມ, ສາມາດເຂົ້າເຖິງ, ສີຂຽວ, ລວມທັງ ຕົ້ນໄມ້, ທາງຍ່າງ, ຊ່ອງທາງຂີ່ລົດ, ເດີ່ນທີ່ກວ້າງ, ໃນພື້ນທີ່ແຄມນ້ຳ, ສວນ ແລະ ສວນສາທາລະນະ, ເຊິ່ງເປັນພື້ນທີ່ສາມາດເຮັດກິດຈະກຳທີ່ຫຼາກຫາຍສຳລັບການມີສ່ວນຮ່ວມ ແລະ ພົວພັນກັນໃນສັງຄົມ, ສຸຂະພາບ ແລະ ສະຫວັດດີການຂອງມະນຸດ , ການແລກປ່ຽນທາງເສດຖະກິດ ແລະ ສະແດງອອກທາງວັດທະນາທຳ ແລະ ການສົນທະນາລະຫວ່າງກຸ່ມຄົນ ແລະ ວັດທະນາທຳທີ່ຫຼາກຫຼາຍກ້ວາງຂວາງ, ທີ່ຖືກອອກແບບ ແລະ ຄຸ້ມຄອງທີ່ຮັບປະກັນການພັດທະນາມະນຸດ, ເສີມສ້າງຄວາມສະຫງົບ, ມີສ່ວນຮ່ວມ ແລະ ການເຂົ້າຮ່ວມໃນສັງຄົມ/ສະມາຄົມ, ພ້ອມກັນກັບກໍ່ສົ່ງເສີມການຢູ່ຮ່ວມກັນ, ປະສານກັນ ແລະ ການມີຮ່ວມກັນໃນສັງຄົມ.

38. ພວກເຮົາມຸ່ງໝັ້ນຈະສ້າງຄວາມຍືນຍົງຂອງມໍລະດົກທາງວັດທະນາທຳ ແລະ ທຳມະຊາດ, ທັງຮູບມະທຳ ແລະ ນາມມະທຳໃນການຕັ້ງຖິ່ນຖານຂອງມະນຸດ ແລະ ຕົວເມືອງຕາມຄວາມເໝາະສົມ ຜ່ານນະໂຍບາຍທີ່ເຊື່ອມສານກ່ຽວກັບດິນແດນ ແລະ ເມືອງ ແລະ ການລົງທຶນທີ່ພຽງພໍໃນລະດັບຊາດ, ພາກ ແລະ ທ້ອງຖິ່ນ, ເພື່ອຮັກສາຄວາມປອດໄພ ແລະ ສົ່ງເສີມສະຖານທີ່ ແລະ ພື້ນຖານໂຄງລ່າງທາງວັດທະນາທຳ, ຫໍພິພິດຕະພັນ, ພາສາ ແລະ ວັດທະນາທຳພື້ນເມືອງ, ພ້ອມກັນກັບຄວາມຮູ້ທາງດ້ານຮີດຄອງປະເພນີ ແລະ ສິນລະປະ, ຈະເນັ້ນໃຫ້ເຫັນຄວາມສຳຄັນຂອງບົດບາດ ເຊິ່ງສິ່ງເຫຼົ່ານີ້ຊ່ວຍປັບຕົວສູ່ຊີວິດປົກກະຕິ ແລະ ຟື້ນຟູກັບສູ່ສະພາບເດີມໃນພື້ນທີ່ຕົວເມືອງ ແລະ ໃນການສ້າງຄວາມເຂັ້ມແຂງການມີຮ່ວມໃນສັງຄົມ ແລະ ການເຮັດໜ້າທີ່ຂອງປະຊາກອນ.

39. ພວກເຮົາມຸ່ງໝັ້ນຈະສົ່ງເສີມຄວາມປອດໄພ, ສຸຂະພາບແຂງແຮງ, ມີສ່ວນຮ່ວມ ແລະ ຮັກສາສິ່ງແວດລ້ອມໃນການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງ ຈະເຮັດໃຫ້ທຸກໆຄົນໄດ້ດຳລົງຊີວິດ, ມີວຽກເຮັດ ແລະ ມີສ່ວນຮ່ວມໃນການດຳລົງຊີວິດໃນຕົວເມືອງ ບໍ່ມີຄວາມ ວິຕົກກັງວົນຕໍ່ການຂົ່ມຂູ່ ແລະ ຄວາມຮຸນແຮງ, ຈະຄຳນຶງເຖິງຜູ້ຍິງ ແລະ ເດັກຍິງ, ເດັກນ້ອຍ ແລະ ຊາວໜຸ່ມ, ຄົນທີ່ຕົກຢູ່ໃນສະພາບບໍ່ໝັ້ນຄົງແມ່ນສ່ວນຫຼາຍໄດ້ຮັບຜົນກະທົບ. ພວກເຮົາຈະສືບຕໍ່ເຮັດວຽກດ້ານກຳຈັດການກະທຳທີ່ເປັນອັນຕະລາຍຕໍ່ແມ່ຍິງ ແລະ ເດັກຍິງ, ລວມທັງເດັກນ້ອຍ ຜູ້ທີ່ຖືກບັງຄັບໃຫ້ແຕ່ງງານກ່ອນໄວອັນເໝາະສົມ ແລະ ເຮັດໃຫ້ມີບາດແຜ (ຈີກ) ຢູ່ອະໄວຍະສືບພັນຂອງເພດຍິງ.

40. ພວກເຮົາມຸ່ງໝັ້ນທີ່ຈະລວມເອົາຄວາມຫຼາກຫຼາຍໃນການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງ, ເພີ່ມທະວີການຕິດຕໍ່ກັນໃນສັງຄົມ, ຄວາມເຂົ້າໃຈ ແລະ ການສົນທະນາກ່ຽວກັບວັດທະນາທຳ, ການໃຫ້ອະໄພ/ຄວາມອົດທົນ, ເຄົາລົບເຊິ່ງກັນ ແລະ ກັນ/ທັງສອງຝ່າຍ, ຄວາມສະເໝີພາບທາງເພດ, ນະວະຕະກຳ, ການປະກອບການທາງທຸລະກິດ, ການມີສ່ວນຮ່ວມ, ລັກສະນະສະເພາະຕົວ ແລະ ຄວາມປອດໄພ, ແລະ ກຽດສັກສີຂອງປະຊາຊົນທຸກຄົນ, ພ້ອມກັນນັ້ນ ກໍ່ຈະສ້າງຄວາມສາມາດໃນການດຳລົງຊີວິດ ແລະ ເສດຖະກິດທີ່ດີໃນຕົວເມືອງ. ພວກເຮົາຍັງມຸ່ງໝັ້ນຈະໃຊ້ຫຼາຍຂັ້ນຕອນເພື່ອຮັບປະກັນວ່າສະຖາບັນໃນທ້ອງຖິ່ນຂອງພວກເຮົາສົ່ງເສີມການຢູ່ຮ່ວມກັນຂອງຄົນຫຼາຍປະເພດຢ່າງສະຫງົບພາຍໃນສັງຄົມທີ່ປະກອບດ້ວຍວັດທະນາທຳທີ່ຫຼາກຫຼາຍ ແລະ ແຕກຕ່າງກັນຢ່າງສິ້ນເຊີງ.



Top view of Luang Prabang, Laos © Shutterstock

41. ພວກເຮົາມຸ່ງໝັ້ນຈະສົ່ງເສີມກົນໄກກ່ຽວກັບສະຖາບັນ, ການເມືອງ, ກົດໝາຍ ແລະ ການເງິນໃນການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງ ເຮັດໃຫ້ເວທີການມີສ່ວນຮ່ວມກ້ວາງອອກທີ່ສອດຄ່ອງກັບນະໂຍບາຍຂອງຊາດ, ເຊິ່ງອະນຸຍາດໃຫ້ການມີສ່ວນຮ່ວມມີຄວາມໝາຍສຳຄັນໃນການຕັດສິນໃຈກ່ຽວກັບແຜນການ ແລະ ປະຕິບັດຕາມຂັ້ນຕອນເພື່ອທຸກຄົນ, ພ້ອມກັນນີ້ກໍ່ຍົກລະດັບການເພີ່ມທະວີຄຳໝັ້ນສັນຍາຕໍ່ກັບພົນລະເມືອງ, ການຈັດກຽມ ແລະ ການຜະລິດຮ່ວມກັນ.

42. ພວກເຮົາສະໜັບສະໜູນລັດຖະບານພາກ ແລະ ທ້ອງຖິ່ນຕາມຄວາມເໝາະສົມໃນການປະຕິບັດວຽກງານຕໍ່ບົດບາດສຳຄັນໃນການເພີ່ມທະວີການພະເຊີນໜ້າເຊິ່ງກັນ ແລະ ກັນລະຫວ່າງພາກສ່ວນທີ່ກ່ຽວຂ້ອງ, ຈະໃຫ້ໂອກາດໃນການສົນທະນາ ລວມທັງ ຜ່ານຫຼັກການຕອບສະໜອງດ້ານບົດບາດຍິງ-ຊາຍ ແລະ ໄວອາຍຸ, ກັບຄວາມເອົາໃຈໃສ່ສະເພາະໃນການຊ່ວຍເຫຼືອທີ່ສຳຄັນຈາກທຸກໆພາກສ່ວນຂອງສັງຄົມ, ລວມທັງ ເພດຊາຍ ແລະ ແມ່ຍິງ, ເດັກນ້ອຍ ແລະ ໄວໜຸ່ມ, ຄົນສູງອາຍຸ ແລະ ຄົນພິການ, ຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ, ຜູ້ລີ້ໄພ, ຄົນຂາດທີ່ພັກອາໄສພາຍໃນ ແລະ ຜູ້ອົບພະຍົກ ໂດຍທີ່ບໍ່ຄຳນຶງເຖິງສະພາບການຍ້າຍ/ອົບພະຍົກຂອງເຂົາເຈົ້າ, ບໍ່ມີການຈຳແນກ/ແບ່ງແຍກໂດຍອີງໃສ່ເຊື້ອຊາດ, ພາກພື້ນ, ຊົນເຜົ່າ ຫຼື ສະພາບເສດຖະກິດສັງຄົມ.

ໂອກາດ ແລະ ຄວາມຈະເລີນຮຸ່ງເຮືອງໃນຕົວເມືອງທີ່ມີສ່ວນຮ່ວມແບບຍືນຍົງສຳລັບທຸກຄົນ

43. ພວກເຮົາຮັບຮູ້ວ່າ ການຂະຫຍາຍຕົວດ້ານເສດຖະກິດແບບຍືນຍົງ ແລະ ມີສ່ວນຮ່ວມ, ພ້ອມກັບການຈ້າງງານທີ່ດີ ແລະ ເຕັມສ່ວນ ແລະ ວຽກທີ່ມີຄຸນຄ່າສຳລັບທຸກຄົນ, ແມ່ນອົງປະກອບທີ່ສຳຄັນຂອງການພັດທະນາດິນແດນ ແລະ ເມືອງແບບຍືນຍົງ ເຊິ່ງການຕັ້ງຖິ່ນຖານຂອງມະນຸດ ແລະ ຕົວເມືອງຄວນຈະເປັນບ່ອນທີ່ໃຫ້ໂອກາດທີ່ພໍພຽງ, ອະນຸຍາດໃຫ້ປະຊາຊົນດຳລົງຊີວິດດີ, ຜະລິດ, ຮຸ່ງເຮືອງ ແລະ ເພິ່ງພໍໃຈ.

44. ພວກເຮົາຮັບຮູ້ວ່າຮູບແບບຂອງເມືອງ, ພື້ນຖານໂຄງລ່າງ ແລະ ການອອກແບບ ສິ່ງກໍ່ສ້າງ ແມ່ນເປັນຕົວຂັບເຄື່ອນດ້ານລາຄາ ແລະ ປະສິດທິພາບຂອງຊັບພະຍາກອນ ໂດຍຜ່ານຜົນປະໂຫຍດຂອງເສດຖະກິດ ແລະ ການຮ່ວມຕົວເປັນກ້ອນກຸ່ມຈະສົ່ງເສີມພະລັງງານທີ່ມີປະສິດທິພາບ, ພະລັງງານທີ່ສາມາດຟື້ນຟູ, ຄວາມໝັ້ນຄົງ, ຜະລິດຕະພັນ, ການຮັກສາສະພາບແວດລ້ອມ ແລະ ການຂະຫຍາຍຕົວໃນເສດຖະກິດເມືອງແບບຍືນຍົງ.

45. ພວກເຮົາມຸ່ງໝັ້ນທີ່ຈະພັດທະນາເສດຖະກິດເມືອງໃຫ້ມີຊີວິດຊີວາ, ຍືນຍົງ, ແລະ ມີສ່ວນຮ່ວມ, ຈະກໍ່ສ້າງຄວາມສຳຄັນທີ່ມີພາຍໃນ, ຜົນປະໂຫຍດທີ່ແຂ່ງຂັນໄດ້, ມໍລະດົກທາງວັດທະນາທຳ ແລະ ຊັບພະຍາກອນທ້ອງຖິ່ນ, ຄຽງຄູ່ກັບຊັບພະຍາກອນທີ່ມີປະສິທິຜົນ ແລະ ຄວາມໝັ້ນຄົງຂອງພື້ນຖານໂຄງລ່າງ, ຈະສົ່ງເສີມການພັດທະນາອຸດສະຫະກຳແບບມີສ່ວນຮ່ວມ ແລະ ຍືນຍົງ ແລະ ຮູບແບບການບໍລິໂພກ ແລະ ການຜະລິດແບບຍືນຍົງ, ຈະສ້າງຄວາມທົນທານໃຫ້ສິ່ງແວດລ້ອມສຳລັບທຸລະກິດ, ນະວະຕະກຳ, ແລະການດຳລົງຊີວິດ.

46. ພວກເຮົາມຸ່ງໝັ້ນຈະສົ່ງເສີມບົດບາດຂອງທີ່ພັກອາໄສແບບຍືນຍົງ, ຄອບຄອງໄດ້ ແລະ ການເງິນກ່ຽວກັບທີ່ພັກອາໄສ, ລວມທັງ ຜະລິດຕະພັນທີ່ຢູ່ອາໄສດ້ານສັງຄົມ, ໃນການພັດທະນາເສດຖະກິດ, ແລະ ການຊ່ວຍເຫຼືອຂອງພາກສ່ວນໃຫ້ມີການກະຕຸ້ນດ້ານການຜະລິດໃນພາກສ່ວນເສດຖະກິດອື່ນໆ, ຈະຮັບຮູ້ວ່າທີ່ພັກອາໄສຍົກລະດັບເພີ່ມທະວີຂໍ້ມູນດ້ານທຶນຮອນ, ລາຍຮັບ, ເກີດມີການຈ້າງງານ ແລະ ປະຢັດ/ອອມເງິນ ແລະ ສາມາດຊ່ວຍໃຫ້ມີການກະຕຸ້ນການປ່ຽນສະພາບເສດຖະກິດແບບມີສ່ວນຮ່ວມ ແລະ ແບບຍືນຍົງໃນລະດັບຊາດ, ພາກ, ແລະ ທ້ອງຖິ່ນ.

47. ພວກເຮົາມຸ່ງໝັ້ນຈະນຳໃຊ້ຂັ້ນຕອນທີ່ເໝາະສົມເພື່ອສ້າງຄວາມເຂັ້ມແຂງໃຫ້ສະຖາບັນຊາດ, ພາກ ແລະ ທ້ອງຖິ່ນໃນການສະໜັບສະໜູນການພັດທະນາເສດຖະກິດທ້ອງຖິ່ນ, ຈະເຮັດໃຫ້ມີການເຊື່ອມສານ, ການຮ່ວມມື, ການປະສານງານ ແລະ ການສົນທະນາລະຫວ່າງລັດຖະບານທຸກໆລະດັບ, ຂອບເຂດວຽກງານ ແລະ ພາກສ່ວນທີ່ກ່ຽວຂ້ອງ.

48. ພວກເຮົາສະໜັບສະໜູນການຮ່ວມມື ແລະ ການເຂົ້າຮ່ວມທີ່ມີປະສິດທິພາບ ລະຫວ່າງພາກສ່ວນທີ່ກ່ຽວຂ້ອງ, ລວມທັງ ລັດຖະບານທ້ອງຖິ່ນ, ພາກສ່ວນເອກະຊົນ ແລະ ສັງຄົມສົງເຄາະ, ແມ່ຍິງ, ອົງການຈັດຕັ້ງທີ່ເປັນຕົວແທນຂອງຊາວໜຸ່ມ, ພ້ອມກັນນີ້ ບຸກຄົນເຫຼົ່ານັ້ນຈະເປັນຕົວແທນ ໃຫ້ຄົນພິການ, ຄົນພື້ນເມືອງ, ຊ່ຽວຊານ, ສະຖາບັນການສຶກສາ, ຫົວໜ່ວຍທຸລະກິດ, ເຈົ້າຂອງອົງການ, ສະມາຄົມຊາວອົບພະຍົກ ແລະ ສະມາຄົມກ່ຽວກັບວັດທະນາທຳ, ເພື່ອຊອກໂອກາດສຳລັບການພັດທະນາເສດຖະກິດເມືອງ, ຊອກຫາ ແລະ ແກ້ໄຂສິ່ງທ້າທາຍທີ່ມີຢູ່ ແລະ ຈະປະກົດອອກມາ.

49. ພວກເຮົາມຸ່ງໝັ້ນທີ່ຈະສົ່ງເສີມລະບົບຄວບຄຸມດິນແດນທີ່ເຊື່ອມສານເອົາວຽກງານໃນຊົນນະບົດ ແລະ ເມືອງເຂົ້າເປັນຂອບວຽກງານກ່ຽວກັບດິນແດນໃນພາກ ແລະ ປະເທດ ແລະ ລະບົບການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງ, ດັ່ງນັ້ນ ການສົ່ງເສີມການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ດິນແບບຍືນຍົງ, ຈະຮັບປະກັນການສະໜອງທີ່ໄວ້ວາງໃຈໄດ້ ແລະ ຕ່ອງໂສ້ງທີ່ມີຄ່າທີ່ເຊື່ອມຕໍ່ຄວາມຕ້ອງການ ແລະ ການສະໜອງຂອງຊົນນະບົດ ແລະ ເມືອງ ເພື່ອເຮັດໃຫ້ການພັດທະນາໃນພາກພື້ນຢ່າງຍຸດຕິທຳທົ່ວທັງໃນເຂດທີ່ຕໍ່ເນື່ອງໃນເມືອງ-ຊົນນະບົດ ແລະ ເຕີມເຕັມຊ່ອງຫວ່າງສັງຄົມ, ເສດຖະກິດ ແລະ ດິນແດນ.

50. ພວກເຮົາມຸ່ງໝັ້ນຈະກະຕຸ້ນການພົວພັນ ແລະ ຕິດຕໍ່ລະຫ່ວາງຕົວເມືອງ-ຊົນນະບົດ ໂດຍການຍົກລະດັບເພີ່ມທະວີການຍົກຍ້າຍ ແລະ ຂົນສົ່ງແບບຍືນຍົງ, ແລະ ເຄືອຂ່າຍການສື່ສານ ແລະ ເທັກໂນໂລຊີ ແລະ ພື້ນຖານໂຄງລ່າງ, ຖືກສະໜັບສະໜູນໂດຍການວາງແຜນດ້ານເຄື່ອງມືອົງໃສ່ຫຼັກການເຊື່ອມສານຂອງເມືອງ ແລະ ດິນແດນ, ເພື່ອເພີ່ມຄວາມສຳຄັນຂອງພາກສ່ວນເຫຼົ່ານີ້ສຳລັບການເພີ່ມອັດຕາການຜະລິດ, ການຕິດຕໍ່ກັນໃນສັງຄົມ, ເສດຖະກິດ ແລະ ດິນແດນ, ພ້ອມກັນນີ້ແມ່ນຄວາມຍືນຍົງທາງສິ່ງແວດລ້ອມ ແລະ ຄວາມປອດໄພ. ສິ່ງນີ້ຄວນຈະລວມຢູ່ໃນການປະສານກັນລະຫວ່າງເມືອງ ແລະ ພື້ນທີ່ອ້ອມຂ້າງ, ພື້ນທີ່ອ້ອມເມືອງ ແລະ ຊົນນະບົດ ແລະ ພື້ນທີ່ກ້ວາງທີ່ເຊື່ອມຕໍ່ກັບທະເລເປັນ ຕາມສະຖານທີ່ເໝາະສົມ.

51. ພວກເຮົາມຸ່ງໝັ້ນຈະສົ່ງເສີມການພັດທະນາຂອບວຽກງານກ່ຽວກັບດິນແດນ, ລວມທັງການວາງແຜນ ແລະ ເຄື່ອງມືອອກແບບຕົວເມືອງ ທີ່ສະໜັບສະໜູນການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ດິນແບບຍືນຍົງ, ຄວາມຖີ່ ແລະ ຄວາມໜາແໜ້ນທີ່ເໝາະສົມ, ການນຳໃຊ້ຄວາມຫຼາກຫຼາຍ(ຂອງອຳນາດລວມສູນ) ແລະ ປະສົມປະສານ, ຜ່ານການເຕີມເຕັມ ຫຼື ວາງແຜນຍຸດທະສາດການຂະຫຍາຍເມືອງຕາມຄວາມເໝາະສົມ, ກະຕຸ້ນລະດັບ/ມາດຕາສ່ວນ ແລະ ການຮ່ວມເປັນກ້ອນກຸ່ມຂອງເສດຖະກິດ, ສ້າງຄວາມເຂັ້ມແຂງໃນການວາງແຜນຂອງລະບົບອາຫານ ແລະ ຍົກລະດັບເພີ່ມທະວີປະສິດທິພາບຂອງຊັບພະຍາກອນ, ຄວາມໝັ້ນຄົງຂອງເມືອງ ແລະ ຄວາມຍືນຍົງຂອງສິ່ງແວດລ້ອມ.

52. ພວກເຮົາສະໜັບສະໜູນຍຸດທະສາດການພັດທະນາກ່ຽວກັບດິນແດນ ທີ່ຄຳນຶງເຖິງຄວາມຈຳເປັນທີ່ແນະນຳໃນການຂະຫຍາຍເມືອງຕາມຄວາມເໝາະສົມ, ຈະໃຫ້ບູລິມະສິດໃນການຟື້ນຟູເມືອງ ໂດຍການວາງແຜນໃນການຈັດກຽມການບໍລິການ ແລະ ພື້ນຖານໂຄງລ່າງທີ່ເຂົ້າເຖິງ ແລະ ສາມາດຕິດຕໍ່ໄດ້, ການອອກແບບດ້ານຄວາມຖີ່ ແລະ ຄວາມໜາແໜ້ນຂອງປະຊາກອນແບບຍືນຍົງ ແລະ ການເຊື່ອມສານຂອງເພື່ອນບ້ານໃໝ່ເຂົ້າໃນໂຄງສ້າງຂອງເມືອງ, ຈະປ້ອງກັນຄົນນອກເມືອງ ແລະ ການຂະຫຍາຍຕົວອອກໄປ.

53. ພວກເຮົາມຸ່ງໝັ້ນຈະສົ່ງເສີມສະຖານທີ່ສາທາລະນະໃນດ້ານຄວາມປອດໄພ, ການມີສ່ວນຮ່ວມ, ເຂົ້າເຖິງ, ສີຂຽວ ແລະ ມີຄຸນນະພາບ ເຊິ່ງເປັນຜູ້ກະຕຸ້ນໃນການພັດທະນາເສດຖະກິດ ແລະ ສັງຄົມ, ເພື່ອນຳໃຊ້ຄວາມສາມາດທີ່ບົ່ມຊ້ອນຂອງເຂົາໃນການກໍ່ໃຫ້ເກີດຄຸນຄ່າທາງເສດຖະກິດ ແລະ ສັງຄົມແບບຍືນຍົງ, ລວມທັງ ຄຸນຄ່າທາງດ້ານຊັບສິນທີ່ອຳນວຍຄວາມສະດວກທາງທຸລະກິດ ແລະ ການລົງທຶນຂອງເອກະຊົນ ແລະ ລັດຖະບານ ແລະ ໂອກາດໃນການດຳລົງຊີວິດເພື່ອທຸກຄົນ.

54. ພວກເຮົາມຸ່ງໝັ້ນໃນການຜະລິດ ແລະ ນໍາໃຊ້ພະລັງງານທີ່ສາມາດຟື້ນຟູ ແລະ ຫາໄດ້, ການບໍລິການ ແລະ ພື້ນຖານໂຄງລ່າງດ້ານການຂົນສົ່ງທີ່ມີປະສິດທິພາບ ແລະ ຍືນຍົງ ໃນສະຖານທີ່ທີ່ເປັນໄປໄດ້, ຈະບັນລຸຜົນສໍາເລັດໃນດ້ານຜົນປະໂຫຍດຂອງການເຊື່ອມຕໍ່ ແລະ ການຫຼຸດຜ່ອນທາງດ້ານການເງິນ, ສິ່ງແວດລ້ອມ ແລະ ຄ່າໃຊ້ຈ່າຍດ້ານສາທາລະນະສຸກຂອງການເຄື່ອນຍ້າຍທີ່ບໍ່ມີປະສິດທິພາບ, ຄວາມແອອັດ, ອາກາດເປັນພິດ, ຜົນກະທົບຈາກເກາະຄວາມຮ້ອນໃນເມືອງ ແລະ ສຽງລົບກວນ. ພວກເຮົາຍັງມຸ່ງໝັ້ນທີ່ຈະໃຫ້ຄວາມເອົາໃຈທີ່ສໍາຄັນໃນຄວາມຕ້ອງດ້ານການຂົນສົ່ງ ແລະ ພະລັງງານຂອງປະຊາຊົນທຸກຄົນ, ໂດຍສະເພາະຄວາມທຸກຍາກ ແລະ ການດໍາລົງຊີວິດໃນການຕັ້ງຖິ່ນຖານນອກລະບົບ. ພວກເຮົາຍັງຮັບຮູ້ວ່າ ການຫຼຸດຄ່າໃຊ້ຈ່າຍຕໍ່ພະລັງງານທີ່ສາມາດຟື້ນຟູໃນການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງ ເປັນເຄື່ອງມືທີ່ມີປະສິດທິພາບໃນການເຮັດໃຫ້ການສະໜອງມີລາຄາຕໍ່າລົງ.

55. ພວກເຮົາມຸ່ງໝັ້ນຈະເຮັດໃຫ້ສັງຄົມເຂັ້ມແຂງໂດຍການສົ່ງເສີມໃຫ້ເຂົ້າເຖິງການບໍລິການສາທາລະນະ ມີຄຸນນະພາບ, ມີສ່ວນຮ່ວມ, ພໍພຽງ, ສະພາບແວດລ້ອມທີ່ສະອາດ, ຈະພິຈາລະນາຄູ່ມືຄຸນນະພາບຂອງອາກາດ, ລວມທັງສິ່ງເຫຼົ່ານັ້ນທີ່ວາງແຜນຢ່າງລະອຽດໂດຍອົງການອານາໄມໂລກ, ພື້ນຖານໂຄງລ່າງທາງສັງຄົມ ແລະ ສິ່ງອໍານວຍຄວາມສະດວກ ເຊັ່ນ: ການບໍລິການດ້ານການຮັກສາສຸຂະພາບ, ລວມທັງໄດ້ຮັບການບໍລິການດ້ານການຮັກສາສຸຂະພາບສືບພັນ ແລະ ທາງເພດໃນທົ່ວໂລກ ເພື່ອຫຼຸດຜ່ອນອັດຕາການຕາຍຂອງແມ່ ແລະ ເດັກເກີດໃໝ່.

56. ພວກເຮົາມຸ່ງໝັ້ນໃນການເພີ່ມອັດຕາການຜະລິດທາງເສດຖະກິດ ຕາມຄວາມເໝາະສົມ, ຕອບສະໜອງກໍາລັງແຮງງານກັບການເຂົ້າເຖິງໂອກາດທີ່ມີລາຍຮັບ, ຄວາມຮູ້, ທັກສະ ແລະ ສິ່ງອໍານວຍຄວາມສະດວກໃນການສຶກສາທີ່ຊ່ວຍໃຫ້ເສດຖະກິດເມືອງມີການແຂ່ງຂັນ ແລະ ນະວະຕະກໍາ. ພວກເຮົາຍັງມຸ່ງໝັ້ນໃນການເພີ່ມອັດຕາການຜະລິດຜ່ານການສົ່ງເສີມເຕັມຮູບແບບຂອງການຈ້າງງານການຜະລິດ ແລະ ວຽກທີ່ໝັ້ນຄົງ ແລະ ໂອກາດໃນການດໍາລົງຊີວິດໃນການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງ.

57. ພວກເຮົາມຸ່ງໝັ້ນໃນການສົ່ງເສີມຕາມຄວາມເໝາະສົມເຕັມທີ່ ແລະ ການຈ້າງງານການຜະລິດ, ວຽກທີ່ໝັ້ນຄົງສໍາລັບທຸກຄົນ ແລະ ໂອກາດຂອງການດໍາລົງຊີວິດໃນການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງ, ກັບຄວາມເອົາໃຈໃສ່ເປັນພິເສດຕໍ່ຄວາມຕ້ອງການ ແລະ ຄວາມສໍາຄັນຂອງແມ່ຍິງ, ຊາວໜຸ່ມ, ຄົນພິການ, ຄົນພື້ນເມືອງ ແລະ ຊຸມຊົນໃນທ້ອງຖິ່ນ, ຜູ້ຫຼົບໄພ, ແລະ ຄົນຂາດທີ່ພັກອາໄສພາຍໃນ ແລະ ຜູ້ອົບພະຍົກ ໂດຍສະເພາະຜູ້ຍາກຈົນທີ່ສຸດ ແລະ ກຸ່ມຄົນເຫຼົ່ານັ້ນທີ່ຕົກຢູ່ໃນສະພາບບໍ່ໝັ້ນຄົງ, ສົ່ງເສີມການບໍ່ແບ່ງແຍກເຊິ່ງສ້າງໂອກາດໃນການຫາລາຍໄດ້ທີ່ຖືກຕ້ອງຕາມກົດໝາຍ.

58. ພວກເຮົາມຸ່ງໝັ້ນຈະສົ່ງເສີມຄວາມສາມາດ, ຄວາມຍຸດຕິທໍາ ແລະ ມີຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມຂອງເສດຖະກິດ ອີງຕາມຫຼັກການຂອງຄວາມຍືນຍົງດ້ານສະພາບແວດລ້ອມ ແລະ ຄວາມຈະເລີນແບບມີສ່ວນຮ່ວມ, ຈະສົ່ງເສີມການລົງທຶນ, ນະວະຕະກໍາ ແລະ ນັກທຸລະກິດ. ພວກເຮົາຍັງມຸ່ງໝັ້ນໃນການແກ້ໄຂສິ່ງທ້າທາຍທີ່ຜະເຊີນໜ້າຢູ່ໃນຊຸມຊົນທຸລະກິດໃນທ້ອງຖິ່ນ ໂດຍການສະໜັບສະໜູນບໍລິສັດ/ວິສະຫະກິດຂະໜາດໃຫຍ່, ນ້ອຍ, ແລະ ກາງ ແລະ ຕ່ອງໂສ້/ເຄືອຄ່າຍທີ່ມີຄຸ່ນຄ່າທັງໝົດໃນການຮ່ວມມື, ໂດຍສະເພາະວິສະຫະກິດ ແລະ ທຸລະກິດໃນສັງຄົມ ແລະ ເສດຖະກິດທີ່ເປັນອັນໜຶ່ງອັນດຽວ, ຈະປະຕິບັດໃນທັງເສດຖະກິດໃນ ແລະ ນອກລະບົບ.

59. ພວກເຮົາມຸ່ງໝັ້ນໃນການຮັບຮູ້ ແລະ ຊ່ວຍເຫຼືອວຽກງານແກ້ໄຂ ຄວາມທຸກຈົນໃນເສດຖະກິດນອກລະບົບ, ໂດຍສະເພາະແມ່ນແມ່ຍິງ, ລວມມີ ກໍາມະກອນທີ່ອົບພະຍົກ ແລະ ພາຍໃນທີ່ເຮັດວຽກບໍ່ໄດ້ຮັບເງິນ, ເສດຖະກິດເມືອງຈະຄໍານຶງເຖິງສະພາບຂອງປະເທດ. ການດໍາລົງຊີວິດຂອງເຂົາ, ເງື່ອນໄຂການເຮັດວຽກ ແລະ ຄວາມໝັ້ນຄົງຂອງລາຍຮັບ, ການປ້ອງກັນສັງຄົມ ແລະ ກົດໝາຍ, ການໄດ້ຮັບທັກສະ, ຊັບສິນ ແລະ ການບໍລິການທີ່ສະໜັບສະໜູນອື່ນໆ, ສຽງ ແລະ ຕົວແທນຄວນຈະຖືກຍົກລະດັບເພີ່ມທະວີ. ການປ່ຽນແປງຕາມຂັ້ນຕອນຂອງກໍາມະກອນ ແລະ ຫົວໜ່ວຍເສດຖະກິດຈົນເຖິງເສດຖະກິດໃນລະບົບຈະຖືກພັດທະນາໂດຍການຮອງຮັບຕາມຫຼັກການທີ່ມີຄວາມດຸນດ່ຽງ, ຈະລວມເອົາສິ່ງກະຕຸ້ນ ແລະ ມາດຕະການຕາມລະບຽບ, ໃນຂະນະດຽວກັນນັ້ນກໍ່ສົ່ງເສີມການຮັກສາ ແລະ ປັບປຸງການດໍາລົງຊີວິດໃນປະຈຸບັນ. ພວກເຮົາຈະຄໍານຶງເຖິງສະພາບພິເສດຂອງຊາດ, ກົດໝາຍ, ນະໂຍບາຍ, ການປະຕິບັດ ແລະ ໃຫ້ບຸລິມະສິດແກ່ການປ່ຽນແປງເປັນເສດຖະກິດໃນລະບົບ.



Tel Aviv, Israel

60. ພວກເຮົາມຸ່ງໝັ້ນທີ່ຈະຊ່ວຍເຫຼືອ ແລະ ສະໜັບສະໜູນເສດຖະກິດເມືອງໃນການປ່ຽນແປງເປັນໄປຕາມຂັ້ນຕອນໃຫ້ອັດຕາການຜະລິດສູງຂຶ້ນຜ່ານພາກສ່ວນເພີ່ມມູນຄ່າໃຫ້ສູງຂຶ້ນ, ໂດຍຈະສົ່ງເສີມການເຮັດໃຫ້ປ່ຽນແປງ, ຈະຍົກລະດັບເທັກໂນໂລຢີ, ການຄົ້ນຄວ້າ ແລະ ນະວະຕະກໍາ, ລວມທັງ ການສ້າງຄຸນນະພາບ, ວຽກການຜະລິດ ແລະ ໝັ້ນຄົງ, ລວມມີຜ່ານການສົ່ງເສີມຂອງວັດທະນາທໍາ ແລະ ອຸດສະຫະກໍາແບບມີຫົວຄິດປະດິດສ້າງ, ການທ່ອງທ່ຽວແບບຍືນຍົງ, ການສະແດງສິນລະປະ ແລະ ກິດຈະກໍາການສຶບທະນາກ່ຽວກັບມໍລະດົກ, ແລະ ສິ່ງອື່ນໆ.

61. ພວກເຮົາມຸ່ງໝັ້ນໃນການຄວບຄຸມເງິນປັນຜົນກໍາໄລກ່ຽວກັບສະຖິຕິປະຊາກອນໃນສະຖານທີ່ເໝາະສົມ, ຈະສົ່ງເສີມໃຫ້ຊາວໜຸ່ມໃຫ້ໄດ້ຮັບການສຶກສາ, ການພັດທະນາທັກສະ ແລະ ການຈ້າງງານເຮັດໃຫ້ອັດຕາການຜະລິດເພີ່ມຂຶ້ນສໍາເລັດ ແລະ ຄວາມຈະເລີນຮຸ່ງເຮືອງແບບມີສ່ວນຮ່ວມໃນການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງ. ເດັກຍິງ ແລະ ເດັກຊາຍ, ແມ່ຍິງ ແລະ ຜູ້ຊາຍທີ່ໜຸ່ມນ້ອຍແມ່ນຕົວແທນທີ່ສໍາຄັນຂອງການປ່ຽນແປງໃນການສ້າງອານາຄົດທີ່ດີຂຶ້ນ ແລະ ຫຼັງຈາກທີ່ໃຫ້ສິດອໍານາດແກ່ເຂົາເຈົ້າໄດ້ມີຄວາມສໍາຄັນຫຼາຍໃນການສົ່ງເສີມຕົວແທນ ແລະ ຊຸມຊົນຂອງພວກເຂົາ. ຈະຮັບປະກັນໂອກາດທີ່ຫຼາກຫຼາຍ ແລະ ດີກວ່າ ສໍາລັບການເຂົ້າຮ່ວມທີ່ມີຄວາມໝາຍຈະເປັນສິ່ງສໍາຄັນໃນການຈັດຕັ້ງປະຕິບັດວາລະການພັດທະນາຕົວເມືອງສະບັບໃໝ່.

62. ພວກເຮົາມຸ່ງໝັ້ນໃນການແກ້ໄຂຜົນສະທ້ອນກ່ຽວກັບດິນແດນ ແລະ ສັງຄົມ, ເສດຖະກິດ ຂອງປະຊາກອນຕາມໄວອາຍຕາມສະຖານທີ່ເໝາະສົມ, ຈະຄວບຄຸມປັດໃຈກ່ຽວກັບໄວອາຍຸແມ່ນໂອກາດສໍາລັບວຽກໃໝ່ທີ່ໝັ້ນຄົງ ແລະ ຖືກສະໜັບສະໜູນ, ການຂະຫຍາຍຕົວຂອງເສດຖະກິດທີ່ຍືນຍົງ ແລະ ມີສ່ວນຮ່ວມ ໃນຂະນະດຽວກໍ່ປັບປຸງຄຸນນະພາບຂອງຊີວິດຂອງປະຊາກອນເມືອງ.

ການພັດທະນາເມືອງແບບສະພາບແວດລ້ອມທີ່ຍືນຍົງ ແລະ ໝັ້ນຄົງ

63. ພວກເຮົາຮັບຮູ້ວ່າການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງພະເຊີນໜ້າກັບໄພຄຸກຄາມທີ່ບໍ່ເຄີຍມີມາກ່ອນຈາກຮູບແບບການຜະລິດ ແລະ ບໍລິໂພກແບບຍືນຍົງ, ຄວາມເສຍຫາຍຂອງຊີວະນາໆພັນ, ແຮງກົດດັນຂອງລະບົບນິເວດ, ມົນລະພິດ, ໄພພິບັດຈາກທໍາມະຊາດ ແລະ ມະນຸດສ້າງຂຶ້ນ, ດິນຟ້າອາກາດ/ສະພາບອາກາດປ່ຽນແປງ ແລະ ຄວາມສ່ຽງອື່ນທີ່ມີສ່ວນກ່ຽວຂ້ອງ, ການທໍາລາຍຄວາມພະຍາຍາມທີ່ຈະກໍາຈັດຄວາມທຸກຍາກໃນທຸກຂະໜາດ ແລະ ຮູບແບບ ເພື່ອເຮັດໃຫ້ການພັດທະນາແບບຍືນຍົງສໍາເລັດ. ໃຫ້ທິດທາງກ່ຽວກັບສະຖິຕິຈໍານວນປະຊາກອນຂອງເມືອງ ແລະ ບົດບາດທີ່ເປັນສູນກາງຂອງເຂົາໃນເສດຖະກິດທົ່ວໂລກ, ໃນການລິ້ໄພ ແລະ ການປ່ຽນແປງຄວາມພະຍາຍາມທີ່ກ່ຽວຂ້ອງສະພາບອາກາດປ່ຽນແປງ,ແລະ ໃນການນໍາໃຊ້ຂອງຊັບພະຍາກອນ ແລະ ລະບົບນິເວດ, ແນວທາງທີ່ຖືກວາງແຜນ, ໃຫ້ງົບປະມານ, ພັດທະນາ, ສ້າງ, ປົກຄອງ ແລະ ຄຸ້ມຄອງມີຜົນກະທົບໂດຍຕົງຕໍ່ຄວາມຍືນຍົງ ແລະ ຄວາມທົນທານໃນຂອບເຂດຊາຍແດນ,

64. ພວກເຮົາຍັງຮັບຮູ້ວ່າເມືອງແມ່ນສູນກາງໃນທົ່ວໂລກ, ໂດຍສະເພາະໃນການພັດທະນາປະເທດແມ່ນ ມີລັກສະນະພິເສດທີ່ເຮັດໃຫ້ເຂົາເຈົ້າ ແລະ ຜູ້ທີ່ພັກອາໄສ ໂດຍສະເພາະຄວາມບໍ່ໝັ້ນຄົງຈະເປັນຜົນກະທົບທີ່ອັນຕະລາຍຂອງສະພາບອາກາດປ່ຽນແປງ ແລະ ອັນຕະລາຍອື່ນໆທີ່ເກີດຈາກທໍາມະຊາດ ແລະ ມະນຸດສ້າງເອງ, ລວມທັງແຜ່ນດິນໄຫວ, ສະພາບອາກາດແປປວນ, ນໍ້າຖ້ວມ, ການຫຍຸບລົງຂອງດິນ ຫຼື ອາຄານ, ພາຍຸ, ລວມມີ ພາຍຸຝຸ່ນ ແລະ ພາຍຸຊາຍ, ຄື້ນຄວາມຮ້ອນ, ຂາດນໍ້າ, ແຫ້ງແລ້ງ, ນໍ້າ ແລະ ອາກາດເປັນພິດ, ເຊື້ອພະຍາດທີ່ມາຈາກແມງໄມ້ ຫຼື ສັດເປັນຕົວນໍາເຊື້ອ ແລະ ລະດັບຂອງນໍ້າທະເລຂຶ້ນ, ເຊິ່ງມີຜົນກະທົບຢ່າງຮ້າຍແຮງຕໍ່ພື້ນທີ່ແຄມຝັ່ງທະເລ, ຂົງເຂດສາມລ່ຽມແມ່ນໍ້າ ແລະ ເກາະນ້ອຍໆໃນລັດທີ່ກໍາລັງພັດທະນາ ແລະ ອື່ນໆອີກ.

65. ພວກເຮົາມຸ່ງໝັ້ນທີ່ຈະອໍານວຍຄວາມສະດວກໃນການຄຸ້ມຄອງຊັບພະຍາກອນທໍາມະຊາດແບບຍືນຍົງໃນການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງໃນຮູບແບບປ້ອງກັນ ແລະ ປັບປຸງການບໍລິການ ສິ່ງແວດລ້ອມ ແລະ ລະບົບນິເວດຂອງເມືອງ, ຫຼຸດຜ່ອນການປ່ອຍອາຍພິດຈາກເຮືອນແກ້ວ ແລະ ອາກາດເປັນພິດ ແລະ ສົ່ງເສີມການຄຸ້ມຄອງ ແລະ ຫຼຸດຜ່ອນຄວາມສ່ຽງທາງໄພພິບັດ, ຈະສະໜັບສະໜູນການພັດທະນາຍຸດທະສາດການຫຼຸດຜ່ອນຄວາມສ່ຽງທາງໄພພິບັດ ແລະ ການປະເມີນໃນແຕ່ລະໄລຍະຂອງຄວາມສ່ຽງທາງໄພພິບັດສາເຫດມາຈາກອັນຕະລາຍທາງທໍາມະຊາດ ແລະ ມະນຸດສ້າງຂຶ້ນ, ລວມມີມາດຕະຖານສໍາລັບລະດັບຂອງຄວາມສ່ຽງ,ໃນຂ

ຂະນະດຽວກັນກໍ່ສະໜັບສະໜູນການພັດທະນາເສດຖະກິດແບບຍືນຍົງ ແລະ ຈະຮັກສາສະຫວັດດີການ ແລະ ຄຸນນະພາບຂອງຊີວິດສຳລັບທຸກຄົນຜ່ານແຜນການພັດທະນາດິນແດນ ແລະ ສຽງຈາກເມືອງກ່ຽວກັບສິ່ງແວດລ້ອມ, ພື້ນຖານການບໍລິການ ແລະ ພື້ນຖານໂຄງລ່າງ.

66. ພວກເຮົາມຸ່ງໝັ້ນຈະຮັບຮອງຫຼັກການເມືອງທັນສະໄໝ ທີ່ໃຫ້ການນຳໃຊ້ໂອກາດຈາກນຳໃຊ້ຕົວເລກ, ພະລັງງານທີ່ສະອາດ ແລະ ເທັກໂນໂລຍີ, ພ້ອມກັບເທັກໂນໂລຍີນະວະຕະກຳໃນການຂົນສົ່ງ, ດັ່ງນັ້ນ ການສະໜອງທາງເລືອກສຳລັບຜູ້ພັກອາໄສທີ່ເປັນມິດກັບສິ່ງແວດລ້ອມ ແລະ ຊຸກຍູ້ການຂະຫຍາຍເສດຖະກິດແບບຍືນຍົງ ແລະ ຈະເຮັດໃຫ້ເມືອງປັບປຸງໃນດ້ານຈັດສົ່ງການບໍລິການຂອງເຂົາເຈົ້າ.

67. ພວກເຮົາມຸ່ງໝັ້ນທີ່ຈະສົ່ງເສີມການລິເລີ່ມ ແລະ ຮັກສາເຄືອຂ່າຍການນຳສົ່ງ ແລະ ເຊື່ອມຕໍ່ທີ່ມີຄຸນນະພາບຂອງການເປີດສະຖານທີ່ສາທາລະນະທີ່ມີຄຸນນະພາບ, ຫຼາກຫຼາຍເປົ້າໝາຍ, ປອດໄພ, ມີສ່ວນຮ່ວມ, ເຂົ້າເຖິງ, ສີຂຽວ, ຈະປັບປຸງຄວາມທົນທານຂອງເມືອງຕໍ່ໄພພິບັດ ແລະ ສະພາບອາກາດປ່ຽນແປງ, ລວມມີ ນໍ້າຖ້ວມ, ຄວາມສ່ຽງຕໍ່ໄພແຫ້ງແລ້ງ, ແລະ ຄື້ນຄວາມຮ້ອນ, ຈະປັບປຸງຄວາມໝັ້ນຄົງທາງດ້ານອາຫານ ແລະ ໂພຊະນາການ, ຮ່າງກາຍ ແລະ ສຸຂະພາບຈິດ, ຄອບຄົວ ແລະ ຄຸນນະພາບຂອງບັນຍາກາດ, ຈະຫຼຸດຜ່ອນສຽງວົນແຊວ ແລະ ສົ່ງເສີມໃຫ້ເປັນເມືອງທີ່ດຶງດູດຄວາມສົນໃຈ ແລະ ໜ້າຢູ່, ການຕັ້ງຖິ່ນຖານຂອງມະນຸດ ແລະ ທິວທັດເມືອງຈະຖືເປັນບູລິມະສິດໃນການປົກປັກຮັກສາແນວພັນ (ຂອງພືດ ແລະ ສັດ) ທີ່ມີສະເພາະຢູ່ໃນທ້ອງຖິ່ນ.

68. ພວກເຮົາມຸ່ງໝັ້ນທີ່ຈະພິຈາລະນາເປັນພິເສດໃນພື້ນທີ່ຂອງສາມຫຼ່ຽມແມ່ນໍ້າ, ແຄມແມ່ນໍ້າ ແລະ ພື້ນທີ່ອື່ນໆທີ່ສະພາບແວດລ້ອມມີຄວາມສ່ຽງ, ຈະເນັ້ນຄວາມສຳຄັນໃນການເປັນຜູ້ສະໜອງຂອງ ລະບົບນິເວດຂອງຊັບພະຍາກອນທີ່ສຳຄັນສຳລັບການຂົນສົ່ງ, ຄວາມໝັ້ນຄົງດ້ານສະບຽງອາຫານ, ຄວາມຈະເລີນທາງເສດຖະກິດ, ຄວາມທົນທານ ແລະ ການບໍລິການທາງລະບົບນິເວດ. ພວກເຮົາມຸ່ງໝັ້ນທີ່ຈະເຊື່ອມສານເອົາມາດຕະການທີ່ເໝາະສົມເຂົ້າເປັນແຜນການ ແລະ ການພັດທະນາດິນແດນ ແລະ ເມືອງແບບຍືນຍົງ.

69. ພວກເຮົາມຸ່ງໝັ້ນທີ່ຈະປົກປັກຮັກສາ ແລະ ສົ່ງເສີມວຽກງານກ່ຽວກັບດິນໃນທາງສັງຄົມ ແລະ ນິເວດວິທະຍາ, ລວມທັງພື້ນທີ່ແຄມຝັ່ງແມ່ນໍ້າທີ່ສະໜັບສະໜູນໃນການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງ, ຈະສະໜັບສະໜູນການແກ້ໄຂທີ່ຖືເອົາລະບົບນິເວດເປັນຫຼັກ ເພື່ອຮັບປະກັນຮູບແບບການຜະລິດ ແລະ ບໍລິໂພກແບບຍືນຍົງ, ດັ່ງນັ້ນ ຄວາມສາມາດທີ່ເຮັດໃຫ້ເກີດມີລະບົບນິເວດແມ່ນບໍ່ເກີນກຳນົດ/ຫຼາຍ. ພວກເຮົາຍັງມຸ່ງໝັ້ນທີ່ຈະສົ່ງເສີມການນຳໃຊ້ດິນແບບຍືນຍົງ, ຈະລວມເອົາການຂະຫຍາຍເມືອງກັບຄວາມແໜ້ນ ແລະ ຄວາມຖີ່ທີ່ພໍພຽງ ເພື່ອປ້ອງກັນ ແລະ ກວມເອົາ ທີ່ຂະຫຍາຍອອກນອກເມືອງ, ພ້ອມກັນນີ້ກໍ່ຈະປ້ອງກັນການປ່ຽນແປງການນຳໃຊ້ດິນທີ່ບໍ່ຈຳເປັນ ແລະ ຄວາມເສຍຫາຍຂອງດິນທີ່ທຳການຜະລິດ, ແລະ ລະບົບນິເວດທີ່ສຳຄັນ ແລະ ເສຍຫາຍງ່າຍ.

70. ພວກເຮົາມຸ່ງໝັ້ນທີ່ຈະສະໜັບສະໜູນພື້ນຖານການບໍລິການ ແລະ ການຈັດຕຽມສິ່ງຂອງໃນຂັ້ນທ້ອງຖິ່ນ ແລະ ຈະເຮັດໃຫ້ມີຄວາມເໝາະສົມກັບຊັບພະຍາກອນ, ຈະຮັບຮູ້ເຖິງການເງິ່ງພາແຫຼ່ງ  ຊັບພະຍາກອນພະລັງງານ, ນໍ້າ, ອາຫານ ແລະ ວັດສະດຸ ເຊິ່ງສາມາດກໍ່ໃຫ້ເກີດ ສິ່ງທ້າທາຍຕໍ່ຄວາມຍືນຍົງ, ລວມທັງຄວາມສ່ຽງຕໍ່ການບໍລິການທີ່ຕອບສະໜອງໃນເວລາທີ່ຂັດຂ້ອງ, ແລະ ຍັງຮູ້ວ່າການຈັດຕຽມໃນເຂດທ້ອງຖິ່ນສາມາດອຳນວຍຄວາມສະດວກໃນການເຂົ້າເຖິງຊັບພະຍາກອນຂອງຜູ້ອາໄສ.

71. ພວກເຮົາມຸ່ງໝັ້ນທີ່ຈະເພີ່ມທະວີໃນການຄຸ້ມຄອງຊັບພະຍາກອນທີ່ຍືນຍົງ, ລວມມີ ດິນ, ນໍ້າ (ມະຫາສະໝຸດ, ທະເລ ແລະ ນໍ້າຈືດ), ພະລັງງານ, ວັດສະດຸ/ວັດຖຸ, ປ່າໄມ້ ແລະ ອາຫານ, ພ້ອມກັບຄວາມໃສ່ໃຈທີ່ສຳຄັນໃນການຄຸ້ມຄອງອ່າວ (ທະເລ) ໃນທາງສິ່ງແວດລ້ອມ ແລະ ການຫຼຸດຜ່ອນສິ່ງເສດເຫຼືອ/ຂີ້ເຫຍື້ອ, ເຄມີອັນຕະລາຍ ເຊັ່ນ: ອາກາດ ແລະ ມົນລະພິດຕໍ່ດິນຟ້າອາກາດທີ່ເຮັດໃຫ້ມີອາຍຸສັ້ນ, ອາຍແກັດຈາກເຮືອນແກ້ວ ແລະ ສຽງວົນແຊວ, ໃນອີກທາງໜຶ່ງແມ່ນພິຈາລະນາການເຊື່ອມຕໍ່ລະຫວ່າງເມືອງກັບຊົນນະບົດ, ການຕອບສະໜອງດ້ານວຽກງານ ແລະ ຕ່ອງໂສ້ທີ່ມີຄຸນຄ່າ vis-à-vis ຜົນກະທົບທາງສິ່ງແວດລ້ອມ ແລະ ຄວາມຍືນຍົງ ແມ່ນພະຍາຍາມທີ່ຈະປ່ຽນແປງເປັນເສດຖະກິດອ້ອມລ້ອມວົງກົມໃນຂະນະດຽວກັນກໍ່ຈະອຳນວຍຄວາມສະດວກໃນການປົກປັກຮັກສາລະບົບນິເວດ, ການ ເກີດຂຶ້ນໃໝ່, ການກັບສູ່ສະພາບເດີມ ແລະ ການຟື້ນຟູ/ຄວາມທົນທານໃນການຜະເຊີນໜ້າກັບສິ່ງທ້າທາຍໃໝ່ ແລະ ກຳລັງປະກົດຢູ່.

72. ພວກເຮົາມຸ່ງໝັ້ນໃນຂັ້ນຕອນການວາງແຜນກ່ຽວກັບດິນແດນ ແລະ ເມືອງໃນໄລຍະຍາວ ແລະ ປະຕິບັດການພັດທະນາກ່ຽວກັບພື້ນທີ່ ເຊິ່ງຮ່ວມເອົາການຄຸ້ມຄອງ ແລະ ແຜນການເຊື່ອມສານຊັບພະຍາກອນນໍ້າເປັນອັນໜຶ່ງອັນດຽວ, ຈະພິຈາລະນາ ເຂດທີ່ຕໍ່ເນື່ອງແຕ່ຊົນນະບົດເຖິງເມືອງ ຢູ່ໃນມາດຕາສ່ວນດິນແດນ ແລະ ທ້ອງຖິ່ນ, ລວມທັງການເຂົ້າຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ແລະ ຊຸມຊົນ.

73. ພວກເຮົາມຸ່ງໝັ້ນໃນການສົ່ງເສີມການປົກປັກຮັກສາ ແລະ ການນໍາໃຊ້ນໍ້າແບບຍືນຍົງໂດຍການອາໄສຊັບພະຍາກອນນໍ້າໃນເມືອງ, ອ້ອມເມືອງ ແລະ ພື້ນທີ່ໃນຊົນນະບົດ, ຈະຫຼຸດຜ່ອນ ແລະ ຮັກສານໍ້າເສຍ, ເຮັດໃຫ້ປະລິມານນໍ້າເສຍໜ້ອຍລົງ, ຈະສົ່ງເສີມການນໍາໃຊ້ນໍ້າຄືນໃໝ່ ແລະ ຈະເພີ່ມການຈັດເກັບນໍ້າ, ການຮັກສາໄວ້ ແລະ ເຮັດໃຫ້ມີກໍາລັງໃໝ່, ຈະພິຈາລະນາວຽກງານເອົານໍ້າມາໝູນ ໃຊ້ຄືນໃໝ່.

74. ພວກເຮົາມຸ່ງໝັ້ນທີ່ຈະສົ່ງເສີມໃນການຄຸ້ມຄອງສິ່ງເສດເຫຼືອຢູ່ອ່າວ (ທະເລ) ໃນທາງສິ່ງແວດລ້ອມ ແລະ ຫຼຸດຜ່ອນການເກີດໃໝ່ຂອງສິ່ງເສດເຫຼືອໂດຍການຫຼຸດຜ່ອນ, ນໍາໃຊ້ຄືນ ແລະ ປັບປ່ຽນຈາກສິ່ງເສດເຫຼືອ, ຈະຫຼຸດຜ່ອນດິນເປົ່າຫວ່າງ ແລະ ປ່ຽນແປງສິ່ງເສດເຫຼືອສູ່ພະລັງງານຫຼັງຈາກທີ່ສິ່ງເສດເຫຼືອບໍ່ສາມາດປັບມານໍາໃຊ້ຄືນໃໝ່ໄດ້ ຫຼື ຫຼັງຈາກວິທີນີ້ນໍາສິ່ງໃຫ້ເປັນຜົນທີ່ດີທີ່ສຸດຕໍ່ສິ່ງແວດລ້ອມ. ພວກເຮົາຍັງສືບຕໍ່ມຸ່ງໝັ້ນ ທີ່ຈະຫຼຸດຜ່ອນມົນລະພິດທີ່ມີຢູ່ໃນທະເລຜ່ານສິ່ງເສດເຫຼືອທີ່ຖືກປັບປຸງ ແລະ ການຄຸ້ມຄອງນໍ້າເສຍໃນພື້ນທີ່ແຄມຝັ່ງທະເລ.

75. ພວກເຮົາມຸ່ງໝັ້ນທີ່ຈະສະໜັບສະໜູນລັດຖະບານຂອງຊາດ, ພູມມິພາກ ແລະ ທ້ອງຖິ່ນຕາມຄວາມເໝາະສົມເພື່ອພັດທະນາພະລັງງານທີ່ສາມາດເຂົ້າຫາໄດ້ ແລະ ທົດແທນ, ຍືນຍົງ ແລະ ຮູບແບບການກໍ່ສ້າງ ແລະ ກໍ່ຕັ້ງພະລັງງານທີ່ມີຜົນ ແລະ ສົ່ງເສີມປະສິດທິພາບ ແລະ ການປົກປັກຮັກສາພະລັງງານ ເຊິ່ງມີຄວາມສໍາຄັນທີ່ສາມາດຫຼຸດຜ່ອນແກັດເຮືອນແກ້ວ ແລະ ການປ່ອຍອາຍກາກບອນສີດໍາ, ຮັບປະກັນຮູບແບບການຜະລິດ ແລະ ການບໍລິໂພກແບບຍືນຍົງ, ຊ່ວຍສ້າງອາຊີບໃໝ່ທີ່ຖາວອນ, ປັບປຸງສາທາລະນະສຸກ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍຂອງການສະໜອງພະລັງງານ.

76. ພວກເຮົາມຸ່ງໝັ້ນຈະນໍາໃຊ້ຊັບພະຍາກອນທໍາມະຊາດແບບຍືນຍົງ ແລະ ເນັ້ນໃສ່ປະສິດທິພາບຂອງຊັບພະຍາກອນວັດຖຸການກໍ່ສ້າງ ແລະ ວັດຖຸດິບ ເຊັ່ນ: ຄອນກຼີດ/ຊີມັງ, ໂລຫະ, ໄມ້, ແຮ່ທາດ ແລະ ດິນ. ພວກເຮົາມຸ່ງໝັ້ນທີ່ຈະກໍ່ຕັ້ງການຟື້ນຄືນວັດຖຸທີ່ປອດໄພ ແລະ ຈະເອົາສິ່ງອໍານວຍຄວາມສະດວກມາໃຊ້ຄືນ, ຈະສົ່ງເສີມການພັດທະນາການກໍ່ສ້າງ/ຕຶກອາຄານທີ່ສາມາດຟື້ນຟູ ແລະ ຍືນຍົງ ແລະ ຈະໃຫ້ບູລິມະສິດການນໍາໃຊ້ວັດສະດຸຂອງທ້ອງຖິ່ນທີ່ສາມາດນໍາໃຊ້ໄດ້ຄືນ ແລະ ບໍ່ເປັນພິດ ແລະ ນໍ້າສີທີ່ປາສະຈາກການຕື່ມສານຕະກົ່ວໃສ່. ແລະ ການຫຸ້ມຫໍ່.

77. ພວກເຮົາມຸ່ງໝັ້ນທີ່ຈະສ້າງຄວາມເຂັ້ມແຂງຄວາມທົນທານຂອງການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງ, ລວມທັງຜ່ານການພັດທະນາຂອງພື້ນຖານໂຄງລ່າງທີ່ມີຄຸນນະພາບ ແລະ ການວາງແຜນການກ່ຽວກັບດິນແດນ, ຈະຮັບຮອງ ແລະ ຈັດຕັ້ງປະຕິບັດແຜນການ ແລະ ນະໂຍບາຍເຊື່ອມສານການຕອບສະໜອງທາງດ້ານບົດບາດຂອງເພດຍິງ-ຊາຍ ແລະ ໄວອາຍຸ ແລະ ຫຼັກການທີ່ຖືເອົາລະບົບນິເວດເປັນພື້ນຖານທີ່ສອດຄ່ອງກັບຂອບແຜນງານ Sendai ເພື່ອການຫຼຸດຜ່ອນຄວາມສ່ຽງດ້ານໄພພິບັດ 2015-2030 ແລະ ໂດຍການລວມກະແສສໍາຄັນ ແລະ ຂໍ້ມູນຄວາມຮູ້ການຫຼຸດຜ່ອນຄວາມສ່ຽງດ້ານໄພພິບັດ ແລະ ການຄຸ້ມຄອງໃນທຸກໆລະດັບເພື່ອຫຼຸດຜ່ອນຄວາມບໍ່ໝັ້ນຄົງ ແລະ ຄວາມສ່ຽງ, ໂດຍສະເພາະໃນພື້ນທີ່ມີແນວໂນ້ມເກີດຄວາມສ່ຽງຂອງການຕັ້ງຖິ່ນຖານທັງໃນ ແລະ ນອກລະບົບ, ລວມທັງ ພື້ນທີ່ແອອັດ, ທີ່ສາມາດສ້າງເປັນຄອບຄົວ, ຊຸມຊົນ, ສະຖາບັນການສຶກສາ ແລະ ການບໍລິການ, ກະກຽມ, ຮັບຜິດຊອບ, ຮັບຮອງ ແລະ ຟື້ນຟູໄດ້ຢ່າງວ່ອງໄວຈາກຜົນຂອງອັນຕະລາຍ, ລວມມີອາການສະເທືອນໃຈ ຫຼື ຄວາມກົດດັນທີ່ແອບແຝງ. ພວກເຮົາຈະສົ່ງເສີມການພັດທະນາຂອງພື້ນຖານໂຄງລ່າງທີ່ທົນທານ ແລະ ມີປະສິດທິພາບທາງຊັບພະຍາກອນ ແລະ ຈະຫຼຸດຄວາມສ່ຽງ ແລະ ຜົນກະທົບຂອງໄພພິບັດ, ລວມທັງການເຮັດໃຫ້ກັບຄືນມາດັ່ງເດີມ ແລະ ການຍົກລະດັບຂອງການຕັ້ງຖິ່ນຖານນອກລະບົບ ແລະ ໃນບ່ອນແອອັດ. ພວກເຮົາຍັງຈະສົ່ງເສີມມາດຕະການເພື່ອສ້າງຄວາມເຂັ້ມແຂງ ແລະ ປັບປຸງຄືນວັດສະດຸໃນສາງຂອງທີ່ພັກອາໄສທີ່ມີຄວາມສ່ຽງ, ລວມມີໃນການຕັ້ງຖິ່ນຖານນອກລະບົບ ແລະ ເຂດແອອັດ, ເພື່ອເຮັດໃຫ້ທົນທານຕໍ່ໄພພິບັດ, ໃນການຮ່ວມມືກັບອໍານາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

78. ພວກເຮົາມຸ່ງໝັ້ນທີ່ຈະສົ່ງເສີມການປ່ຽນຈາກຫຼັກການ ການຕອບສະໜອງ ເປັນການປະຕິບັດຢ່າງຫ້າວຫັນຕໍ່ຄວາມສ່ຽງ, ອັນຕະລາຍ ແລະ ສັງຄົມທັງໝົດ ເຊັ່ນ: ຈະເພີ່ມຈິດສໍານຶກໃຫ້ທຸກຄົນຕໍ່ກັບຄວາມສ່ຽງ ແລະ

ຈະສົ່ງເສີມການລົງທຶນແບບ ex ante ເພື່ອປ້ອງກັນຄວາມສ່ຽງ ແລະ ສ້າງຄວາມທົນທານ ໃນຂະນະດຽວກັນກໍ່ ຍັງຈະຮັບປະກັນການຕອບສະໜອງໃນທ້ອງຖິ່ນຢ່າງມີປະສິດທິຜົນ ແລະ ທັນເວລາ ເພື່ອແກ້ໄຂຄວາມຕ້ອງການທັນທີທັນໃດຂອງຜົນລະເມືອງທີ່ຖືກກະທົບຈາກໄພພິບັດທາງທຳມະຊາດ ແລະ ມະນຸດສ້າງຂຶ້ນ ແລະ ຄວາມຂັດແຍ່ງ. ສິ່ງນີ້ຄວນຈະລວມຢູ່ໃນການເຊື່ອມສານຂອງຫຼັກການ " "ສ້າງເບື້ອງຫຼັງໃຫ້ດີຂຶ້ນ" ເຂົ້າເປັນຂັ້ນຕອນການຟື້ນຟູໄພພິບັດຂັ້ນສຸດທ້າຍ ເພື່ອເຊື່ອມສານເອົາຄວາມທົນທານຂອງອາຄານ, ມາດຖານຂອງດິນແດນ, ສິ່ງແວດລ້ອມ ແລະ ບົດຮຽນຈາກໄພພິບັດໃນອາດີດ, ພ້ອມກັບຈິດສຳນຶກຕໍ່ຄວາມສ່ຽງໃໝ່, ເຂົ້າເປັນແຜນການໃນອານາຄົດ.

79. ພວກເຮົາມຸ່ງໝັ້ນທີ່ຈະສົ່ງເສີມແຜນງານກ່ຽວກັບດິນຟ້າອາກາດໃນລະດັບສາກົນ, ຊາດ, ພາກ ແລະ ທ້ອງຖິ່ນ, ລວມທັງການບັນເທົາ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ຈະສະໜັບສະໜູນຄວາມພະຍາຍາມໃນການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງ, ຜູ້ພັກອາໄສ ແລະ ພາກສ່ວນທີ່ມີສ່ວນຮ່ວມໃນທ້ອງຖິ່ນທັງໝົດແມ່ນຜູ້ຈັດຕັ້ງປະຕິບັດທີ່ສຳຄັນ. ພວກເຮົາຈະສືບຕໍ່ສົ່ງເສີມການກໍ່ສ້າງຄວາມທົນທານ ແລະ ຫຼຸດຜ່ອນການປ່ອຍອາຍແກັດຂອງເຮືອນແກ້ວຈາກພາກສ່ວນທັງໝົດທີ່ມີສ່ວນກ່ຽວຂ້ອງ. ມາດຕະການເຊັ່ນນີ້ຈະເປັນຄວາມສະໝໍ່າສະເໝີກັບເປົ້າໝາຍຂອງຂໍ້ຕົກລົງ Paris ຖືກຮັບຮອງພາຍໃຕ້ສົນທິສັນຍາສະຫະປະຊາຊາດວ່າດ້ວຍການປ່ຽນແປງດິນຟ້າອາກາດ, ລວມມີການຖືເອົາການເພີ່ມຂຶ້ນຂອງອຸ່ນຫະພູມທີ່ສະເລ່ຍໃນທົ່ວໂລກໃຫ້ຕ່ຳລົງ 2 ອົງສາເຊ ເກີນລະດັບທາງອຸດສະຫະກຳ ແລະ ຈະຕິດຕາມຄວາມພະຍາຍາມຈຳກັດອຸນຫະພູມເພີ່ມຂຶ້ນເຖິງ 1.5 ອົງສາເຊ ເກີນລະດັບທີ່ກຳນົດໄວ້ທາງອຸດສະຫະກຳ.

80. ພວກເຮົາມຸ່ງໝັ້ນໃນການສົ່ງເສີມຂັ້ນຕອນຂອງແຜນການດັດແປງໃນໄລຍະປານກາງຫາໄລຍະຍາວ, ພ້ອມກັນນີ້ການປະເມີນຂອງຜົນກະທົບ ແລະ ຄວາມບໍ່ໝັ້ນຄົງດ້ານສະພາບອາກາດໃນລະດັບເມືອງ, ໄດ້ແຈ້ງແຜນການດັດແປງ, ນະໂຍບາຍ, ໂຄງການ ແລະ ແຜນງານທີ່ສ້າງຄວາມສາມາດທົນທານຂອງຜູ້ອາໄສໃນເມືອງ, ລວມມີຜ່ານການນຳໃຊ້ຂອງການດັດແປງທີ່ຖືເອົາລະບົບນິເວດເປັນຫຼັກ.

ການຈັດຕັ້ງປະຕິບັດເພື່ອໃຫ້ມີປະສິດທິພາບ

81. ພວກເຮົາຮັບຮູ້ວ່າ ການທີ່ຈະເຮັດໃຫ້ຄຳໝັ້ນສັນຍາທີ່ກຳນົດໄວ້ຢູ່ໃນວາລະການພັດທະນາຕົວເມືອງສະບັບໃໝ່ປະກົດຜົນເປັນຈິງໄດ້ນັ້ນ ພວກເຮົາຈະຕ້ອງມີຂອບແຜນງານນະໂຍບາຍການຈັດຕັ້ງປະຕິບັດ ຢູ່ໃນລະດັບຊາດ, ລະດັບພາກ ແລະ ລະດັບທ້ອງຖິ່ນ ທີ່ມີການເຊື່ອມສານເຂົ້າກັບການວາງແຜນ ແບບມີສ່ວນຮ່ວມ ແລະ ການຄຸ້ມຄອງການພັດທະນາເຂດຕົວເມືອງ ແລະ ເຄື່ອງມືການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ, ຮັບການສະໜັບສະໜູນຈາກການຮ່ວມມືລະຫວ່າງປະເທດ ແລະ ຄວາມພະຍາຍາມໃນການພັດທະນາ ຂີດຄວາມສາມາດ ລວມທັງການແລກປ່ຽນວິທີການຈັດຕັ້ງປະຕິບັດທີ່ດີ, ນະໂຍບາຍ ແລະ ແຜນງານລະຫວ່າງລັດຖະບານຕ່າງໆຢູ່ທຸກຂັ້ນ.

82. ພວກເຮົາເຊື້ອເຊີນໃຫ້ນິຕິບຸກຄົນ ແລະ ອົງການຈັດຕັ້ງລະດັບພາກພື້ນ ແລະ ສາກົນ ເຊິ່ງປະ ກອບມີບັນດາອົງການຈັດຕັ້ງທີ່ຢູ່ໃນເຄືອຂ່າຍຂອງອົງການສະຫະປະຊາຊາດ ແລະ ຂໍ້ຕົກລົງດ້ານສິ່ງແວດ ລ້ອມຫຼາຍຝ່າຍ, ຄູ່ຮ່ວມພັດທະນາ, ສະຖາບັນການເງິນສາກົນ ແລະ ຫຼາຍຝ່າຍ, ທະນາຄານພັດທະນາ ພາກພື້ນ, ຂະແໜງການພາກເອກະຊົນ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ມີການເສີມຂະຫຍາຍການປະ ສານງານກັນກ່ຽວກັບແຜນງານ ແລະ ຍຸດທະສາການພັດທະນາຊົນນະບົດ ແລະ ຕົວເມືອງ ເພື່ອນຳໃຊ້ ວິທີການແບບເຊື່ອມສານເພື່ອສ້າງຕົວເມືອງແບບຍືນຍົງ ແລະ ເຊື່ອມການຈັດຕັ້ງປະຕິບັດວາລະການ ພັດທະນາຕົວເມືອງສະບັບໃໝ່.

83. ໃນເລື່ອງນີ້, ພວກເຮົາເນັ້ນໃສ່ຄວາມຈຳເປັນທີ່ຈະຕ້ອງປັບປຸງການເຊື່ອມໂຍງ ແລະ ການປະສານງານຂອງເຄືອຂ່າຍອົງການສະຫະປະຊາຊາດ ໃນຂົງເຂດການພັດທະນາຕົວເມືອງແບບຍືນຍົງ ພາຍໃຕ້ຂອບແຜນງານການວາງແຜນທາງຍຸດທະສາດ, ການຈັດຕັ້ງປະຕິບັດ ແລະ ການລາຍງານ ດັ່ງທີ່ເນັ້ນໄວ້ໃນວັກທີ 88 ຂອງວາລະການພັດທະນາແບບຍືນຍົງ ປີ 2030.

84. ພວກເຮົາຮຽກຮ້ອງໃຫ້ບັນດາລັດຕ້ອງຮ່ວມກັນສະກັດກັ້ນການປະກາດໃຊ້ ແລະ ການນຳໃຊ້ມາດຕະການທາງດ້ານເສດຖະກິດ, ການເງິນ ຫຼື ການຄ້າ ຕາມລຳພັງໃຈ ໂດຍທີ່ບໍ່ສອດຄ່ອງກັບ ກົດໝາຍລະຫວ່າງປະເທດ ແລະ ກົດບັດຂອງອົງການສະຫະປະຊາຊາດ ເຊິ່ງເປັນສິ່ງກີດຂວາງຄວາມສຳເລັດ ຢ່າງເຕັມສ່ວນຂອງການພັດທະນາເສດຖະກິດ ແລະ ສັງຄົມ, ໂດຍສະເພາະ ໃນປະເທດທີ່ກຳລັງພັດທະ ນາ.

ການສ້າງໂຄງປະກອບການປົກຄອງຕົວເມືອງ: ການສ້າງຂອບແຜນງານການສະໜັບສະໜູນ

85. ພວກເຮົາຮັບຮູ້ຫຼັກການ ແລະ ຍຸດທະສາດທີ່ລະບຸໄວ້ຢູ່ໃນຄູ່ມືສາກົນວ່າດ້ວຍການກະຈາຍອຳນາດ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ ແລະ ຄູ່ມືສາກົນວ່າດ້ວຍ ການເຂົ້າເຖິງການບໍລິການຂັ້ນພື້ນຖານສຳລັບໝົດທຸກຄົນ ເຊິ່ງໄດ້ຖືກຮັບຮອງໂດຍສະພາປົກຄອງ ຂອງ ແຜນງານການຕັ້ງຖິ່ນຖານຂອງມະນຸດແຫ່ງອົງການສະຫະປະຊາຊາດ ໃນມະຕິ 21/3 ລົງວັນທີ 20 ເມສາ 2007[15] ແລະ 22/8 ລົງວັນທີ 3 ເມສາ 2009.[16]

86. ພວກເຮົາຈະເຊື່ອມສານການຈັດຕັ້ງປະຕິບັດວາລະການພັດທະນາຕົວເມືອງສະບັບໃໝ່ ຢ່າງມີປະສິດທິພາບ ໃນນະໂຍບາຍການພັດທະນາດິນແດນ ແລະ ຕົວເມືອງແບບມີສ່ວນຮ່ວມ, ປະຕິບັດໄດ້ ແລະ ກວມລວມຕາມຄວາມເໝາະສົມ, ເຊື່ອມການພັດທະນາຕົວເມືອງໃນດ້ານຕ່າງໆທີ່ເປັນພາກສ່ວນໜຶ່ງຂອງແຜນການ ແລະ ຍຸດທະສາດການພັດທະນາແບບເຊື່ອມສານ ເຊິ່ງໄດ້ຮັບການສະໜັບສະໜູນໂດຍຂອບແຜນງານກ່ຽວກັບລະບຽບການ ແລະ ສະຖາບັນລະດັບຊາດ, ລະດັບພາກ ແລະ ລະດັບທ້ອງຖິ່ນ, ຮັບປະກັນວ່າມີການເຊື່ອມໂຍງກັບກົນໄກການເງິນຢ່າງໂປ່ງໃສ ແລະ ມີຄວາມຮັບຜິດຊອບ.

87. ພວກເຮົາຈະປັບປຸງການປະສານງານ ແລະ ການຮ່ວມມືພາຍໃນລັດຖະບານລະດັບທ້ອງຖິ່ນ, ລະດັບພາກ ແລະ ລະດັບຊາດໃຫ້ເຂັ້ມແຂງຍິ່ງຂຶ້ນ ຜ່ານກົນໄກການປຶກສາຫາລືຢູ່ຫຼາຍຂັ້ນ ແລະ ໂດຍການກຳນົດຄວາມສາມາດ, ເຄື່ອງມື ແລະ ຊັບພະຍາກອນສຳລັບລັດຖະບານໃນແຕ່ລະລະດັບຢ່າງຈະແຈ້ງ.

88. ພວກເຮົາຈະຮັບປະກັນຄວາມສອດຄ່ອງລະຫວ່າງເປົ້າໝາຍ ແລະ ມາດຕະການດ້ານນະໂຍບາຍຂອງຂະແໜງການຕ່າງໆ ເຊັ່ນ: ການພັດທະນາຊົນນະບົດ, ການນຳໃຊ້ທີ່ດິນ, ການຮັບປະກັນສະບຽງອາຫານ ແລະ ໂພສະນາການ, ການຄຸ້ມຄອງຊັບພະຍາກອນທຳມະຊາດ, ການສະໜອງການບໍລິການສາທາລະນະ, ນ້ຳ ແລະ ສຸຂະອະນາໄມ, ສຸຂະພາບ, ສິ່ງແວດລ້ອມ, ພະລັງງານ, ນະໂຍບາຍດ້ານທີ່ພັກອາໄສ ແລະ ການເຄື່ອນຍ້າຍຖິ່ນຖານ, ຢູ່ໃນຂັ້ນ ແລະ ລະດັບຕ່າງໆຂອງການບໍລິຫານທາງການເມືອງໃນທົ່ວຊາຍແດນທີ່ມີການບໍລິຫານຄຸ້ມຄອງ ແລະ ພິຈາລະນາຂົງເຂດການເຮັດວຽກຢ່າງເໝາະສົມ ເພື່ອແນ່ໃສ່ສ້າງຄວາມເຂັ້ມແຂງວິທີການສ້າງຕົວເມືອງ ແລະ ຈັດຕັ້ງປະຕິບັດຍຸດທະສາດການວາງແຜນການພັດທະນາດິນແດນ ແລະ ຕົວເມືອງ ແບບເຊື່ອມສານ ເຊິ່ງຖືວ່າເປັນປັດໄຈທີ່ສຳຄັນ.

89. ພວກເຮົາຈະນຳໃຊ້ມາດຕະການເພື່ອສ້າງຂອບແຜນງານດ້ານນະໂຍບາຍ ແລະ ດ້ານກົດໝາຍ ໂດຍອີງໃສ່ຫຼັກການຄວາມສະເໝີພາບ ແລະ ບໍ່ມີການຈຳແນກ ເພື່ອຍົກລະດັບຄວາມສາມາດຂອງລັດຖະບານໃນການຈັດຕັ້ງປະຕິບັດ ນະໂຍບາຍການພັດທະນາຕົວເມືອງແຫ່ງຊາດ ຢ່າງມີປະສິດທິພາບຕາມຄວາມ ເໝາະສົມ ແລະ ສ້າງຄວາມເຂັ້ມແຂງໃຫ້ລັດຖະບານເຫຼົ່ານັ້ນ ເຊິ່ງເປັນຜູ້ສ້າງນະໂຍບາຍ ແລະ ເປັນຜູ້ຕັດສິນບັນຫາ , ຮັບປະກັນການກະຈາຍອຳນາດດ້ານບໍລິຫານ, ດ້ານການເມືອງ ແລະ ດ້ານງົບປະມານຢ່າງເໝາະສົມ ໂດຍອີງໃສ່ຫຼັກການການຊ່ວຍເຫຼືອອຸ້ມຊູ.

90. ໂດຍສອດຄ່ອງກັບນິຕິກຳແຫ່ງຊາດຂອງປະເທດຕ່າງໆ, ພວກເຮົາຈະສະໜັບສະໜູນການສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມອາດສາມາດຂອງລັດຖະບານໃນຂັ້ນທ້ອງຖິ່ນ ແລະ ຂັ້ນພາກ ເພື່ອຈັດຕັ້ງປະຕິບັດການປົກຄອງໃນຂັ້ນນະຄອນຫຼວງ ແລະ ຂັ້ນທ້ອງຖິ່ນຢ່າງມີປະສິດທິພາບ, ຊາຍແດນທີ່ມີການບໍລິຫານຄຸ້ມຄອງ ແລະ ຂຶ້ນກັບຂອບເຂດການເຮັດວຽກ, ຮັບປະກັນການມີສ່ວນຮ່ວມຂອງລັດຖະບານໃນຂັ້ນທ້ອງຖິ່ນ ແລະ ຂັ້ນພາກໃນການຕັດສິນບັນຫາໃດໜຶ່ງ ແລະ ການປະຕິບັດວຽກງານ ເພື່ອໃຫ້ລັດຖະບານໃນຂັ້ນເຫຼົ່ານັ້ນມີອຳນາດ ແລະ ຊັບພະຍາກອນທີ່ຈຳເປັນໃນການຄຸ້ມຄອງຕົວເມືອງ, ນະຄອນຫຼວງ ແລະ ດິນແດນ. ພວກເຮົາຈະສົ່ງເສີມການປົກຄອງໃນເຂດນະຄອນຫຼວງ ໂດຍນຳໃຊ້ຂອບແຜນງານດ້ານກົດໝາຍແບບກວມລວມ ແລະ ກວ້າງຂວາງ ແລະ ກົນໄກດ້ານການເງິນທີ່ເຊື່ອຖືໄດ້ ລວມໄປເຖິງການຄຸ້ມຄອງໜີ້ແບບຍືນຍົງ ຕາມຄວາມເໝາະສົມ. ພວກເຮົາຈະນຳໃຊ້ມາດຕະການເພື່ອສົ່ງເສີມການມີສ່ວນຮ່ວມຢ່າງມີປະສິດທິພາບ ແລະ ເຕັມສ່ວນຂອງແມ່ຍິງ ແລະ ສິດທິເທົ່າທຽມກັນໃນທຸກຂົງເຂດ ແລະ ໃນການເປັນຜູ້ນຳໃນທຸກລະດັບຂອງການຕັດສິນບັນຫາ ລວມໄປເຖິງລັດຖະບານໃນຂັ້ນທ້ອງຖິ່ນ.

[15] See Official Records of the General Assembly, Sixty-second Session, Supplement No. 8 (A/62/8), annex I.
[16] Ibid., Sixty-fourth Session, Supplement No. 8 (A/64/8), annex I.



Street in old town Luang Prabang, Laos at sunset ©Shutterstock

91. ພວກເຮົາຈະສະໜັບສະໜູນລັດຖະບານໃນຂັ້ນທ້ອງຖິ່ນໃນການກຳນົດໂຄງສ້າງການຄຸ້ມຄອງ ແລະ ການບໍລິຫານຂອງຕົນເອງຂອງລັດຖະບານເຫຼົ່ານັ້ນ ໂດຍສອດຄ່ອງກັບນິຕິກຳ ແລະ ນະໂຍບາຍແຫ່ງຊາດ ຕາມຄວາມເໝາະສົມ ເພື່ອແນໃສ່ການປັບຕົວເຂົ້າກັບຄວາມຕ້ອງການຂອງທ້ອງຖິ່ນ. ພວກເຮົາຈະສະໜັບສະໜູນຂອບແຜນງານຕາມລະບຽບການຢ່າງເໝາະສົມ ແລະ ສະໜັບສະໜູນລັດຖະບານໃນຂັ້ນທ້ອງຖິ່ນໃນການເປັນຄູ່ຮ່ວມພັດທະນາກັບຊຸມຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ຂະແໜງການພາກເອກະຊົນ ເພື່ອພັດທະນາ ແລະ ຄຸ້ມຄອງການບໍລິການ ແລະ ພື້ນຖານໂຄງລ່າງພື້ນຖານ, ຮັບປະກັນວ່າ ຜົນປະໂຫຍດຂອງປະຊາຊົນໄດ້ຮັບການຮັກສາໄວ້ ແລະ ເປົ້າໝາຍທີ່ຮັດກຸມ, ຄວາມຮັບຜິດຊອບ ແລະ ກົນໄກຄວາມຮັບຜິດຊອບ ໄດ້ຮັບການກຳນົດຢ່າງຈະແຈ້ງ.

92. ພວກເຮົາຈະສົ່ງເສີມວິທີການຕອບສະໜອງທາງດ້ານບົດບາດຍິງ-ຊາຍ ແລະ ໄວອາຍຸແບບມີສ່ວນຮ່ວມ ຢູ່ໃນທຸກຂັ້ນຂອງນະໂຍບາຍ ແລະ ຂັ້ນຕອນການວາງແຜນການພັດທະນາດິນແດນ ແລະ ຕົວເມືອງ ຈາກແນວຄວາມຄິດໄປສູ່ການອອກແບບ, ການຈັດສັນງົບປະມານ, ການຈັດຕັ້ງປະຕິບັດ, ການປະເມີນຜົນ ແລະ ການທົບທວນ ເຊິ່ງເປັນຮາກຖານໃນຮູບແບບໃໝ່ຂອງການເປັນຄູ່ຮ່ວມພັດທະນາໂດຍກົງລະຫວ່າງລັດຖະບານໃນທຸກຂັ້ນ ແລະ ອົງການຈັດຕັ້ງທາງສັງຄົມ ໂດຍຜ່ານກົນໄກທີ່ມີຢູ່ຢ່າງກວ້າງຂວາງ ແລະ ມີປະສິດທິພາບ ແລະ ເວທີການຮ່ວມມື ແລະ ການປຶກສາຫາລືທີ່ເປີດກວ້າງສຳລັບໝົດທຸກຄົນ, ນຳໃຊ້ເທັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານທີ່ສາມາດເຂົ້າເຖິງໄດ້.

ການວາງແຜນ ແລະ ການຄຸ້ມຄອງການພັດທະນາເຂດຕົວເມືອງ

93. ພວກເຮົາຮັບຮູ້ຫຼັກການ ແລະ ຍຸດທະສາດສຳລັບການວາງແຜນການພັດທະນາຕົວເມືອງ ແລະ ດິນແດນ ທີ່ຖືກລະບຸໄວ້ໃນຄູ່ມືສາກົນວ່າດ້ວຍການວາງແຜນການພັດທະນາຕົວເມືອງ ແລະ ດິນແດນ ເຊິ່ງຖືກຮັບຮອງໂດຍສະພາປົກຄອງຂອງແຜນງານການຕັ້ງຖິ່ນຖານຂອງມະນຸດແຫ່ງອົງການສະຫະປະຊາຊາດໃນມະຕິ 25/6 ລົງວັນທີ 23 ເມສາ 2015.[17]

94. ພວກເຮົາຈະປະຕິບັດການວາງແຜນແບບເຊື່ອມສານ ເຊິ່ງມີເປົ້າໝາຍສ້າງຄວາມດຸ່ນດ່ຽງລະຫວ່າງຄວາມຕ້ອງການໃນໄລຍະສັ້ນ ແລະ ຜົນໄດ້ຮັບທີ່ຕ້ອງການໃນໄລຍະຍາວຄື: ເສດຖະກິດທີ່ສາມາດແຂ່ງຂັນໄດ້, ຄຸນນະພາບຊີວິດໄດ້ຮັບການຍົກລະດັບ ແລະ ສິ່ງແວດລ້ອມມີຄວາມຍືນຍົງ. ນອກຈາກນີ້, ພວກເຮົາຈະພະຍາຍາມສ້າງຄວາມຢືດຢຸ່ນໃນແຜນການຂອງພວກເຮົາ ເພື່ອດັດປັບເຂົ້າກັບການປ່ຽນແປງສະພາບເສດຖະກິດ ແລະ ສັງຄົມຕາມແຕ່ລະໄລຍະເວລາ. ພວກເຮົາຈະຈັດຕັ້ງປະຕິບັດ ແລະ ປະເມີນຜົນຢ່າງເປັນລະບົບ ສຳລັບແຜນການເຫຼົ່ານີ້ໃນຂະນະດຽວກັນ ກໍພະຍາຍາມສ້າງນະວັດຕະກຳດ້ານເທັກໂນໂລຊີ ແລະ ສ້າງສະພາບແວດລ້ອມສຳລັບການດຳລົງຊີວິດທີ່ດີກວ່າ.

95. ພວກເຮົາຈະສະໜັບສະໜູນການຈັດຕັ້ງປະຕິບັດແຜນການ ແລະ ນະໂຍບາຍການພັດທະນາດິນແດນແບບເຊື່ອມສານ, ໃນຫຼາຍໆຈຸດ ແລະ ມີຄວາມດຸ່ນດ່ຽງ, ສົ່ງເສີມການຮ່ວມມື ແລະ ການສະໜັບສະໜູນເຊິ່ງກັນ ແລະ ກັນລະຫວ່າງບັນດາຕົວເມືອງຕ່າງໆ ແລະ ການຕັ້ງຖິ່ນຖານຂອງມະນຸດ, ສ້າງຄວາມເຂັ້ມແຂງບົດບາດຂອງຕົວເມືອງຂະໜາດນ້ອຍ ແລະ ກາງ ໃນການຍົກລະດັບລະບົບຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພສະນາການ, ສະໜອງການເຂົ້າເຖິງທີ່ຢູ່ອາໄສ, ພື້ນຖານໂຄງລ່າງ ແລະ ການບໍລິການແບບຍືນຍົງ, ລາຄາພໍຟັງ, ພຽງພໍ, ໝັ້ນຄົງທົນທານ ແລະ ປອດໄພ, ອຳນວຍຄວາມສະດວກໃນການເຊື່ອມໂຍງການຄ້າຢ່າງມີປະສິດທິພາບ ແລະ ມີຄວາມຕໍ່ເນື່ອງລະຫວ່າງຊົນນະບົດ ແລະ ຕົວເມືອງ ແລະ ຮັບປະກັນວ່າ ຊາວກະສິກອນ ແລະ ຊາວປະມົງໄດ້ຮັບການເຊື່ອມໂຍງຕະຫຼາດ ແລະ ຕ່ອງໂສ້ດ້ານຄຸນຄ່າໃນລະດັບທ້ອງຖິ່ນ, ລະດັບພາກ, ລະດັບຊາດ, ລະດັບພາກພື້ນ ແລະ ລະດັບໂລກ. ນອກຈາກນີ້, ພວກເຮົາຍັງຈະສະໜັບສະໜູນກະສິກຳ ແລະ ການເຮັດກະສິກຳໃນຕົວເມືອງ, ຕະຫຼອດເຖິງການຜະລິດ ແລະ ການບໍລິໂພກແບບຍືນຍົງ, ເຂົ້າທ້ອງຖິ່ນ ແລະ ມີຄວາມຮັບຜິດຊອບ ແລະ ການພົວພັນກັບສັງຄົມ ໂດຍຜ່ານເຄືອຂ່າຍການຄ້າ ແລະ ຕະຫຼາດທ້ອງຖິ່ນທີ່ສາມາດເຂົ້າເຖິງໄດ້ ເພື່ອເປັນທາງເລືອກສຳລັບການປະສ່ວນຕໍ່ກັບຄວາມຍືນຍົງ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ.

---

[17] Ibid., Seventieth Session, Supplement No. 8 (A/70/8), annex.

96. ພວກເຮົາຈະສົ່ງເສີມການຈັດຕັ້ງປະຕິບັດແຜນການການພັດທະນາດິນແດນ ແລະ ຕົວເມືອງແບບຍືນຍົງ ລວມທັງແຜນການພັດທະນາເຫດສະບານ ແລະ ເຂດຕົວເມືອງ ເພື່ອສົ່ງເສີມການເຮັດວຽກຮ່ວມກັນ ແລະ ການພົວພັນລະຫວ່າງເຂດຕົວເມືອງໃນຂະໜາດຕ່າງໆ ແລະ ສະພາບແວດລ້ອມຊານເມືອງ ແລະ ຊົນນະບົດ ລວມທັງເຂດຊາຍແດນ ແລະ ພວກເຮົາຈະສະໜັບສະໜູນການພັດທະນາໂຄງການພັດທະນາພື້ນຖານໂຄງລ່າງໃນລະດັບພາກພື້ນແບບຍືນຍົງ ເຊິ່ງຈະກະຕຸ້ນການຜະລິດທາງເສດຖະກິດແບບຍືນຍົງ, ການສົ່ງເສີມການເຕີບໂຕຂອງພາກພື້ນຢ່າງເທົ່າທຽມໃນທົ່ວຊົນນະບົດ ແລະ ຕົວເມືອງ. ໃນດ້ານນີ້, ພວກເຮົາຈະສົ່ງເສີມການເປັນຄູ່ຮ່ວມພັດທະນາລະຫວ່າງຊົນນະບົດ ແລະ ຕົວເມືອງ ແລະ ກົນໄກການຮ່ວມມືຫຼາຍຝ່າຍໂດຍອີງໃສ່ເຂດຕົວເມືອງ ແລະ ດິນແດນ ເຊິ່ງຈະເປັນເຄື່ອງມືທີ່ມີປະສິດທິພາບສຳລັບການປະຕິບັດໜ້າທີ່ການບໍລິຫານເທດສະບານ ແລະ ນະຄອນຫຼວງ, ສະໜອງບໍລິການສາທາລະນະ ແລະ ສົ່ງເສີມການພັດທະນາໃນລະດັບພາກພື້ນ ແລະ ທ້ອງຖິ່ນ.

97. ພວກເຮົາຈະສະໜັບສະໜູນການຂະຫຍາຍຕົວເມືອງທີ່ໄປຕາມແຜນການທີ່ວາງໄວ້ ແລະ ຈັດບຸລິມະສິດການຟື້ນຟູ ແລະ ການປັບປຸງເຂດຕົວເມືອງຕາມຄວາມເໝາະສົມ ລວມທັງການປັບປຸງຊຸມຊົນແອອັດ ແລະ ການຕັ້ງຖິ່ນຖານທີ່ບໍ່ເປັນທາງການ, ການສະໜອງການກໍ່ສ້າງ ແລະ ສະຖານທີ່ສາທາລະນະທີ່ມີຄຸນນະພາບສູງ, ການສົ່ງເສີມວິທີການແບບມີສ່ວນຮ່ວມ ແລະ ເຊື່ອມສານກັບພາກສ່ວນກ່ຽວຂ້ອງ ແລະ ຜູ້ທີ່ຢູ່ອາໄສ ແລະ ຫຼີກລ່ຽງການແບ່ງແຍກທາງເສດຖະກິດ-ສັງຄົມ ແລະ ພື້ນທີ່, ໃນຂະນະດຽວກັນກໍຮັກສາມໍລະດົກທາງດ້ານວັດທະນະທຳ ແລະ ປ້ອງກັນ ແລະ ຈຳກັດການຂະຫຍາຍຕົວເມືອງທີ່ບໍ່ສາມາດຄວບຄຸມໄດ້.

98. ພວກເຮົາຈະສະໜັບສະໜູນການວາງແຜນພັດທະນາຕົວເມືອງ ແລະ ດິນແດນແບບເຊື່ອມສານ ລວມທັງການຂະຫຍາຍຕົວເມືອງຕາມແຜນການທີ່ວາງໄວ້ ໂດຍອີງໃສ່ຫຼັກການຄວາມສະເໝີພາບ, ຄວາມມີປະສິດທິພາບ ແລະ ຄວາມຍືນຍົງຂອງການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ຄວາມເປັນປຶກແຜ່ນ, ຄວາມໜາແໜ້ນ ແລະ ການເຊື່ອມໂຍງທີ່ເໝາະສົມ ແລະ ການນຳໃຊ້ພື້ນທີ່ ເຊັ່ນດຽວກັນກັບການນຳໃຊ້ທາງສັງຄົມ ແລະ ເສດຖະກິດໃນເຂດທີ່ຖືກສ້າງຂຶ້ນ ເພື່ອປ້ອງກັນການຂະຫຍາຍຕົວເມືອງທີ່ບໍ່ສາມາດຄວບຄຸມໄດ້, ຫຼຸດຜ່ອນຄວາມທ້າທາຍ ແລະ ຄວາມຈຳເປັນໃນການເດີນທາງ ແລະ ການສະໜອງການບໍລິການຕໍ່ຫົວຄົນ ແລະ ຄວາມໜາແໜ້ນ ແລະ ເສດຖະກິດຂອງຊຸມຊົນ ຕາມຄວາມເໝາະສົມ.

99. ພວກເຮົາຈະສະໜັບສະໜູນການຈັດຕັ້ງປະຕິບັດຍຸດທະສາດການວາງແຜນການພັດທະນາຕົວເມືອງຕາມຄວາມເໝາະສົມ ທີ່ອຳນວຍຄວາມສະດວກໃຫ້ແກ່ສັງຄົມໂດຍຜ່ານການສະໜອງທາງເລືອກດ້ານທີ່ພັກອາໄສລາຄາທີ່ສາມາດເຂົ້າເຖິງໄດ້ ພ້ອມກັບເປີດໂອກາດໃຫ້ເຂົ້າເຖິງການບໍລິການຂັ້ນພື້ນຖານທີ່ມີຄຸນນະພາບ ແລະ ພື້ນທີ່ສາທາລະນະສຳລັບໝົດທຸກຄົນ, ສົ່ງເສີມຄວາມປອດໄພ ແລະ ຄວາມໝັ້ນຄົງ ແລະ ສົ່ງເສີມການພົວພັນທາງສັງຄົມ ແລະ ລະຫວ່າງໄວ ແລະ ການເຫັນຄຸນຄ່າຄວາມຫຼາກຫຼາຍ. ພວກເຮົາຈະມີການຝຶກອົບຮົມ ແລະ ການສະໜັບສະໜູນທີ່ເໝາະສົມສຳລັບຜູ້ຊ່ຽວຊານດ້ານການສະໜອງບໍລິການ ແລະ ຊຸມຊົນໃນເຂດທີ່ໄດ້ຮັບຜົນກະທົບຈາກຄວາມຮຸນແຮງໃນຕົວເມືອງ.

100. ພວກເຮົາຈະສະໜັບສະໜູນການສະໜອງເຄືອຂ່າຍທີ່ອອກທີ່ອອກແບບຖະໜົນທີ່ປອດໄພ, ເຂົ້າເຖິງໄດ້, ສີຂຽວ ແລະ ມີຄຸນນະພາບ ແລະ ສະຖານທີ່ສາທາລະນະອື່ນໆ ທີ່ສາມາດເຂົ້າເຖິງໄດ້ສຳລັບໝົດທຸກຄົນ ແລະ ປອດອາດສະຍາກຳ ແລະ ຄວາມຮຸນແຮງ ລວມທັງການລ່ວງລະເມີດທາງເພດ ແລະ ຄວາມຮຸນແຮງທາງເພດ, ການພິຈາລະນາຈຳນວນປະຊາກອນ ແລະ ມາດຕະການທີ່ອະນຸຍາດໃຫ້ນຳໃຊ້ພື້ນທີ່ທາງຖະໜົນເພື່ອການຄ້າ, ການສົ່ງເສີມຕະຫຼາດ ແລະ ການຄ້າໃນທ້ອງຖິ່ນທີ່ເປັນທາງການ ແລະ ບໍ່ເປັນທາງການ ເຊັ່ນດຽວກັບການລິເລີ່ມຕ່າງໆໃນຊຸມຊົນ ທີ່ບໍ່ສະແຫວງຫາຜົນກຳໄລ, ການໃຫ້ປະຊາຊົນໄດ້ນຳໃຊ້ພື້ນທີ່ສາທາລະນະ ແລະ ການສົ່ງເສີມການຍ່າງ ແລະ ການຂີ່ລົດຖີບ ໂດຍມີເປົ້າໝາຍປັບປຸງສຸຂະພາບ ແລະ ຊີວິດການເປັນຢູ່.

101. ພວກເຮົາຈະເຊື່ອມສານການຫຼຸດຜ່ອນຄວາມສ່ຽງໄພພິບັດ ແລະ ມາດຕະການ ແລະ ການພິຈາລະນາເລື່ອງການຫຼຸດຜ່ອນ ແລະ ການປັບຕົວເຂົ້າກັບການປ່ຽນແປງຂອງດິນຟ້າອາກາດ ໃຫ້ເຂົ້າກັບຂະບວນການວາງແຜນ ແລະ ການພັດທະນາດິນແດນ ແລະ ຕົວເມືອງໂດຍຄຳນຶງເຖິງບົດບາດຍິງ-ຊາຍ ແລະ ໄວອາຍຸ ລວມທັງ ການປ່ອຍອາຍພິດເຮືອນແກ້ວ, ການອອກແບບພື້ນທີ່, ສິ່ງປຸກສ້າງ ແລະ ການກໍ່ສ້າງ,

ການບໍລິການ ແລະ ພື້ນຖານໂຄງລ່າງ ແລະ ການແກ້ໄຂດ້ວຍວິທີທຳມະຊາດ ຢ່າງມີປະສິດທິພາບ ແລະ ມີຄວາມທົນທານ. ພວກເຮົາຈະສົ່ງເສີມການຮ່ວມມື ແລະ ການປະສານງານລະຫວ່າງຂະແໜງການຕ່າງໆ ແລະ ສ້າງຄວາມສາມາດໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ ເພື່ອພັດທະນາ ແລະ ຈັດຕັ້ງປະຕິບັດແຜນການຮັບມື ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ ເຊັ່ນ: ການປະເມີນຄວາມສ່ຽງ ທີ່ກ່ຽວຂ້ອງກັບທີ່ຕັ້ງຂອງສິ່ງອຳນວຍຄວາມສະດວກສາທາລະນະໃນປະຈຸບັນ ແລະ ອະນາຄົດ ແລະ ສ້າງຂັ້ນຕອນການເຄື່ອນຍ້າຍຢ່າງພຽງພໍ ໃນເວລາເກີດເຫດສຸກເສີນ.

102. ພວກເຮົາຈະພະຍາຍາມປັບປຸງຄວາມສາມາດສຳລັບການອອກແບບ ແລະ ວາງແຜນພັດທະນາຕົວເມືອງ ແລະ ການສະໜອງການຝຶກອົບຮົມໃຫ້ແກ່ຜູ້ວາງແຜນພັດທະນາຕົວເມືອງໃນລະດັບຊາດ, ລະດັບພາກ ແລະ ລະດັບທ້ອງຖິ່ນ.

103. ພວກເຮົາຈະເຊື່ອມສານມາດຕະການແບບມີສ່ວນຮ່ວມສຳລັບຄວາມປອດໄພໃນຕົວເມືອງ ແລະ ການປ້ອງກັນອາດສະຍາກຳ ແລະ ຄວາມຮຸນແຮງ ລວມທັງລັດທິກໍ່ການຮ້າຍ ແລະ ຄວາມຮຸນແຮງທີ່ນຳໄປສູ່ການກໍ່ການຮ້າຍ. ມາດຕະການດັ່ງກ່າວຈະສະໜັບສະໜູນຊຸມຊົນໃນທ້ອງຖິ່ນ ແລະ ອີງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ໃນການພັດທະນາຍຸດທະສາດ ແລະ ການລິເລີ່ມຕ່າງໆສຳລັບຕົວເມືອງ ລວມທັງຄຳນຶງເຖິງຊຸມຊົນແອອັດ ແລະ ການຕັ້ງຖິ່ນຖານນອກລະບົບ, ເຊັ່ນດຽວກັບປັດໄຈດ້ານຄວາມສ່ຽງ ແລະ ດ້ານວັດທະນະທຳ ໃນການພັດທະນານະໂຍບາຍທີ່ກ່ຽວຂ້ອງກັບຄວາມປອດໄພສາທາລະນະ ແລະ ການປ້ອງກັນອາດສະຍາກຳ ແລະ ຄວາມຮຸນແຮງ ລວມທັງການປ້ອງກັນ ແລະ ການຕ້ານການຈັບຈອງຂອງກຸ່ມໃດໜຶ່ງທີ່ເປັນໄພຂົ່ມຂູ່ຕໍ່ກັບຄວາມໝັ້ນຄົງ.

104. ພວກເຮົາຈະສະໜັບສະໜູນການຈັດຕັ້ງປະຕິບັດຕາມຂໍ້ກຳນົດທາງກົດໝາຍ ໂດຍຜ່ານຂອບແຜນງານການຄຸ້ມຄອງແບບມີສ່ວນຮ່ວມທີ່ເຂັ້ມແຂງ ແລະ ສະຖາບັນທີ່ມີຄວາມຮັບຜິດຊອບດ້ານການປົກຄອງ ແລະ ການຂຶ້ນທະບຽນທີ່ດິນ, ນຳໃຊ້ການຄຸ້ມຄອງ ແລະ ການນຳໃຊ້ທີ່ດິນ, ການຂຶ້ນທະບຽນຊັບສິນ ແລະ ລະບົບການເງິນທີ່ດີແບບຍືນຍົງ ແລະ ໂປ່ງໃສ. ພວກເຮົາຈະສະໜັບສະໜູນລັດຖະບານທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ໂດຍຜ່ານກົນໄກຕ່າງໆ ໃນການພັດທະນາ ແລະ ການນຳໃຊ້ຂໍ້ມູນພື້ນຖານກ່ຽວກັບທີ່ດິນ ເຊັ່ນ: ແຜນທີ່ທີ່ດິນ, ມູນຄ່າ ແລະ ຄວາມສ່ຽງ ແລະ ການບັນທຶກລາຄາທີ່ຢູ່ອາໄສ ແລະ ທີ່ດິນ ເພື່ອສ້າງຂໍ້ມູນທີ່ເຊື່ອຖືໄດ້, ທັນເວລາ ແລະ ມີຄຸນນະພາບສູງ — ແຍກຕາມລາຍຮັບ, ເພດ, ອາຍຸ, ເຊື້ອຊາດ, ຊົນເຜົ່າ, ສະຖານະການເຄື່ອນຍ້າຍຖິ່ນຖານ, ຄວາມພິການ ແລະ ທີ່ຕັ້ງທາງພູມສາດ ແລະ ຄຸນລັກສະນະອື່ນໆ ທີ່ກ່ຽວຂອງກັບສະພາບຂອງປະເທດ — ຈຳເປັນຕ້ອງໄດ້ປະເມີນການປ່ຽນແປງຂອງມູນຄ່າທີ່ດິນ ໃນຂະນະດຽວກັນ ກໍຮັບປະກັນວ່າ ຂໍ້ມູນເຫຼົ່ານີ້ຈະບໍ່ຖືກນຳໃຊ້ສຳລັບນະໂຍບາຍການນຳໃຊ້ທີ່ດິນແບບເລືອກປະຕິບັດ.

105. ພວກເຮົາຈະສົ່ງເສີມຄວາມກ້າວໜ້າໃນການໄດ້ຮັບສິດດ້ານທີ່ຢູ່ອາໄສຢ່າງພຽງພໍ ເຊິ່ງເປັນອົງປະກອບໜຶ່ງສຳລັບສິດໃນການມີທີ່ຢູ່ອາໄສທີ່ມີມາດຕະຖານທີ່ພຽງພໍ. ພວກເຮົາຈະພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍດ້ານທີ່ຢູ່ອາໄສຢູ່ໃນທຸກລະດັບ, ສັງລວມການວາງແຜນແບບມີສ່ວນຮ່ວມ ແລະ ການນຳໃຊ້ຫຼັກການການຊ່ວຍເຫຼືອອຸ້ມຊູຕາມຄວາມເໝາະສົມ ເພື່ອແນໃສ່ຮັບປະກັນຄວາມສອດຄ່ອງກັນລະຫວ່າງຍຸດທະສາດການພັດທະນາ, ນະໂຍບາຍທີ່ດິນ ແລະ ການສະໜອງທີ່ຢູ່ອາໄສໃນລະດັບທ້ອງຖິ່ນ, ລະດັບພາກ ແລະ ລະດັບຊາດ.

106. ພວກເຮົາຈະສົ່ງເສີມນະໂຍບາຍດ້ານທີ່ຢູ່ອາໄສ ໂດຍອີງຕາມຫຼັກການ ການມີສ່ວນຮ່ວມຂອງສັງຄົມ, ຄວາມມີປະສິດທິພາບທາງດ້ານເສດຖະກິດ ແລະ ການປົກປ້ອງສິ່ງແວດລ້ອມ. ພວກເຮົາຈະສະໜັບສະໜູນການນຳໃຊ້ຊັບພະຍາກອນສ່ວນລວມຢ່າງມີປະສິດທິພາບ ສຳລັບທີ່ຢູ່ອາໄສແບບຍືນຍົງ ແລະ ສາມາດເຂົ້າເຖິງໄດ້ ລວມທັງທີ່ດິນໃນຕົວເມືອງເຂດສູນກາງ ແລະ ເຂດພື້ນທີ່ລວມ ໂດຍມີພື້ນຖານໂຄງລ່າງຢ່າງພຽງພໍ ແລະ ສົ່ງເສີມການພັດທະນາລາຍຮັບ ເພື່ອສົ່ງເສີມການມີສ່ວນຮ່ວມ ແລະ ການຕິດຕໍ່ກັນທາງສັງຄົມ.

107. ພວກເຮົາຈະສະໜັບສະໜູນການພັດທະນາດ້ານນະໂຍບາຍ, ເຄື່ອງມື, ກົນໄກ ແລະ ຮູບແບບດ້ານການເງິນ ທີ່ສົ່ງເສີມການເຂົ້າເຖິງທາງເລືອກດ້ານທີ່ຢູ່ອາໄສແບບຍືນຍົງ ແລະ ສາມາດເຂົ້າເຖິງໄດ້ ລວມທັງທາງເລືອກການເຊົ່າ ແລະ ການຄອບຄອງອື່ນໆ ພ້ອມດຽວກັນກັບທາງເລືອກດ້ານການຮ່ວມມື ເຊັ່ນ ທີ່ພັກອາໄສຮ່ວມກັນ, ຄວາມເຊື່ອໝັ້

ນດ້ານທີ່ດິນຂອງຊຸມຊົນ ແລະ ຮູບແບບການຄອບຄອງອື່ນໆ ທີ່ຈະຊ່ວຍແກ້ໄຂຄວາມຈຳເປັນຂອງປະຊາຊົນ ແລະ ຊຸມຊົນ ເພື່ອແນໃສ່ປັບປຸງການສະໜອງທີ່ຢູ່ອາໄສ (ໂດຍສະເພາະກຸ່ມຄົນທີ່ມີລາຍຮັບຕໍ່າ), ປ້ອງກັນການແບ່ງແຍກ ແລະ ການຂັບໄລ່ ແລະ ການເຄື່ອນຍ້າຍທີ່ຖືກການໃຊ້ກຳລັງບັງຄັບ ແລະ ສະໜອງການຈັດສັນພື້ນທີ່ໃຫ້ເໝາະສົມ ແລະ ພຽງພໍ. ນອກຈາກນີ້, ຍັງລວມໄປເຖິງການສະໜັບສະໜູນແຜນການສ້າງທີ່ຢູ່ອາໄສດ້ວຍຕົນເອງ ໂດຍໃຫ້ຄວາມສົນໃຈເປັນພິເສດກ່ຽວກັບແຜນງານປັບປຸງພື້ນທີ່ແອອັດ ແລະ ການຕັ້ງຖິ່ນຖານນອກລະບົບ.

108. ພວກເຮົາຈະສະໜັບສະໜູນການພັດທະນານະໂຍບາຍດ້ານທີ່ຢູ່ອາໄສ ທີ່ສົ່ງເສີມທີ່ຢູ່ອາໄສແບບເຊື່ອມສານໃນຂັ້ນທ້ອງຖິ່ນ ໂດຍການແກ້ໄຂການເຊື່ອມໂຍງລະຫວ່າງການສຶກສາ, ການຈ້າງງານ, ທີ່ຢູ່ອາໄສ ແລະ ສຸຂະພາບ, ການປ້ອງກັນການກີດກັນ ແລະ ການແບ່ງແຍກ. ນອກຈາກນີ້, ພວກເຮົາມຸ່ງໝັ້ນທີ່ຈະຕໍ່ສູ້ກັບການໄຮ້ທີ່ຢູ່ອາໄສ ເຊັ່ນດຽວກັນກັບການຕໍ່ສູ້ ແລະ ການກຳຈັດອາດສະຍາກຳ ໂດຍຜ່ານນະໂຍບາຍ ແລະ ຍຸດທະສາດການມີສ່ວນຮ່ວມຢ່າງຫ້າວຫັນ ເຊັ່ນ: ແຜນງານທີ່ຢູ່ອາໄສແຫ່ງທຳອິດແບບຍືນຍົງ, ທົ່ວເຖິງ ແລະ ກວ້າງຂວາງ.

109. ພວກເຮົາຈະພິຈາລະນາເພີ່ມການຈັດສັນງົບປະມານ ແລະ ຊັບພະຍາກອນມະນຸດ ຕາມຄວາມເໝາະສົມສຳລັບການປັບປຸງ ແລະ ການປ້ອງກັນຊຸມຊົນແອອັດ ແລະ ການຕັ້ງຖິ່ນຖານນອກລະບົບໃນເຂດທີ່ເປັນໄປໄດ້ ໂດຍນຳໃຊ້ຍຸດທະສາດທີ່ນອກຈາກການປັບປຸງທາງກາຍະພາກ ແລະ ສິ່ງແວດລ້ອມ ເພື່ອຮັບປະກັນວ່າ ຊຸມຊົນແອອັດ ແລະ ການຕັ້ງຖິ່ນຖານນອກລະບົບ ໄດ້ຮັບການເຊື່ອມສານເຂົ້າໃນດ້ານສັງຄົມ, ເສດຖະກິດ, ວັດທະນະທຳ ແລະ ການເມືອງຂອງຕົວເມືອງ. ຍຸດທະສາດເຫຼົ່ານີ້ຄວນຈະປະກອບມີການເຂົ້າເຖິງທີ່ຢູ່ອາໄສແບບຍືນຍົງ, ພຽງພໍ, ປອດໄພ ແລະ ມີລາຄາທີ່ສາມາດເຂົ້າເຖິງໄດ້, ການບໍລິການທາງສັງຄົມ ແລະ ຂັ້ນພື້ນຖານ ແລະ ພື້ນທີ່ສາທາລະນະທີ່ປອດໄພ, ທົ່ວເຖິງ, ສີຂຽວ ແລະ ມີຄູນນະພາບ ຕາມຄວາມເໝາະສົມ ແລະ ຄວນສົ່ງເສີມຄວາມປອດໄພຂອງການຄອບຄອງ ແລະ ການຮັກສາຄວາມເປັນລະບຽບ ເຊັ່ນດຽວກັນກັບມາດຕະການສຳລັບການປ້ອງກັນຂໍ້ຂັດແຍ່ງ ແລະ ການໄກ່ເກ່ຍ.

110. ພວກເຮົາຈະສະໜັບສະໜູນຄວາມພະຍາຍາມໃນກຳນົດ ແລະ ເສີມຂະຫຍາຍລະບົບການຕິດຕາມທີ່ໂປ່ງໃສ່ ແລະ ກວມລວມ ສຳລັບການຫຼຸດຜ່ອນສັດສ່ວນຜູ້ທີ່ຢູ່ອາໄສໃນຊຸມຊົນແອອັດ ແລະ ການຕັ້ງຖິ່ນຖານນອກລະບົບ, ຄຳນຶງເຖິງປະສົບການທີ່ໄດ້ກ່ອນໜ້ານີ້ ເພື່ອປັບປຸງເງື່ອນໄຂການດຳລົງຊີວິດຂອງຊຸມຊົນແອອັດ ແລະ ຜູ້ທີ່ຕັ້ງຖິ່ນຖານນອກລະບົບ.

111. ພວກເຮົາຈະສົ່ງເສີມການພັດທະນາລະບຽບການທີ່ພຽງພໍ ແລະ ສາມາດປະຕິບັດໄດ້ ຢູ່ໃນຂະແໜງການທີ່ຢູ່ອາໄສ ລວມທັງ ກົດລະບຽບການກໍ່ສ້າງທີ່ທົນທານ, ມາດຕະຖານ, ໃບອະນຸຍາດການພັດທະນາ, ກົດໝາຍ ແລະ ລະບຽບການການນຳໃຊ້ທີ່ດິນ ແລະ ລະບຽບການການວາງແຜນ, ການຕໍ່ສູ້ ແລະ ການປ້ອງກັນການເກັງກຳໄລ, ການຂັບໄລ່, ການໄຮ້ທີ່ຢູ່ອາໄສ ແລະ ການເຄື່ອນຍ້າຍໂດຍຖືກໃຊ້ກຳລັງບັງຄັບ ແລະ ການຮັບປະກັນຄວາມຍືນຍົງ, ຄຸນນະພາບ, ຄວາມສາມາດໃນການຈ່າຍ, ສຸຂະພາບ, ຄວາມປອດໄພ, ການເຂົ້າເຖິງ, ພະລັງງານ ແລະ ປະສິດທິພາບຂອງຊັບພະຍາກອນ ແລະ ຄວາມທົນທານຕາມຄວາມເໝາະສົມ. ນອກຈາກນີ້, ພວກເຮົາຈະສະໜັບສະໜູນການວິເຄາະອຸປະສົງ ແລະ ອຸປະການດ້ານທີ່ຢູ່ອາໄສທີ່ແຕກຕ່າງກັນ ໂດຍອີງໃສ່ຂໍ້ມູນທີ່ມູນຄຸນນະພາບ, ທັນການ ແລະ ເຊື່ອຖືໄດ້ ໃນລະດັບຊາດ, ລະດັບພາກ ແລະ ລະດັບທ້ອງຖິ່ນ, ການພິຈາລະນາອົງປະກອບທາງດ້ານສັງຄົມ, ເສດຖະກິດ, ສິ່ງແວດລ້ອມ ແລະ ວັດທະນະທຳ.

112. ພວກເຮົາຈະສົ່ງເສີມການຈັດຕັ້ງປະຕິບັດແຜນງານການພັດທະນາຕົວເມືອງແບບຍືນຍົງໂດຍຄຳນຶງເຖິງທີ່ຢູ່ອາໄສ ແລະ ຄວາມຕ້ອງການຂອງປະຊາຊົນ ໃນສູນກາງທາງຍຸດທະສາດ, ການຈັດບູລິມະສິດແຜນການດ້ານທີ່ຢູ່ອາໄສທີ່ມີທີ່ຕັ້ງທີ່ດີ ແລະ ມີການຢັ້ງຢາຍທີ່ດີ ເພື່ອແນໃສ່ຫຼີກລ່ຽງການພັດທະນາແຫຼ່ງທີ່ຢູ່ອາໄສແບບໂດດດ່ຽວ ແລະ ແຍກຕົວອອກຈາກລະບົບຕົວເມືອງໂດຍບໍ່ຄຳນຶງເຖິງການພັດທະນາສັງຄົມ ແລະ ເສດຖະກິດ, ແລະ ສະໜອງທາງອອກສຳລັບຄວາມຕ້ອງການດ້ານທີ່ຢູ່ອາໄສຂອງກຸ່ມຜູ້ທີ່ມີລາຍຮັບຕໍ່າ.



Quito, Ecuador

113. ພວກເຮົາຈະນຳໃຊ້ມາດຕະການເພື່ອປັບປຸງຄວາມປອດໄພທາງຖະໜົນ ແລະ ເຊື່ອມສານບັນຫາດັ່ງກ່າວເຂົ້າໃນການອອກແບບ ແລະ ການວາງແຜນການພັດທະນາພື້ນຖານໂຄງລ່າງດ້ານການຂົນສົ່ງ ແລະ ການເດີນທາງແບບຍືນຍົງ. ໄປພ້ອມກັບການລິເລີ່ມປູກຈິດສຳນຶກ, ພວກເຮົາຈະສົ່ງເສີມລະບົບຄວາມປອດໄພ ໂດຍການນຳໃຊ້ແຜນການທົດສະຫວັດແຫ່ງການຈັດຕັ້ງປະຕິບັດສຳລັບຄວາມປອດໄພທາງຖະໜົນ ໂດຍໃຫ້ຄວາມສົນໃຈເປັນພິເສດຕໍ່ກັບຄວາມຈຳເປັນຂອງແມ່ຍິງ ແລະ ເດັກຍິງທັງໝົດ ລວມໄປເຖິງເດັກນ້ອຍ ແລະ ໄວໜຸ່ມ, ຜູ້ເຖົ້າຜູ້ແກ່ ແລະ ຄົນພິການ ແລະ ຄົນທີ່ອາໄສຢູ່ໃນສະພາບແວດລ້ອມທີ່ມີຄວາມສ່ຽງ. ພວກເຮົາຈະເຮັດວຽກເພື່ອຮັບຮອງເອົາ, ຈັດຕັ້ງປະຕິບັດ ແລະ ບັງຄັບໃຊ້ນະໂຍບາຍ ແລະ ມາດຕະການ ເພື່ອປົກປ້ອງ ແລະ ສົ່ງເສີມຄວາມປອດໄພຂອງຂອງຄົນຍ່າງ ແລະ ຜູ້ທີ່ຂີ່ລົດຖີບ ເພື່ອແນໃສ່ພົນໄດ້ຮັບດ້ານທີ່ສຸຂະພາບ ໂດຍສະເພາະການປ້ອງກັນການບາດເຈັບ ແລະ ພະຍາດທີ່ບໍ່ສາມາດຕິດຕໍ່ໄດ້ ແລະ ພວກເຮົາຈະເຮັດວຽກເພື່ອພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳກ່ຽວກັບຄວາມປອດໄພຂອງຜູ້ຂັບຂີ່ລົດຈັກ ໂດຍເຫັນວ່າຈຳນວນຜູ້ບາດເຈັບ ແລະ ເສຍຊີວິດໃນທົ່ວໂລກແມ່ນເພີ່ມຂຶ້ນ ແລະ ຢູ່ໃນລະດັບສູງ ໂດຍສະເພາະປະເທດທີ່ກຳລັງພັດທະນາ. ພວກເຮົາຈະສົ່ງເສີມການເດີນທາງໄປໂຮງຮຽນທີ່ປອດໄພ ແລະ ເພື່ອສຸຂະພາບສຳລັບເດັກທຸກຄົນ ໂດຍຖືເປັນບູລິມະສິດໜຶ່ງ.

114. ພວກເຮົາຈະສົ່ງເສີມການເຂົ້າເຖິງທັງໝົດເພື່ອຄວາມປອດໄພ, ທຸກອາຍຸຄົນ ແລະ ເພດທີ່ມີຜົນຕໍ່, ລະບົບການເດີນທາງໃນຕົວເມືອງ ແລະ ທີ່ດິນ ແລະ ການເດີນຂົນສົ່ງທາງທະເລທີ່ລາຄາບໍ່ແພງ, ເຂົ້າເຖິງໄດ້ ແລະ ຍືນຍົງ, ເພື່ອມີສ່ວນຮ່ວມທີ່ສຳຄັນຕໍ່ກິດຈະກຳທາງສັງຄົມ ແລະ ເສດຖະກິດໃນຕົວເມືອງຕ່າງໆ ແລະ ການຕັ້ງຖິ່ນຖານຂອງມະນຸດ, ໂດຍການເຊື່ອມສານແຜນການການຂົນສົ່ງ ແລະ ການເດີນທາງເຂົ້າໃນແຜນການລວມເມືອງ ແລະ ເຂດແດນ ແລະ ສົ່ງເສີມບັນດາທາງເລືອກຂອງການຂົນສົ່ງ ແລະ ການເດີນທາງທີ່ກວ້າງຂວາງ, ໂດຍສະເພາະແມ່ນການສະໜັບສະໜູນ.

(a) ມີການເພີ່ມຂຶ້ນທີ່ສຳຄັນຂອງໂຄງຮ່າງພື້ນຖານດ້ານການຂົນສົ່ງສາທາລະນະທີ່ສາມາດເຂົ້າເຖິງ, ປອດໄພ, ມີປະສິດທິພາບ, ລາຄາຖືກ ແລະ ຍືນຍົງ, ພ້ອມທັງທາງເລືອກທີ່ບໍ່ແມ່ນລົດຍົນເຊັ່ນວ່າ ການຍ່າງ ແລະ ການຂີ່ລົດຖີບ, ທີ່ໃຫ້ບູລິມະສິດພວກເຂົາຫຼາຍກວ່າການເດີນທາງດ້ວຍລົດຍົນຂອງເອກະຊົນ;

(b) ”ການພັດທະນາການຂົນສົ່ງສາທາລະນະແບບຍືນຍົງ” ທີ່ສະເໜີພາບຊ່ວຍຫຼຸດຜ່ອນການຍົກຍ້າຍ, ໂດຍສະເພາະ, ແມ່ນຜູ້ທຸກຍາກ, ແລະ ມີລາຄາທີ່ເໝາະສົມ, ມີທີ່ຢູ່ອາໄສທີ່ມີລາຍຮັບແບບປະສົມປະສານ ແລະ ມີອາຊີບ ແລະ ການບໍລະການຕ່າງໆທີ່ປະສົມປະສານ;

(c) ການຂົນສົ່ງທີ່ດີກວ່າ ແລະ ມີການປະສານງານ ແລະ ການນຳໃຊ້ດິນທີ່ມີການວາງແຜນ, ເຊິ່ງຈະນຳໄປສູ່ການຫຼຸດຜ່ອນຄວາມຕ້ອງການໃນເດີນທາງ ແລະ ການຂົນສົ່ງໄດ້, ຜົນຂະຫຍາຍການເຊື່ອມຕໍ່ກັນລະຫວ່າງຕົວເມືອງ, ຕົວເມືອງທີ່ຮ່າງໄກ ແລະ ເຂດຮ່າງໄກສອກຫຼີກ, ປະກອບດ້ວຍແຜນການເດີນທາງທາງນ້ຳ, ແລະ ການຂົນສົ່ງ ແລະ ການເດີນທາງ, ໂດຍສະເພາະແມ່ນບັນດາລັດທີ່ກຳລັງພັດທະນາຢູ່ເກາະດອນນ້ອຍໆ ແລະ ບັນດາເມືອງຊາຍຝັ່ງທະເລເປັນຕົ້ນ;

(d) ການວາງແຜນການຂົນສົ່ງ ແລະ ວິທີການຂົນສົ່ງຢູ່ໃນເມືອງທີ່ສາມາດເຂົ້າເຖິງບັນດາຜະລິດຕະພັນ ແລະ ການບໍລິການຕ່າງໆຢ່າງມີປະສິດທິພາບ, ຊ່ວຍຫຼຸດຜ່ອນຜົນກະທົບຕໍ່ສະພາບແວດລ້ອມ ແລະ ຄວາມໜ້າຢູ່ຂອງຕົວເມືອງ ແລະ ເພີ່ມທະວີການປະກອບສ່ວນຂອງເຂົາເຈົ້າເພື່ອສ້າງຄວາມຍືນຍົງ, ທົ່ວເຖິງ ແລະ ສ້າງຄວາມຍືນຍົງຕໍ່ການຂະຫຍາຍຕົວຂອງເສດຖະກິດ.

115. ພວກເຮົາຈະປະຕິບັດມາດຕະການເພື່ອພັດທະນາບັນດາກົນໄກ ແລະ ກອບການເຮັດວຽກທົ່ວໄປຢູ່ລະດັບຊາດ, ລະດັບພາກ ແລະ ລະດັບທ້ອງຖິ່ນເພື່ອປະເມີນຜົນໄດ້ຮັບໃນວົງກວ້າງຂອງໂຄງການຂົນສົ່ງໃນຕົວເມືອງ ແລະ ເມືອງຫຼວງ, ປະກອບດ້ວຍຜົນກະທົບທາງດ້ານສິ່ງແວດລ້ອມ, ດ້ານເສດຖະກິດ, ດ້ານການຢູ່ຮ່ວມກັນໃນສັງຄົມ, ດ້ານຄຸນນະພາບຊີວິດ, ດ້ານການເຂົ້າເຖິງ, ດ້ານຄວາມປອດໄພຕາມທ້ອງຖະໜົນ, ດ້ານສາທາລະນະສຸກ ແລະ ດ້ານການປະຕິບັດຕໍ່ອາກາດປ່ຽນແປງ, ລະຫວ່າງສິ່ງອື່ນໆ.

116. ພວກເຮົາຈະສະໜັບສະໜູນການພັດທະນາບັນດາກົນໄກ ແລະ ກອບການເຮັດວຽກເຫຼົ່ານີ້, ອີງຕາມນະໂຍບາຍແຫ່ງຊາດກ່ຽວກັບການຂົນສົ່ງ ແລະ ການເດີນທາງໃນຕົວເມືອງແບບຍືນຍົງ, ເພື່ອຄວາມຍືນຍົງ, ເປີດເຜີຍ ແລະ ໂປ່ງໃສໃນການຈັດຊື້ ແລະ ກົດລະບຽບການບໍລິການຂົນສົ່ງ ແລະ ການເດີນທາງຢູ່ໃນຕົວເມືອງ ແລະ ເຂດເມືອງຫຼວງ, ປະກອບດ້ວຍເຕັກໂນໂລຊີໃໝ່ໆທີ່ສາມາດແບ່ງປັນຂໍ້ມູນການບໍລິການດ້ານການເດີນທາງ. ພວກເຮົາຈະສະໜັບສະໜູນການພັດທະນາສັນຍາຮ່ວມມືລະຫວ່າງອຳນາດການປົກຄອງທ້ອງຖິ່ນ ແລະ ຜູ້ໃຫ້ບໍລິການການຂົນສົ່ງ ແລະ ການເດີນທາງທີ່ຊັດເຈນ, ໂປ່ງໃສ ແລະ ເຊື່ອຖືໄດ້, ປະກອບດ້ວຍການຄຸ້ມຄອງຂໍ້ມູນ, ເຊິ່ງສາມາດປົກປ້ອງຄວາມສົນໃຈຂອງສາທາລະນະຊົນ ແລະ ຄວາມເປັນສ່ວນຕົວ ແລະ ກຳນົດລະບຽບການຕ່າງໆຮ່ວມກັນຢ່າງຊັດເຈນ.

117. ພວກເຮົາຈະສະໜັບສະໜູນການປະສານງານໃຫ້ດີຂຶ້ນລະຫວ່າງການຂົນສົ່ງ ແລະ ກົມແຜນການຜັງເມືອງ ແລະ ເຂດແດນ, ເພື່ອມີຄວາມເຂົ້າໃຈເຊິ່ງກັນ ແລະ ກັນຂອງກອບແຜນການ ແລະ ນະໂຍບາຍຕ່າງໆຢູ່ລະດັບຊາດ, ລະດັບພາກ ແລະ ລະດັບທ້ອງຖິ່ນ, ໂດຍຜ່ານແຜນການຂົນສົ່ງ ແລະ ການເດີນທາງຂອງຕົວເມືອງ ແລະ ເມືອງຫຼວງແບບຍືນຍົງ. ພວກເຮົາຈະສະໜັບສະໜູນໜ່ວຍງານລັດຂັ້ນພາກ ແລະ ຂັ້ນທ້ອງຖິ່ນໃນການພັດທະນາຄວາມຮູ້ ແລະ ຄວາມສາມາດທີ່ຈຳເປັນເພື່ອຈັດຕັ້ງປະຕິບັດ ແລະ ບັງຄັບໃຊ້ແຜນການຕ່າງໆ.

118. ພວກເຮົາຈະຊຸກຍູ້ລັດຖະບານຢູ່ລະດັບຊາດ, ລະດັບພາກ ແລະ ລະດັບທ້ອງຖິ່ນເພື່ອພັດທະນາ ແລະ ຂະຫຍາຍເຄື່ອງກວດສອບດ້ານການເງິນ, ເພື່ອໃຫ້ເຂົາເຈົ້າສາມາດປັບປຸງໂຄງຮ່າງພື້ນຖານ ແລະ ລະບົບການຂົນສົ່ງ ແລະ ການເດີນທາງ, ເຊັ່ນວ່າ ລະບົບການຂົນສົ່ງ-ແບບໄວ, ການເຊື່ອມສານລະບົບຂົນສົ່ງ, ລະບົບຂົນສົ່ງທາງອາກາດ ແລະ ທາງລົດໄຟ, ແລະ ຄວາມປອດໄພ, ໃຫ້ມີໂຄງຮ່າງພື້ນຖານ ແລະ ເຕັກໂນໂລຊີສຳລັບຄົນຍ່າງ ແລະ ຄົນຂີ່ລົດຖີບທີ່ມີປະສິດທິພາບ ແລະ ພຽງພໍ-ອີງຕາມບັນດານະວັດຕະກຳໃນລະບົບຂົນສົ່ງ ແລະ ການເດີນທາງເພື່ອຫຼຸດຜ່ອນຄວາມແອອັດ ແລະ ມົນລະພິດຂະນະດຽວກັນກໍ່ຕ້ອງປັບປຸງຄຸນນະພາບ, ການເຊື່ອມຕໍ່, ການເຂົ້າເຖິງ, ສຸຂະພາບ ແລະ ຄຸນນະພາບຊີວິດໄປພ້ອມ.

119. ພວກເຮົາຈະສົ່ງເສີມການລົງທຶນທີ່ພຽງພໍເຂົ້າໃນໂຄງຮ່າງພື້ນຖານ ແລະ ລະບົບສະໜອງການບໍລິການທີ່ມີການປົກປ້ອງ, ເຂົ້າເຖິງໄດ້ ແລະ ຍືນຍົງເພື່ອຄຸ້ມນໍ້າໃຊ້, ສຸຂາພິບານ ແລະ ສຸຂະອານາໄມ, ສິ່ງເປິເປື້ອນ, ສິ່ງເສດເຫຼືອທີ່ແຂງ, ການລະບາຍນໍ້າໃນຕົວເມືອງ, ຄຸ້ມຄອງການຫຼຸດຜ່ອນມົນລະພິດທາງອາກາດ ແລະ ນໍ້າຈາກພາຍຸຝົນຕ່າງໆ,  ເພື່ອປັບປຸງຄວາມປອດໄພໃນວຽກງານໄພພິບັດຕ່າງໆທີ່ກ່ຽວຂ້ອງກັບນໍ້າ, ປັບປຸງສຸຂະພາບ, ຮັບປະກັນການເຂົ້າເຖິງນ້ໍາດື່ມທີ່ປອດໄພ ແລະ ລາຄາຖືກໃຫ້ທຸກຄົນທີ່ທົ່ວເຖິງ ແລະ ສະເໝີພາບ. ພ້ອມທັງການເຂົ້າເຖິງສຸຂາພິບານ ແລະ ສຸຂະອານາໄມທີ່ພຽງພໍ ແລະ ສະເໝີພາບສຳລັບທຸກຄົນ ແລະ ຢຸດຕິການຖ່າຍກາງແຈ້ງຊະຊາຍ, ໂດຍເອົາໃຈໃສ່ເປັນພິເສດໃນຄວາມຕ້ອງການ ແລະ ຄວາມປອດໄພຂອງແມ່ຍິງ ແລະ ເດັກຍິງ ແລະ ກຸ່ມຄົນທີ່ຢູ່ໃນສະພາບທີ່ບອບບາງ. ພວກເຮົາຈະຊອກຮູ້ເພື່ອຮັບປະກັນໄດ້ວ່າໂຄງຮ່າງພື້ນຖານນີ້ແຂງແຮງ ແລະ ທົນທານຕໍ່ທຸກສະພາບອາກາດຕາມແຜນງານຂອງກົມຜັງເມືອງ ແລະ ເຂດແດນ, ພ້ອມທັງທີ່ຢູ່ອາໄສ ແລະ ການເດີນທາງ, ພ້ອມທັງສິ່ງອື່ນໆ, ແລະ ຖືກຈັດຕັ້ງປະຕິບັດແບບມີສ່ວນຮ່ວມ, ສາມາດພິຈາລະນາໄດ້ຕໍ່ການປ່ຽນແປງໃໝ່, ມີຊັບພະຍາກອນທີ່ມີປະສິດທິພາບ, ເຂົ້າເຖິງໄດ້, ເຈາະຈົງດ້ານເນື້ອໃນ ແລະ ມີວິທີການແກ້ໄຂແບບຍືນຍົງເປັນວັດທະນະທຳ.

120. ພວກເຮົາຈະເຮັດວຽກເພື່ອສະໜອງສິ່ງທີ່ເປັນປະໂຫຍດດ້ານສຸຂະອະນາໄມ ແລະ ນໍ້າສາທາລະນະພ້ອມກັບຄວາມສາມາດໃນການຈັດຕັ້ງປະຕິບັດລະບົບການຄຸ້ມຄອງນໍ້າແບບຍືນຍົງ ລວມທັງການບຳລຸງຮັກສາພື້ນlານໂຄງລ່າງໃນຕົວເມືອງແບບຍືນຍົງໂດຍຜ່ານການພັດທະນາຄວາມສາມາດ ເຊິ່ງມີເປົ້າໝາຍທີ່ຈະລຶບລ້າງຄວາມບໍ່ສະເໝີພາບ ແລະ ການສົ່ງເສີມການເຂົ້າເຖິງນໍ້າດື່ມທີ່ປອດໄພ ແລະ ລາຄາທີ່ສາມາດເຂົ້າເຖິງໄດ້ສຳລັບໝົດທຸກຄົນຢ່າງເທົ່າທຽມກັນ ແລະ ທົ່ວເຖິງ ແລະ ສຂະອະນາໄມທີ່ເທົ່າທຽມ ແລະ ພຽງພໍສຳລັບໝົດທຸກຄົນ.

121. ພວກເຮົາຈະຮັບປະກັນການເຂົ້າເຖິງການບໍລິການພະລັງງານທີ່ທັນສະໄໝ, ເຊື່ອຖືໄດ້ ແລະ ລາຄາບໍ່ແພງສຳລັບທຸກຄົນ ໂດຍການສົ່ງເສີມປະສິດທິພາບຂອງພະລັງງານ ແລະ ພະລັງງານທົດແທນແບບຍືນຍົງ ແລະ ການສະໜັບສະໜູນຄວາມພະຍາຍາມລະດັບພາກ ແລະ ລະດັບທ້ອງຖິ່ນ ເພື່ອນຳໃຊ້ພະລັງງານເຫຼົ່ານັ້ນ ໃນການສິ່ງກໍ່ສ້າງສາທາລະນະ, ພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກ, ພ້ອມດຽວກັນກັບການ ນຳໃຊ້ຜົນປະໂຫຍດຈາກການຄວບຄຸມໂດຍກົງຂອງລັດຖະບານລະດັບພາກ ແລະ ລະດັບທ້ອງຖິ່ນ, ສົ່ງເສີມຄ ວາມເຂົ້າໃຈໃນຂະແໜງການທີ່ນຳໃຊ້ເຊັ່ນ ສິ່ງກໍ່ສ້າງທີ່ເປັນທີ່ຢູ່ອາໄສ, ທາງການຄ້າ ແລະ ທາງອຸດສາຫະກຳ, ອຸດສາຫະກຳ, ສິ່ງເສດເຫຼືອ ແລະ ສຸຂະອະນາໄມ. ນອກຈາກນັ້ນ, ພວກເຮົາຈະສະໜັບສະໜູນການຮັບຮອງເອົາຫຼັ ກເກນ ແລະ ມາດຕະຖານການກໍ່ສ້າງ, ເປົ້າໝາຍຂອງໂຄງການທົດແທນ, ການລະບຸປະສິດທິພາບຂອງພະລັງງານ, ການປັບປຸງສິ່ງກໍ່ສ້າງທີ່ມີຢູ່ ແລະ ນະໂຍບາຍການຈັດຊື້ຈັດຈ້າງສາທາລະນະກ່ຽວກັບພະລັງງານໃນຮູບແບບອື່ນໆຕາມ ຄວາມເໝາະສົມ ເພື່ອບັນລຸເປົ້າໝາຍຄວາມປະສິດທິພາບຂອງພະລັງງານ. ນອກຈາກນີ້, ພວກເຮົາຈະໃຫ້ບູລິມະສິດ ຕາຂ່າຍໄຟຟ້າທີ່ສະຫຼາດ, ລະບົບພະລັງງານຂັ້ນເມືອງ ແລະ ແຜນພະລັງງານຊຸມຊົນ ເພື່ອປັບປຸງຄວາມກ່ຽວພັນລະຫວ່ າງພະລັງງານທົດແທນ ແລະ ຄວາມມີປະສິດທິພາບຂອງພະລັງງານ.

122. ພວກເຮົາຈະສະໜັບສະໜູນການຕັດສິນໃຈກ່ຽວກັບສິ່ງເສດເຫຼືອ ເພື່ອສົ່ງເສີມການເຂົ້າເຖິງຢ່າງທົ່ວເຖິງໃນລະບົບ ການຄຸ້ມຄອງສິ່ງເສດເຫຼືອແບບຍືນຍົງ. ພວກເຮົາຈະສະໜັບສະໜູນການສົ່ງເສີມການຜະລິດຢ່າງມີຄວາມຮັບຜິດຊ ອບ ທີ່ລວມເຖິງຜູ້ປ່ອຍສິ່ງເສດເຫຼືອ ທີ່ຈະຕ້ອງສະໜອງດ້ານການເງິນໃຫ້ແກ່ລະບົບການຄຸ້ມຄອງສິ່ງເສດເຫຼືອໃນຕົວ ເມືອງ, ຫຼຸດຜ່ອນຄວາມເປັນອັນຕະລາຍ ແລະ ຜົນກະທົບທາງດານເສດຖະກິດ ແລະ ສັງຄົມຂອງສິ່ງເສດເຫຼືອຕ່າງໆ ແລະ ເພີ່ມອັດຕາການນຳມາໃຊ້ຄືນໂດຍເລີ່ມຈາກການອອກແບບການຜະລິດທີ່ດີກວ່າເກົ່າ.

123. ພວກເຮົາຈະສະໜັບສະໜູນການເຊື່ອມສານຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ຄວາມຈຳເປັນທາງໂພສະນາ ການຂອງຜູ້ທີ່ອາໄສຢູ່ໃນຕົວເມືອງ ໂດຍສະເພາະຜູ້ທີ່ທຸກຍາກ ຢູ່ໃນແຜນການພັດທະນາດິນແດນ ແລະ ຕົວເມືອງ ເພື່ອແນໃສ່ລົບລ້າງຄວາມອຶດຫິວ ແລະ ການຂາດສານອາຫານ. ພວກເຮົາຈະສະໜັບສະໜູນການປະສານງານກ່ຽ ວກັບຄວາມໝັ້ນຄົງດ້ານສະບຽງອາຫານແບບຍືນຍົງ ແລະ ນະໂຍບາຍດ້ານກະສິກຳໃນເຂດຕົວເມືອງ, ຊານເມືອງ ແລະ ເຂດຊົນນະບົດ ເພື່ອອຳນວຍຄວາມສະດວກໃນການຜະລິດ, ການເກັບຮັກສາ, ການຂົນສົ່ງ ແລະ ການຕ ະຫຼາດຂອງການຂາຍອາຫານຕໍ່ຜູ້ບໍລິໂພກ ໃນຮູບແບບທີ່ເໝາະສົມ ແລະ ລາຄາບໍ່ແພງ ເພື່ອແນໃສ່ຫຼຸດຜ່ອນກ ານສູນເສຍອາຫານ ແລະ ປ້ອງກັນ ແລະ ນຳເອົາສິ່ງເສດເຫຼືອມາໃຊ້ຄືນ. ພວກເຮົາຈະສົ່ງເສີມການປະສານງານ ດ້ານນະໂຍບາຍດ້ານອາຫານກັບນະໂຍບາຍດ້ານພະລັງງານ, ນ້ຳ, ສຸຂະພາບ, ການຂົນສົ່ງ ແລະ ສິ່ງເສດເຫຼືອ, ຮັກສາຄວາມຫຼາກຫຼາຍຂອງເມັດພັນ, ຫຼຸດຜ່ອນການນຳໃຊ້ສານເຄມີທີ່ເປັນອັນຕະລາຍ ແລະ ປະຕິບັດນະໂຍບາຍອື່ນ ໆໃນເຂັດຕົວເມືອງເພື່ອໃຫ້ໄດ້ປະສິດທິພາບສູງສຸດ ແລະ ມີສິ່ງເສດເຫຼືອໜ້ອຍທີ່ສຸດ.

124. ພວກເຮົາຈະລວມເອົາວັດທະນະທຳເປັນບູລິມະສິດໜຶ່ງຂອງແຜນການ ແລະ ຍຸດທະສາດພັດທະນາຕົວເມືອ ໃນ ການຮັບຮອງເອົາເຄື່ອງມືການວາງແຜນ ລວມມີແຜນແມ່ບົດ, ຄູ່ມືສະເພາະຂົງເຂດ, ລະບຽບການກໍ່ສ້າງ, ນະໂຍບາຍການຄຸ້ມຄອງຝັ່ງທະເລ ທີ່ຊ່ວຍປົກປັກຮັກສາມໍລະດົກທາງດານວັດທະນະທຳ ແລະ ວິວທິວທັດທີ່ຫຼາກຫຼາຍ, ແລະ ຈະປົກປັກຮັກສາສິ່ງເຫຼົ່ານັ້ນຈາກຜົນກະທົບທີ່ອາດເປັນໄປໄດ້ຈາກການພັດທະນາຕົວເ ມືອງ.

125. ພວກເຮົາຈະສະໜັບສະໜູນການນຳໃຊ້ຜົນປະໂຫຍດທີ່ເກີດຈາກມໍລະດົກທາງດ້ານວັດທະນະທຳ ສຳລັບການ ພັດທະນາຕົວເມືອງແບບຍືນຍົງ ແລະ ຮັບຮູ້ບົດບາດຂອງການພັດທະນາຕົວເມືອງໃນການກະຕຸ້ນການມີສ່ວນ ຮ່ວມ ແລະ ຄວາມຮັບຜິດຊອບ. ພວກເຮົາຈະສົ່ງເສີມການນຳໃຊ້ອະນຸສອນສະຖານດ້ານສະຖາປັດຕະຍະກຳແ ບບຍືນຍົງ ແລະ ສາງສັນ ໂດຍການສ້າງຄຸນຄ່າໂດຍຜ່ານການດັດປັບ ແລະ ການຟື້ນຟູຢ່າງມີຄວາມເຄົາລົບຕໍ່ອ ະນຸສອນສະຖານເຫຼົ່ານັ້ນ. ພວກເຮົາຈະເຮັດໃຫ້ຊົນເຜົ່າພື້ນເມືອງ ແລະ ຊຸມຊົນໃນທ້ອງຖິ່ນມີສ່ວນຮ່ວມໃນກາ ນສົ່ງເສີມ ແລະ ເຜີຍແຜ່ຄວາມຮູ້ກ່ຽວກັບມໍລະດົກທາງດ້ານວັດທະນະທຳທີ່ເປັນປະທຳ ແລະ ນາມມະທຳ ແລະ ການປົກປັກຮັກສາການສະແດງອອກ ແລະ ພາສາແບບດັ້ງເດີມ ລວມໄປເຖິງການນຳໃຊ້ເຕັກໂນໂລຊີ ແລະ ເຕັກນິກໃໝ່ໆ.

ເຄື່ອງມືສໍາລັບການຈັດຕັ້ງປະຕິບັດ

126. ພວກເຮົາຮັບຮູ້ວ່າ ການຈັດຕັ້ງປະຕິບັດຂອງວາລະການພັດທະນາເມືອງສະບັບໃໝ່ຕ້ອງການສ້າງສະພາບແວດລ້ອມ ແລະ ຂອບເຂດກ້ວາງໃຫຍ່ຂອງຄວາມໝາຍຂອງການຈັດຕັ້ງປະຕິບັດ, ລວມທັງການເຂົ້າເຖິງວິທະຍາສາດ, ເທັກໂນໂລຊີ ແລະ ນະວະຕະກໍາ ແລະ ເພີ່ມທະວີຄວາມຮູ້ທີ່ມີສ່ວນຮ່ວມຂອງການຕົກລົງເຫັນດີຂອງທັງສອງຝ່າຍດ້ານຮູບແບບ, ຄວາມໝາຍ, ພ້ອມກັນກັບການພັດທະນາຄວາມສາມາດ ແລະ ການລະດົມທາງດ້ານຊັບພະຍາກອນການເງິນ, ຈະຄໍານຶງເຖິງຄໍາໝັ້ນສັນຍາຂອງບັນດາປະເທດກໍາລັງພັດທະນາ ແລະ ພັດທະນາແລ້ວ ແລະ ຈະເຈາະເຂົ້າໃນຊັບພະຍາກອນທາງນະວະຕະກໍາ ແລະ ປະເພນີທີ່ເໝາະສົມໃນລະດັບໂລກ, ພາກພື້ນ, ປະເທດ, ພາກ ແລະ ທ້ອງຖິ່ນ, ພ້ອມກັນນັ້ນ ກໍ່ໄດ້ເພີ່ມທະວີສາຍສໍາພັນ ແລະ ການຮ່ວມມືສາກົນລະຫວ່າງລັດຖະບານໃນທຸກໆລະດັບ, ພາກສ່ວນເອກະຊົນ, ສັງຄົມສິ່ງເຄາະ, ລະບົບຂອງ ສປຊ ແລະ ພາກສ່ວນອື່ນໆ ອີງໃສ່ຫຼັກການຂອງຄວາມສະເໝີພາບ, ບໍ່ມີການແບ່ງແຍກ, ຮັບຜິດຊອບ, ເຄົາລົບຄວາມສາມັກຄີ ແລະ ສິດທິຂອງມະນຸດ, ໂດຍສະເພາະເພື່ອກຸ່ມຄົນທີ່ທຸກຍາກ ແລະ ບໍ່ມີຄວາມໝັ້ນຄົງທີ່ສຸດ.

127. ພວກເຮົາຢັ້ງຢືນຄືນເຖິງຄໍາໝັ້ນສັນຍາກ່ຽວກັບຄວາມໝາຍຂອງການຈັດຕັ້ງປະຕິບັດທີ່ໄດ້ລວມຢູ່ໃນວາລະການພັດທະນາແບບຍືນຍົງ ແລະ ວາລະແຜນງານຂອງ Addis Ababa ປີ2030.

128. ພວກເຮົາຈະສະໜັບສະໜູນ UN-Habitat, ຕົວແທນ ແລະ ແຜນງານອື່ນໆຂອງ ສປຊ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງເພື່ອເຮັດໃຫ້ຄູ່ມືເຮັດວຽກ ແລະ ຫຼັກຖານທີ່ເປັນພື້ນຖານສໍາລັບການຈັດຕັ້ງປະຕິບັດຂອງວາລະການພັດທະນາເມືອງສະບັບໃໝ່ ແລະ ເປົ້າໝາຍການພັດທະນາແບບຍືນຍົງຂອງຂະໜາດເມືອງ, ໃນການຮ່ວມມືສະໜິດແໜ້ນກັບສະມາຊິກລັດ, ອໍານາດການປົກຄອງທ້ອງຖິ່ນ, ກຸ່ມຄົນໃຫຍ່ ແລະ ພາກສ່ວນທີ່ກ່ຽວຂ້ອງ, ຜ່ານການລະດົມຂອງຊ່ຽວຊານ. ພວກເຮົາຈະສ້າງມໍລະດົກຂອງກອງປະຊຸມ Habitat III ແລະ ບົດຮຽນທີ່ໄດ້ຈາກຂັ້ນຕອນການກະກຽມ, ລວມທັງຫົວຂໍ້ຂອງກອງປະຊຸມ ແລະ ພາກພື້ນ. ໃນບົດຄວາມນີ້, ພວກເຮົາຮັບຮູ້ເຖິງການຊ່ວຍເຫຼືອທີ່ມີຄຸນຄ່າຂອງການໂຄສະນາຂອງເມືອງຢູ່ໃນໂລກ, ຄູ່ຮ່ວມມືຂອງສະມັດຊາຂອງເຄືອຄ່າຍເຄື່ອງມືຂອງດິນໂລກ ແລະ Habitat III.

129. ພວກເຮົາກະຕຸ້ນໃຫ້ UN-Habitat ສືບຕໍ່ເຮັດວຽກໃນການພັດທະນາມາດຖານຄວາມຮູ້ ແລະ ຕອບສະໜອງການພັດທະນາຄວາມສາມາດ ແລະ ເຄື່ອງມືຂອງລັດຖະບານຊາດ, ພາກ ແລະ ທ້ອງຖິ່ນໃນການອອກແບບ, ວາງແຜນ ແລະ ຄຸ້ມຄອງການພັດທະນາເມືອງແບບຍືນຍົງ.

130. ພວກເຮົາຮັບຮູ້ວ່າການພັດທະນາເມືອງແບບຍືນຍົງຖືກລະບຸຢູ່ໃນຍຸດທະສາດ ແລະ ນະໂຍບາຍທີ່ສາມາດໄດ້ປະໂຫຍດຈາກຂອບວຽກງານດ້ານການເງິນແບບເຊື່ອມສານທີ່ຖືກສະໜັບສະໜູນໂດຍການສ້າງສະພາບແວດລ້ອມໃນທຸກໆລະດັບຕາມຄວາມເໝາະສົມ. ພວກເຮົາຮັບຮູ້ເຖິງຄວາມສໍາຄັນຂອງການຮັບປະກັນວ່າ ຄວາມໝາຍຂອງການຈັດຕັ້ງປະຕິບັດດ້ານການເງິນແມ່ນຕິດແໜ້ນໃນຂອບວຽກງານດ້ານນະໂຍບາຍທີ່ສອດຄ່ອງ ແລະ ຂັ້ນຕອນການກະຈາຍດ້ານງົບປະມານທີ່ມີຄວາມສາມາດພຽງພໍໄດ້ຮັບການພັດທະນາໃນທຸກໆລະດັບຕາມສະຖານທີ່ມີຄວາມເໝາະສົມ.

131. ພວກເຮົາສະໜັບສະໜູນວິທີການກ່ຽວກັບບົດຄວາມທີ່ມີຄວາມລະອຽດອ່ອນຕໍ່ການເງິນເມືອງ ແລະ ການເພີ່ມທະວີຄວາມສາມາດໃນການຄຸ້ມຄອງດ້ານການເງິນໃນທຸກໆລະດັບຂອງລັດຖະບານຜ່ານການຮັບຮອງຂອງເຄື່ອງມືພິເສດ ແລະ ຄວາມສໍາຄັນທາງກົນໄກເພື່ອໃຫ້ການພັດທະນາເມືອງແບບຍືນຍົງໄດ້ຮັບຜົນສໍາເລັດ, ຈະຮັບຮູ້ເຖິງໜ້າທີ່ຮັບຜິດຊອບພື້ນຖານສໍາລັບການພັດທະນາເສດຖະກິດ ແລະ ສັງຄົມຂອງແຕ່ລະປະເທດ.

132. ພວກເຮົາຈະລະດົມລາຍຮັບ ແລະ ຊັບພະຍາກອນພາຍໃນຜະລິດຜ່ານການເຂົ້າຍຶດຜົນປະໂຫຍດຂອງເມືອງ, ພ້ອມກັນນີ້ ສິນຄ້າທີ່ຊ່ວຍໃຫ້ເກີດການປ່ຽນແປງ ແລະ ເພີ່ມຜົນກະທົບຂອງການລົງທຶນຂອງພາກສ່ວນລັດ ແລະ ເອກະຊົນ, ເພື່ອປັບປຸງເງື່ອນໄຂໃຫ້ການພັດທະນາເມືອງ ແລະ ເປີດການເຂົ້າສູ່ຊັບພະຍາກອນເພີ່ມເຕີມ, ຈະຮັບຮູ້ວ່າທຸກໆປະເທດ, ນະໂຍບາຍຂອງລັດ ແລະ ການລະດົມທຶນ ແລະ ການນໍາໃຊ້ທີ່ມີປະສິດທິພາບຂອງຊັບພະຍາກອນພາຍໃນ, ຖືກສະໜັບສະໜູນໂດຍຫຼັກການຂອງກໍາມະສິດຂອງຊາດ ແມ່ນສູນກາງຂອງຕິດຕາມ/ສະແຫວງຫາສາມັນຂອງການພັດທະນາເມືອງແບບຍືນຍົງ ລວມທັງການຈັດຕັ້ງປະຕິບັດຂອງວາລະການພັດທະນາເມືອງໃໝ່.

133. ພວກເຮົາຕ້ອງການທຸລະກິດທີ່ຕອບສະໜອງນະວະຕະກຳ ແລະ ຫົວຄິດປະດິດສ້າງຂອງປະຊາຊົນເພື່ອການແກ້ໄຂສິ່ງທ້າທາຍໃນການພັດທະນາແບບຍືນຍົງໃນເຂດເມືອງ, ຈະຮັບຮູ້ກິດຈະກຳທາງທຸລະກິດຂອງເອກະຊົນ, ການລົງທຶນ ແລະ ນະວະຕະກຳແມ່ນສິ່ງກະຕຸ້ນຫຼັກຂອງອັດຕາການຜະລິດ, ການສ້າງອາຊີບ ແລະ ການຂະຫຍາຍຕົວແບບມີສ່ວນຮ່ວມ, ແລະ ການລົງທຶນຂອງພາກສ່ວນເອກະຊົນ, ໂດຍສະເພາະການລົງທຶນໂດຍກົງຂອງຕ່າງປະເທດທີ່ເປັນໄປຕາມລະບົບການເງິນສາກົນທີ່ໝັ້ນຄົງ ແມ່ນອົງປະກອບທີ່ສຳຄັນຂອງຄວາມພະຍາຍາມໃນການພັດທະນາ.

134. ພວກເຮົາຈະສະໜັບສະໜູນຄວາມສາມາດ ແລະ ນະໂຍບາຍທີ່ເໝາະສົມ ເຊິ່ງລັດຖະບານທ້ອງຖິ່ນ ແລະ ພາກສາມາດລົງທະບຽນ ແລະ ຂະຫຍາຍພື້ນຖານລາຍຮັບທີ່ສຳຄັນຂອງເຂົາເຈົ້າ, ຕົວຢ່າງ: ຜ່ານເຈົ້າໜ້າທີ່ຕາດິນ, ພາສີທ້ອງຖິ່ນ, ເກັບຄ່າບໍລິການ ແລະ ຄ່າທຳນຽມທີ່ສອດຄ່ອງກັບນະໂຍບາຍຂອງຊາດ, ໃນຂະນະດຽວກັນນັ້ນກໍ່ຮັບປະກັນວ່າແມ່ຍິງ ແລະ ເດັກຍິງ, ເດັກນ້ອຍ ແລະ ໄວໜຸ່ມ, ຜູ້ອາວຸໂສ, ຄົນພິການ, ຄົນພື້ນເມືອງ, ຊຸມຊົນໃນທ້ອງຖິ່ນ  ແລະ ຄອບຄົວທຸກຍາກແມ່ນບໍ່ໄດ້ຮັບຜົນກະທົບ,

135. ພວກເຮົາຈະສົ່ງເສີມສຽງ ແລະ ລະບົບທີ່ໂປ່ງໃສສຳລັບການຍົກຍ້າຍ/ການໂອນທາງດ້ານການເງິນຈາກລັດຖະບານຊາດຫາພາກ ແລະ ລັດຖະບານທ້ອງຖິ່ນ ອີງໃສ່ຄວາມຈຳເປັນຂອງຄົນຫຼັງ, ບູລິມະສິດ, ໜ້າທີ່ວຽກງານ, ຄຳສັ່ງ ແລະ ສິ່ງກະຕຸ້ນດ້ານການປະຕິບັດ/ສະມັນຕະພາບຕາມຄວາມເໝາະສົມ ເພື່ອຕອບສະໜອງຊັບພະຍາກອນທີ່ຄາດການໄດ້ລ່ວງໜ້າ, ພຽງພໍ ແລະ ທັນເວລາໃຫ້ແກ່ພວກເຂົາ, ເພີ່ມທະວີຄວາມສາມາດເພີ່ມລາຍຮັບ ແລະ ຈັດການດ້ານຄ່າໃຊ້ຈ່າຍ.

136. ພວກເຮົາຈະສະໜັບສະໜູນການພັດທະນາຂອງຮູບແບບຕັ້ງຊື່ ແລະ ແນວ/ທາງນອນຂອງການຊ່ວຍເຫຼືອຊັບພະຍາກອນທາງດ້ານການເງິນ ເພື່ອຫຼຸດຜ່ອນຄວາມບໍ່ສະເໝີພາບທົ່ວດິນແດນພູມມິພາກ (ພາກ) ພາຍໃນສູນກາງເມືອງ ແລະ ລະຫວ່າງພື້ນທີ່ຊົນນະບົດ ແລະ ເມືອງ, ພ້ອມກັນນີ້ ກໍ່ສົ່ງເສີມການພັດທະນາດິນແດນແບບເຊື່ອມສານ ແລະ ດຸນດ່ຽງ/ສົມດູນ. ໃນເລື່ອງນີ້, ພວກເຮົາເນັ້ນໜັກຄວາມສຳຄັນຂອງການປັບປຸງຄວາມໂປ່ງໃສຂອງຂໍ້ມູນໃນໃຊ້ຈ່າຍ ແລະ ຈັດສັນຊັບພະຍາກອນ ແມ່ນເປັນເຄື່ອງມືສຳລັບການປະເມີນຄວາມກ້າວໜ້າກ່ຽວກັບການເຊື່ອມສານພື້ນທີ່ ແລະ ຄວາມສະເໝີພາບ.

137. ພວກເຮົາຈະສົ່ງເສີມການປະຕິບັດໃຫ້ດີທີ່ສຸດ ເພື່ອເຂົ້າຢຶດ ແລະ ມີສ່ວນຮ່ວມໃນການເພີ່ມມູນຄ່າຂອງດິນແດນ ແລະ ຊັບສິນທີ່ໃຫ້ຜົນຮັບຕາມຂັ້ນຕອນການພັດທະນາເມືອງ, ໂຄງການຂອງພື້ນຖານໂຄງລ່າງ ແລະ ການລົງທຶນຂອງລັດ/ສາທາລະນະ. ມາດຕະການ/ການວັດແທກ ເຊັ່ນ: ນະໂຍບາຍງົບປະມານຂອງການໄດ້ກຳໄລທີ່ກ່ຽວຂ້ອງ ສາມາດຈັດໃສ່ຕາມສະຖານທີ່ມີຄວາມເໝາະສົມ ເພື່ອປ້ອງກັນການເຂົ້າຢຶດຂອງພາກສ່ວນເອກະຊົນແຕ່ພຽງຜູ້ດຽວ, ພ້ອມກັນນີ້ຍັງມີ ດິນ ແລະ ການເກງກຳໄລດິນໃນຄວາມເປັນຈິງ. ພວກເຮົາຈະເພີ່ມກຳລັງສະໜັບສະໜູນການເຊື່ອມຕໍ່ລະຫວ່າງລະບົບງົບປະມານ ແລະ ການວາງແຜນເມືອງ ແລະ ເຄື່ອງມືການຄຸ້ມຄອງເມືອງ, ລວມມີກົດລະບຽບຂອງຕະຫຼາດດິນ (ການຄ້າຂາຍດິນ). ພວກເຮົາຈະເຮັດວຽກເພື່ອຮັບປະກັນຄວາມພະຍາຍາມເຮັດໃຫ້ການເງິນດິນບໍ່ແມ່ນຜົນຮັບໃນການນຳໃຊ້ດິນແບບຍືນຍົງ ແລະ ການບໍລິໂພກ.

138. ພວກເຮົາຈະສະໜັບສະໜູນລັດຖະບານພາກ ແລະ ທ້ອງຖິ່ນໃນຄວາມພະຍາຍາມຈັດຕັ້ງປະຕິບັດເຄື່ອງມືການຄວບຄຸມຄ່າໃຊ້ຈ່າຍທີ່ມີຄວາມຮັບຜິດຊອບ ແລະ ໂປ່ງໃສ ສຳລັບການປະເມີນຄວາມຈຳເປັນ ແລະ ຜົນກະທົບຂອງໂຄງການ ແລະ ການລົງທຶນໃນທ້ອງຖິ່ນ, ອີງໃສ່ການຄວບຄຸມກ່ຽວກັບກົດໝາຍ ແລະ ການມີສ່ວນຮ່ວມຂອງສາທາລະນະຕາມຄວາມເໝາະສົມໃນການສະໜັບສະໜູນຂັ້ນຕອນການເປີດ ແລະ ຍື່ນປະມູນທີ່ມີຄວາມຍຸດຕິທຳ, ກົນໄກການຈັດຫາ ແລະ ການບໍລິຫານງົບປະມານທີ່ໄວ້ວາງໃຈໄດ້/ໜ້າເຊື່ອຖື ແລະ ມາດຕະການການປ້ອງກັນຕ້ານການສໍ້ລາດບັງຫຼວງເພື່ອສົ່ງເສີມການຄຸ້ມຄອງທີ່ມີຄວາມຊື່ສັດ, ມີຄວາມຮັບຜິດຊອບ, ມີປະສິດທິພາບ ແລະ ເຂົ້າເຖິງດິນ ແລະ ຊັບສິນຂອງສາທາລະນະທີ່ສອດຄ່ອງກັບນະໂຍບາຍຂອງຊາດ.

139. ພວກເຮົາຈະສະໜັບສະໜູນຂອບວຽກງານທີ່ກຳນົດລະບຽບ ແລະ ກົດໝາຍທີ່ເຂັ້ມແຂງເພື່ອການກູ້ຢືມເງິນຈາກເທດສະບານ ແລະ ຊາດແບບຍືນຍົງ, ບົນພື້ນຖານຂອງການຈັດການໜີ້ສິນແບບຍືນຍົງ, ໄດ້ຮັບການກູ້ຢືມໂດຍຄວາມສາມາດ ແລະ ລາຍຮັບທີ່ພຽງພໍ, ໂດຍໃຊ້ຄວາມເໝາະສົມທີ່ຈະໃຫ້ຢືມເງິນ

ໄດ້ຂອງທ້ອງຖິ່ນ ແລະ ໄດ້ຂະຫຍາຍຕະຫຼາດໜີ້ສິນຂອງເທດສະບານແບບຍືນຍົງໃນເວລາອັນເໝາະສົມ. ພວກເຮົາຈະພິຈາລະນາການສ້າງຕັ້ງ/ກໍ່ສ້າງທີ່ເໝາະສົມຂອງຄົນກາງ/ຄົນໄກ່ເກ່ຍດ້ານກ່ຽວກັບເງິນສໍາລັບການເງິນເມືອງ ເຊັ່ນ: ທະນາຄານພັດທະນາ ຫຼື ກອງທຶນພັດທະນາໃນລະດັບພາກພື້ນ, ຊາດ, ພາກ ແລະ ທ້ອງຖິ່ນ, ລວມທັງກົນໄກການເງິນກອງກາງ ເຊິ່ງສາມາດປ່ຽນແປງສາທາລະນະ ແລະ ສ່ວນຕົວ/ເອກະຊົນ, ການເງິນປະເທດ ແລະ ສາກົນ. ພວກເຮົາຈະເຮັດວຽກເພື່ອສົ່ງເສີມກົນໄກບັນເທົາຄວາມສ່ຽງ ເຊັ່ນ: ຕົວແທນຮັບປະກັນການລົງທຶນຫຼາຍຝ່າຍ, ເຊິ່ງຄຸ້ມຄອງຄວາມສ່ຽງດ້ານເງິນຕາ, ເພື່ອຫຼຸດລາຄາ/ຄ່າໃຊ້ຈ່າຍຂອງທຶນເພື່ອກະຕຸ້ນພາກສ່ວນເອກະຊົນ ແລະ ຄອບຄົວໃຫ້ເຂົ້າຮ່ວມໃນການພັດທະນາເມືອງແບບຍືນຍົງ ແລະ ຄວາມພະຍາຍາມກໍ່ສ້າງຄວາມທົນທານ, ລວມທັງການເຂົ້າເຖິງກົນໄກປັບປ່ຽນ/ຍົກຍ້າຍຄວາມສ່ຽງ.

140. ພວກເຮົາຈະສະໜັບສະໜູນການພັດທະນາຂອງຜະລິດຕະພັນທາງການເງິນຂອງທີ່ພັກອາໄສທີ່ຄອບຄອງ/ເປັນເຈົ້າຂອງ ແລະ ຄວາມເໝາະສົມ, ສະໜັບສະໜູນການເຂົ້າຮ່ວມຂອງຂອບເຂດທີ່ແຕກຕ່າງຂອງສະຖາບັນການເງິນຫຼາຍຝ່າຍ, ທະນາຄານພັດທະນາພາກພື້ນ ແລະ ການພັດທະນາສະຖາບັນການເງິນ, ຕົວແທນການຮ່ວມມື, ຜູ້ໃຫ້ຢືມເງິນພາກສ່ວນເອກະຊົນ ແລະ ຜູ້ລົງທຶນ, ຜູ້ຮ່ວມມືໃຫ້ຢືມເງິນ ແລະ ການເງິນຈຸລະພາກເພື່ອລົງທຶນໃນທີ່ພັກອາໄສທີ່ເພີ່ມຂຶ້ນ ແລະ ຄອບຄອງໃນທຸກໆຮູບແບບ.

141. ພວກເຮົາຍັງຈະພິຈາລະນາໃນການສ້າງຕັ້ງພື້ນຖານໂຄງລ່າງການຂົນສົ່ງດ້ານເຂດແດນ ແລະ ເມືອງ ແລະ ກອງທຶນການບໍລິການໃນລະດັບຊາດ, ອີງໃສ່ຄວາມຫຼາກຫຼາຍຂອງຂອບເຂດຊັບພະຍາກອນກອງທຶນຈາກເງິນຊ່ວຍເຫຼືອສາທາລະນະເພື່ອການຊ່ວຍເຫຼືອຈາກພາກສ່ວນອື່ນທີ່ມີຢູ່ສາທາລະນະ ແລະ ເອກະຊົນ, ຈະຮັບປະກັນການຮ່ວມມືລະຫວ່າງຜູ້ດໍາເນີນການ, ການແຊກແຊງ, ແລະ ຄວາມຮັບຜິດຊອບ.

142. ພວກເຮົາເຊື້ອເຊີນສະຖາບັນການເງິນຫຼາຍຝ່າຍສາກົນ, ທະນາຄານພັດທະນາພາກພື້ນ, ສະຖາບັນການເງິນພັດທະນາ ແລະ ຕົວແທນການຮ່ວມມືເພື່ອສະໜອງການສະໜັບສະໜູນດ້ານການເງິນ, ລວມທັງຜ່ານກົນໄກການເງິນນະວະຕະກໍາ, ເຮັດໂປຼແກມດ້ວຍຄອມພິວເຕີ້ ແລະ ວາງໂຄງການສໍາລັບການຈັດຕັ້ງປະຕິບັດວາລະພັດທະນາເມືອງສະບັບໃໝ່, ໂດຍສະເພາະໃນການພັດທະນາປະເທດ.

143. ພວກເຮົາສະໜັບສະໜູນການເຂົ້າເຖິງກອງທຶນຫຼາຍຝ່າຍທີ່ແຕກຕ່າງ, ລວມທັງກອງທຶນສະພາບອາກາດສີຂຽວ, ສິ່ງອໍານວຍຄວາມສະດວກດ້ານສິ່ງແວດລ້ອມໂລກ, ກອງທຶນການປັບຕົວ ແລະ ກອງທຶນການລົງທຶນດ້ານສະພາບອາກາດ ແລະ ອື່ນໆ, ຮັກສາຊັບພະຍາກອນສໍາລັບການປັບຕົວການປ່ຽນແປງຂອງສະພາບອາກາດ ແລະ ແຜນການບັນເທົາ/ຫຼຸດຜ່ອນ, ນະໂຍບາຍ, ລາຍການ/ແຜນງານ ແລະ ການປະຕິບັດສໍາລັບລັດຖະບານທ້ອງຖິ່ນ ແລະ ພາກ ພາຍໃນຂອບແຜນງານຂອງວິທີການທີ່ເປັນເອກະພາບ. ພວກເຮົາຈະເຮັດວຽກຮ່ວມກັນກັບສະຖາບັນການເງິນພາກ ແລະ ທ້ອງຖິ່ນ ຕາມຄວາມເໝາະສົມ ເພື່ອພັດທະນາການແກ້ໄຂບັນຫາດ້ານພື້ນຖານໂຄງລ່າງການເງິນ ສະພາບອາກາດ ແລະ ສ້າງກົນໄກເໝາະສົມສໍາລັບການຊອກຫາເຄື່ອງມືການເງິນທີ່ເຮັດໃຫ້ມີການປ່ຽນແປງ, ສອດຄ່ອງກັບທຸກໆຂອບແຜນງານແຫ່ງຊາດ ເພື່ອຮັບປະກັນຄວາມຍືນຍົງຂອງໜີ້ ແລະ ງົບປະມານໃນທຸກໆລະດັບຂອງລັດຖະບານ.

144. ພວກເຮົາຈະສໍາຫຼວດ ແລະ ພັດທະນາການແກ້ໄຂບັນຫາທີ່ພໍຈະເຮັດໄດ້/ເໝາະສົມຕໍ່ຄວາມສ່ຽງດ້ານໄພພິບັດ ແລະ ສະພາບອາກາດໃນການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງ, ໂດຍການເຮັດວຽກຮ່ວມກັນກັບປະກັນໄພ ແລະ ສະຖາບັນເຮັດປະກັນໄພຄືນໃໝ່ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງພ້ອມທັງສໍາພັນກັບການລົງທຶນໃນເມືອງ ແລະ ພື້ນຖານໂຄງລ່າງເມືອງໃຫຍ່, ຕຶກອາຄານ ແລະ ຊັບສິນເມືອງອື່ນໆ, ພ້ອມດຽວກັນກໍ່ແມ່ນປະຊາກອນໃນທ້ອງຖິ່ນເພື່ອປ້ອງກັນບ່ອນພັກອາໄສຂອງເຂົາ ແລະ ຄວາມຕ້ອງການທາງທຸລະກິດ.

145. ພວກເຮົາສະໜັບສະໜູນການໃຊ້ການເງິນສາທາລະນະສາກົນ, ລວມທັງຄວາມຊ່ວຍເຫຼືອການພັດທະນາເປັນທາງການ ແລະ ອື່ນໆ, ເຮັດໃຫ້ເກີດມີການປ່ຽນແປງການລະດົມຊັບພະຍາກອນເພີ່ມເຕີມຈາກແຫຼ່ງຕ່າງໆທັງໝົດ, ທັງສາທາລະນະ ແລະ ເອກະຊົນ/ສ່ວນຕົວ ສໍາລັບການພັດທະນາດິນແດນ ແລະ ເມືອງແບບຍືນຍົງ. ສິ່ງນີ້ອາດຈະລວມໃນການບັນເທົາຄວາມສ່ຽງສໍາລັບຜູ້ລົງທຶນທີ່ມີຄວາມສໍາຄັນ, ໃນການຮັບຮູ້ຂອງຄວາມເປັນຈິງທີ່ການເງິນສາທາລະນະສາກົນສະແດງບົດບາດຄວາມສໍາຄັນໃນການເປັນສ່ວນເພີ່ມຂອງຄວາມພະຍາຍາມຂອງບັນດາປະເທດທີ່ລະດົມຊັ

ບພະຍາກອນສາທາລະນະແບບພາຍໃນ, ໂດຍສະເພາະໃນປະເທດທີ່ບໍ່ມີຄວາມໝັ້ນຄົງ ແລະ ທຸກຍາກກັບຊັບພະຍາກອນພາຍໃນທີ່ມີຄວາມຈໍາກັດ.

146. ພວກເຮົາຈະຂະຫຍາຍໂອກາດສໍາລັບພາກເໜືອ-ໃຕ້, ໃຕ້-ໃຕ້, ພາກພື້ນສາມຫຼ່ຽມ ແລະ ການຮ່ວມມືສາກົນ, ພ້ອມກັນກັບການຮ່ວມມືເມືອງຫາເມືອງ, ກະຈາຍອໍານາດ ຫຼື ຄວາມຈະເລີນຈາກສູນກາງຫາສ່ວນລຸ່ມ ແລະ ພາກຕາມຄວາມເໝາະສົມ, ຊ່ວຍເຫຼືອໃນການພັດທະນາເມືອງແບບຍືນຍົງ, ການພັດທະນາຄວາມສາມາດ ແລະ ສະໜັບສະໜູນການແລກປ່ຽນຂອງການແກ້ໄຂໃນເມືອງ ແລະ ການຮຽນຮູ້ເຊິ່ງກັນ ແລະ ກັນໃນທຸກໆລະດັບ ແລະ ພາກສ່ວນທີ່ກ່ຽວຂ້ອງທັງໝົດ.

147. ພວກເຮົາຈະສົ່ງເສີມຄວາມສາມາດພັດທະນາ ຄືກັບວິທີການຫຼາຍແງ່ມູມທີ່ແກ້ໄຂຄວາມສາມາດຂອງຫຼາຍພາກສ່ວນ ແລະ ສະຖາບັນໃນທຸກໆລະດັບຂອງການປົກຄອງ ແລະ ຮວບຮວມຄວາມສາມາດສ່ວນບຸກຄົນ, ສັງຄົມ, ແລະ ສະຖາບັນ ໃຫ້ກໍານົດສູດ, ຈັດຕັ້ງປະຕິບັດ, ເພີ່ມທະວີ, ຄຸ້ມຄອງ, ຄວບຄຸມ ແລະ ປະເມີນນະໂຍບາຍສາທາລະນະ/ລວມສໍາລັບການພັດທະນາເມືອງແບບຍືນຍົງ.

148. ພວກເຮົາຈະສ້າງຄວາມເຂັ້ມແຂງໃນຄວາມສາມາດຂອງລັດຖະບານຊາດ, ພາກ ແລະ ທ້ອງຖິ່ນ, ລວມທັງສະມາຄົມລັດຖະບານທ້ອງຖິ່ນ ຕາມຄວາມເໝາະສົມ, ຈະເຮັດວຽກຮ່ວມກັບແມ່ຍິງ ແລະ ເດັກຍິງ, ເດັກນ້ອຍ ແລະ ຊາວໜຸ່ມ, ຄົນສູງອາຍຸ ແລະ ຄົນພິການ, ຄົນພື້ນເມືອງ ແລະ ຊຸມຊົນໃນທ້ອງຖິ່ນ, ກຸ່ມຄົນເຫຼົ່ານັ້ນໃນສະພາບບໍ່ໝັ້ນຄົງ, ພ້ອມກັນນີ້ກໍ່ແມ່ນສັງຄົມສົງເຄາະ, ສະຖາບັນຄົ້ນຄວ້າ ແລະ ການສຶກສາ ໃນການວາງແນວທາງໃຫ້ສອດຄ່ອງກັບຂັ້ນຕອນການປົກຄອງຂອງສະຖາບັນ ແລະ ໂຄງການ, ຈະເຮັດໃຫ້ພວກເຂົາເຂົ້າຮ່ວມໃນການຕັດສິນໃຈກ່ຽວກັບການພັດທະນາດິນແດນ ແລະ ເມືອງຢ່າງມີປະສິດທິພາບ.

149. ພວກເຮົາຈະສະໜັບສະໜູນສະມາຄົມຂອງລັດຖະບານທ້ອງຖິ່ນໃຫ້ເປັນຜູ້ສະໜັບສະໜູນ ແລະ ຜູ້ຕອບສະໜອງຂອງຄວາມສາມາດໃນການພັດທະນາ, ຈະຮັບຮູ້ ແລະ ສ້າງຄວາມເຂັ້ມແຂງຕາມຄວາມເໝາະສົມ ທັງການມີສ່ວນກ່ຽວຂ້ອງໃນການປຶກສາຫາລືກ່ຽວກັບນະໂຍບາຍເມືອງແຫ່ງຊາດ ແລະ ການພັດທະນາບູລິມະສິດ ແລະ ການຮ່ວມມືຂອງພວກເຂົາກັບລັດຖະບານພາກ ແລະ ທ້ອງຖິ່ນທີ່ສອດຄ່ອງ/ພ້ອມກັບສັງຄົມສົງເຄາະ, ພາກສ່ວນເອກະຊົນ, ຊ່ຽວຊານ, ສະຖາບັນຄົ້ນຄວ້າ ແລະ ການສຶກສາ, ແລະ ເຄືອຄ່າຍຂອງພວກເຂົາທີ່ມີຢູ່, ນໍາສົ່ງແຜນການ/ກໍານົດການການພັດທະນາຄວາມສາມາດ. ສິ່ງນີ້ຄວນຈະຖືກເຮັດສໍາເລັດໂດຍໃຊ້ການຮຽນກັບຄົນທີ່ມີລະດັບສໍາດຽວກັນ, ການປະຕິບັດງານ/ແຜນງານທີ່ຮ່ວມມືກັນ ແລະ ຄວາມສໍາພັນທີ່ກ່ຽວຂ້ອງກັບວິຊາ ເຊັ່ນ: ການຮ່ວມມື ລະຫວ່າງ-ເທດສະບານ, ໃນມາດຕາສ່ວນທົ່ວໂລກ, ພາກພື້ນ, ປະເທດ, ພາກ ແລະ ທ້ອງຖິ່ນ, ລວມທັງການສ້າງຕັ້ງເຄືອຄ່າຍຂອງຜູ້ດໍາເນີນການ/ຜູ້ປະກອບອາຊີບ ແລະ ການປະຕິບັດລະຫວ່າງສອງລະບົບວິທະຍາສາດ-ນະໂຍບາຍ.

150. ພວກເຮົາເນັ້ນຄວາມຕ້ອງການສໍາລັບການຮ່ວມມືເສີມ ແລະ ການແລກປ່ຽນຄວາມຮູ້ທາງດ້ານວິທະຍາສາດ, ເທັກໂນໂລຢີ ແລະ ນະວະຕະກໍາ ເພື່ອປະໂຫຍດໃນການພັດທະນາເມືອງແບບຍືນຍົງ, ການຮ່ວມມືກັນ, ການປະສານ, ແລະ ຜົນທີ່ຈະເກີດຈາກການຮ່ວມມື ຫຼື ປະສານງານກັນທີ່ຈະມີປະສິດທິພາບແບບເຕັມສ່ວນກັບຂັ້ນຕອນຂອງກົນໄກການອໍານວຍຄວາມສະດວກທາງດ້ານເທັກໂນໂລຢີທີ່ໄດ້ຮັບການສ້າງຕັ້ງພາຍໃຕ້ວາລະແຜນງານ Addis Ababa ແລະ ເລີ່ມ/ລິງມືໃນວາລະການພັດທະນາແບບຍືນຍົງ ປີ2030.

151. ພວກເຮົາຈະສົ່ງເສີມແຜນການ ການພັດທະນາຄວາມສາມາດເພື່ອຊ່ວຍລັດຖະບານພາກ ແລະ ທ້ອງຖິ່ນໃນການຄຸ້ມຄອງ ແລະ ແຜນການດ້ານການເງິນ, ຢຶດໝັ້ນໃນທຸກໆລະດັບຂອງການປະສານ ແລະ ສະຖາບັນ, ລວມທັງມາດຕະການຕ້ານຄວາມເຊື່ອມເສຍ ແລະ ຄວາມເຂົ້າໃຈໃນຄວາມຕ້ອງການຂອງຜູ້ອື່ນທາງດ້ານສິ່ງແວດລ້ອມ, ຈະຍອມຮັບຂັ້ນຕອນທີ່ມີຄວາມຜິດພາດແບບເປັນກາງ/ອິດສະຫຼະ ແລະ ໂປ່ງໃສ, ການບັນຊີ, ການຈັດຫາ, ການລາຍງານ, ການກວດສອບ ແລະ ການຄວບຄຸມ/ຕິດຕາມການສັງເກດ ແລະ ອື່ນໆ, ຈະກວດຄືນການເຮັດຕາມ (ລະບຽບ, ກົດໝາຍ) ແລະ ສາມັນຕະພາບ (ຜົນງານ) ຂອງພາກ ແລະ ປະເທດ, ກັບຄວາມມຸ່ງໝັ້ນສະເພາະໃນງົບປະມານຂອງການຕອບສະໜອງທາງດ້ານບົດບາດຍິງ-ຊາຍ ແລະ ໄວອາຍຸ, ການພັດທະນາ ແລະ ການນໍາໃຊ້ຕົວເລກໃນການບັນທຶກ ແລະ ຂັ້ນຕອນຂອງການບັນຊີ ເພື່ອສົ່ງເສີມວິທີການທີ່ເນັ້ນຜົນຮັບ ແລະ ສ້າງຄວາມສາມາດທາງການຊ່າງ (ຝີມືແຮງງານ) ແລະ ການຄຸ້ມຄອງໃນໄລຍະກາງຫາຍາວນານ.

152. ພວກເຮົາຈະສົ່ງເສີມແຜນການ ການພັດທະນາດ້ານຄວາມສາມາດໃນການນໍາໃຊ້ເຄື່ອງມືທາງການເງິນ ແລະ ລາຍຮັບຈາກດິນທາງຖືກກົດໝາຍ, ພ້ອມດຽວກັນນັ້ນ ກໍ່ແມ່ນວຽກງານ/ໜ້າທີ່ທາງຕະຫຼາດດິນໃນຄວາມເປັນຈິງ, ສໍາລັບພະນັກງານລັດໃນທ້ອງຖິ່ນ ແລະ ຜູ້ເຮັດ/ອອກນະໂຍບາຍ, ສຸມໃສ່ພື້ນຖານທາງເສດຖະກິດ ແລະ ກົດໝາຍຂອງການເຂົ້າຢຶດພື້ນທີ່ມີຄ່າ, ລວມທັງການຈັດຈໍານວນ, ການເຂົ້າຢຶດໄດ້ ແລະ ການຊ່ວຍເຫຼືອ/ເຮັດໃຫ້ມີການເພີ່ມມູນຄ່າຂອງດິນ.

153. ພວກເຮົາຈະສົ່ງເສີມການນໍາໃຊ້ຄວາມສໍາພັນຂອງພາກສ່ວນທີ່ມີສ່ວນກ່ຽວຂ້ອງຫຼາຍຝ່າຍແບບເປັນລະບົບໃນຂັ້ນຕອນການພັດທະນາເມືອງ ຕາມຄວາມເໝາະສົມ, ຈະສ້າງຕັ້ງນະໂຍບາຍທີ່ໂປ່ງໃສ ແລະ ຈະແຈ້ງ, ວິທີການ ແລະ ຂອບແຜນງານການຄຸ້ມຄອງ ແລະ ການເງິນ, ພ້ອມກັນນີ້ ກໍ່ຈະວາງແຜນອອກຄູ່ມືສໍາລັບຄວາມສໍາພັນຂອງພາກສ່ວນທີ່ມີສ່ວນກ່ຽວຂ້ອງຫຼາຍຝ່າຍ.

154. ພວກເຮົາຮັບຮູ້ການຊ່ວຍເຫຼືອທີ່ສໍາຄັນຂອງການລິເລີ່ມເຊິ່ງຮ່ວມກັນມືອາສາສະໝັກ, ຄວາມສໍາພັນ ແລະ ການຮ່ວມມື ທີ່ວາງແຜນຈະລິເລີ່ມ ແລະ ເພີ່ມທະວີການຈັດຕັ້ງປະຕິບັດຂອງວາລະການພັດທະນາເມືອງສະບັບໃໝ່, ຈະຊີ້ຄວາມສໍາຄັນການປະຕິບັດທີ່ດີທີ່ສຸດ ແລະ ການແກ້ໄຂບັນຫາທາງນະວະຕະກໍາ, ລວມທັງການສົ່ງເສີມເຄືອຄ່າຍການຜະລິດຮ່ວມກັນລະຫວ່າງເອກະລັກຂອງພາກ, ລັດຖະບານທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

155. ພວກເຮົາຈະສົ່ງເສີມການລິເລີ່ມຄວາມສາມາດໃນການພັດທະນາເພື່ອຂະຫຍາຍກໍາລັງ ແລະ ສ້າງຄວາມເຂັ້ມແຂງທາງດ້ານທັກສະ ແລະ ຄວາມສາມາດຂອງແມ່ຍິງ ແລະ ເດັກຍິງ, ເດັກນ້ອຍ ແລະ ໄວໜຸ່ມ, ຜູ້ສູງອາຍຸ ແລະ ຄົນພິການ, ຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ, ພ້ອມກັນນີ້ກໍ່ແມ່ນກຸ່ມຄົນໃນສະພາບບໍ່ໝັ້ນຄົງ, ສໍາລັບການວາງແນວທາງເຮັດໃຫ້ສອດຄ່ອງກັບຂັ້ນຕອນຂອງລັດຖະບານ, ຈະກະຕຸ້ນໃນການສົນທະນາ, ຈະສົ່ງເສີມ ແລະ ຄຸ້ມຄອງ/ປ້ອງກັນສິດທິມະນຸດ ແລະ ຕ້ານການແບ່ງແຍກ, ເພື່ອຮັບປະກັນການຕັດສິນໃຈເຂົ້າຮ່ວມຂອງເຂົາ/ປະຊາຊົນໃນການພັດທະນາດິນແດນ ແລະ ເມືອງ ຢ່າງມີປະສິດທິພາບ.

156. ພວກເຮົາຈະສົ່ງເສີມການພັດທະນາຂອງນະໂຍບາຍດ້ານເທັກໂນໂລຢີການສື່ສານ ແລະ ຂ່າວສານແຫ່ງຊາດ ແລະ ຍຸດທະສາດຂອງລັດຖະບານທາງອີເລັກໂຕຣນິກ, ພ້ອມກັນນີ້ ກໍ່ມີເຄື່ອງມືການປົກຄອງທີ່ພົນລະເມືອງໃຊ້ຕົວເລກເປັນສູນກາງ, ຈະເຈາະເຂົ້າໃນນະວະຕະກໍາທາງເທັກໂນໂລຢີ, ລວມທັງແຜນງານການພັດທະນາຄວາມສາມາດ, ເພື່ອເຮັດໃຫ້ເທັກໂນໂລຢີການສື່ສານ ແລະ ຂໍ້ມູນສາມາດເຂົ້າສູ່ສາທາລະນະ, ລວມທັງແມ່ຍິງ ແລະ ເດັກຍິງ, ເດັກນ້ອຍ ແລະ ໄວໜຸ່ມ, ຜູ້ສູງອາຍຸ ແລະ ຄົນພິການ, ຄົນພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ, ພ້ອມກັນນີ້ກໍ່ແມ່ນກຸ່ມຄົນໃນສະພາບບໍ່ໝັ້ນຄົງ, ຈະເຮັດໃຫ້ພວກເຂົາພັດທະນາ ແລະ ຝຶກຫັດໃຫ້ມີຄວາມຮັບຜິດຊອບກ່ຽວກັບເມືອງ, ຂະຫຍາຍກ້ວາງການເຂົ້າຮ່ວມ ແລະ ສະໜັບສະໜູນການປົກຄອງທີ່ຮັບຜິດຊອບ, ພ້ອມທັງຈະເພີ່ມປະສິດທິພາບ. ການນໍາໃຊ້ເຄື່ອງມື ແລະ ເວທີກ່ຽວກັບຕົວເລກ, ລວມທັງລະບົບຂໍ້ມູນດິນແດນ, ຈະຖືກກະຕຸ້ນໃຫ້ປັບປຸງການອອກແບບ ແລະ ການວາງແຜນການດ້ານດິນແດນ ແລະ ເມືອງແບບເຊື່ອມສານໃນໄລຍະຍາວ, ການຈັດການ ແລະ ຄຸ້ມຄອງດິນ ແມ່ນເຂົ້າເຖິງເມືອງ ແລະ ການບໍລິການຂອງເມືອງໃຫຍ່.

157. ພວກເຮົາຈະສະໜັບສະໜູນວິທະຍາສາດ, ການຄົ້ນຄວ້າ ແລະ ນະວະຕະກໍາ, ລວມທັງເລັ່ງໃສ່ນະວະຕະກໍາທາງສັງຄົມ, ເທັກໂນໂລຢີ, ຕົວເລກ, ແລະ ທໍາມະຊາດ, ວິທະຍາສາດນະໂຍບາຍ/ວິທະຍາສາດ ແລະ ນະໂຍບາຍທີ່ເຂັ້ມແຂງໄດ້ປະສານກັນໃນການກໍານົດນະໂຍບາຍ ແລະ ການວາງແຜນການກ່ຽວກັບດິນແດນ ແລະ ເມືອງ, ຈະເຮັດໃຫ້ກົນໄກເປັນລະບົບສໍາລັບການອອກຄໍາເຫັນ ແລະ ແລກປ່ຽນຂ່າວສານ, ຄວາມຮູ້ ແລະ ຄວາມຊ່ຽວຊານ, ລວມທັງຂໍ້ມູນທີ່ມີການເກັບກໍາ, ການວິເຄາະ, ການຈັດມາດຕະຖານ ແລະ ການເຜີຍແຜ່ຂໍ້ມູນທາງພູມສາດ, ຊຸມຊົນທີ່ລວມຕົວກັນ, ມີຄຸນນະພາບສູງ, ທັນເວລາ ແລະ ໜ້າເຊື່ອຖື ໂດຍຖືກແຍກກັນດ້ານລາຍຮັບ, ເພດ, ອາຍຸ, ເຊື້ອຊາດ, ພື້ນຖານຂອງຄົນກຸ່ມນ້ອຍ, ສະຖານະພາບການອົບພະຍົກ, ຄວາມພິການ, ທີ່ຕັ້ງທາງພູມສາດ ແລະ ລັກສະນະພິເສດອື່ນໆທີ່ກ່ຽວຂ້ອງໃນ ບໍລິບົດ ຂອງຊາດ, ພາກ ແລະ ທ້ອງຖິ່ນ.

158. ພວກເຮົາຈະສ້າງຄວາມເຂັ້ມແຂງທາງຂໍ້ມູນ ແລະ ຂອບເຂດທາງສະຖິຕິໃນລະດັບຊາດ, ພາກ ແລະ ທ້ອງຖິ່ນ ເພື່ອຕິດຕາມການສັງເກດຄວາມຄືບໜ້າໃຫ້ບັນລຸຜົນສຳເລັດຢ່າງມີປະສິດທິພາບໃນການຈັດຕັ້ງປະຕິບັດຂອງຍຸດທະສາດ ແລະ ນະໂຍບາຍການພັດທະນາເມືອງແບບຍືນຍົງ, ຈະແຈ້ງການຕັດສິນໃຈ ແລະ ການກວດຄືນທີ່ເໝາະສົມ. ວິທີການເກັບກຳຂໍ້ມູນສຳລັບການຈັດຕັ້ງປະຕິບັດ, ຕິດຕາມ ແລະ ກວດຄືນຂອງວາລະການພັດທະນາເມືອງສະບັບໃໝ່ ຄວນຈະອີງໃສ່ແຫຼ່ງຂໍ້ມູນທີ່ເປັນທາງການຂອງຊາດ, ພາກ ແລະ ທ້ອງຖິ່ນ ແລະ ແຫຼ່ງຂໍ້ມູນອື່ນໆຕາມຄວາມເໝາະສົມ, ຈະເປີດເຜີຍ, ໂປ່ງໃສ ແລະ ສອດຄ່ອງກັບເປົ້າໝາຍຂອງການເຄົາລົບສິດສ່ວນຕົວ ແລະ ໜ້າທີ່ພັນທະທາງດ້ານສິດຂອງມະນຸດທຸກຄົນ ແລະ ຄຳໝັ້ນສັນຍາ. ຄວາມຄືບໜ້າກ່ຽວກັບການກຳນົດເອົາປະຊາຊົນເປັນຫຼັກໃນທົ່ວໂລກຂອງການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງອາດຈະສະໜັບສະໜູນວຽກງານນີ້.

159. ພວກເຮົາຈະສະໜັບສະໜູນບົດບາດ ແລະ ເພີ່ມທະວີຄວາມສາມາດຂອງລັດຖະບານແຫ່ງຊາດ, ພາກ ແລະ ທ້ອງຖິ່ນໃນການເກັບກຳຂໍ້ມູນ, ສ້າງແຜນທີ່, ວິເຄາະ ແລະ ເຜີຍແຜ່ໃນການສະໜັບສະໜູນການປົກຄອງທີ່ອີງໃສ່ຫຼັກຖານ, ຈະສ້າງພື້ນຖານຄວາມຮູ້ແບບມີສ່ວນຮ່ວມໂດຍການນຳໃຊ້ທັງຂໍ້ມູນທີ່ປຽບທຽບໄດ້ໃນທົ່ວໂລກ ແລະ ກຳເນີດໃນທ້ອງຖິ່ນ, ລວມທັງຜ່ານການສຳຫຼວດສຳມະໂນຄົວ, ການສຳຫຼວດຄົວເຮືອນ, ການລົງທະບຽນຂອງປະຊາກອນ, ຂັ້ນຕອນທີ່ຕິດຕາມການສັງເກດຊຸມຊົນເປັນຫຼັກ ແລະ ແຫຼ່ງອື່ນໆທີ່ກ່ຽວຂ້ອງ, ໂດຍຖືກແຍກກັນດ້ານລາຍຮັບ, ເພດ, ອາຍຸ, ເຊື້ອຊາດ, ພື້ນຖານຂອງຄົນກຸ່ມນ້ອຍ, ສະຖານະພາບການອົບພະຍົກ, ຄວາມພິການ/ການບໍ່ມີຄວາມສາມາດ, ທີ່ຕັ້ງທາງພູມສາດ ແລະ ລັກສະນະພິເສດອື່ນໆທີ່ກ່ຽວຂ້ອງໃນ ບໍລິບົດຂອງຊາດ, ພາກ ແລະ ທ້ອງຖິ່ນ.

160. ພວກເຮົາຈະສະໜັບສະໜູນຄວາມຄິດສ້າງສັນ, ການສົ່ງເສີມ ແລະ ການເພີ່ມທະວີການເປີດເວທີຂໍ້ມູນ, ເປັນມິດກັບຜູ້ໃຊ້ ແລະ ການມີສ່ວນຮ່ວມ ໂດຍການນຳໃຊ້ເຄື່ອງມືທາງສັງຄົມແລະ ເທັກໂນໂລຢີທີ່ມີຢູ່ເພື່ອປ່ຽນແປງ ແລະ ອອກຄຳຄິດເຫັນດ້ານຄວາມຮູ້ລະຫວ່າງລັດຖະບານຊາດ, ພາກ ແລະ ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ, ລວມທັງປະຊາຊົນ ແລະ ຜູ້ດຳເນີນການທີ່ບໍ່ຂຶ້ນກັບລັດ, ເພື່ອເພີ່ມທະວີການຄຸ້ມຄອງ ແລະ ວາງແຜນການພັດທະນາເມືອງຢ່າງມີປະສິດທິພາບ, ປະສິດທິພາບ ແລະ ຄວາມໂປ່ງໃສຜ່ານການປົກຄອງທາງອີເລັກໂຕຣນິກ, ວິທີການທີ່ຖືກຊ່ວຍເຫຼືອໂດຍທາງເທັກໂນໂລຢີຂ່າວສານແລະ ການສື່ສານ, ແລະ ການຄຸ້ມຄອງຂ່າວສານທາງດ້ານດິນແດນ.

ການຕິດຕາມ ແລະ ການທົບທວນຄືນ

161. ພວກເຮົາຈະດຳເນີນການຕິດຕາມໄລຍະໜຶ່ງ ແລະ ທົບທວນຄືນວາລະເມືອງໃໝ່, ເພື່ອຮັບປະກັນຄວາມສອດຄ່ອງກັນຢູ່ລະດັບຊາດ, ລະດັບພາກ ແລະ ລະດັບທ້ອງຖິ່ນໂດຍທົ່ວໄປ, ເພື່ອໃຫ້ເກີດຄວາມຄືບໜ້າ, ປະເມີນຜົນກະທົບ ແລະ ຮັບປະກັນວ່າການຈັດຕັ້ງປະຕິບັດວາລະຢ່າງມີປະສິດທິພາບ ແລະ ທັນເວລາ, ມີຄວາມເຊື່ອຖືຕໍ່ປະຊາຊົນຂອງພວກເຮົາ ແລະ ມີຄວາມໂປ່ງໃສ, ມີຄວາມທົ່ວເຖິງ.

162. ພວກເຮົາຊຸກຍູ້ໃຫ້ເກີດຄວາມເຕັມໃຈ, ມີຄວາມເປັນຜູ້ນຳ, ເປີດເຜີຍ, ທົ່ວເຖິງ, ຫຼາກຫຼາຍລະດັບ, ມີສ່ວນຮ່ວມ ແລະ ໂປ່ງໃສໃນການຕິດຕາມ ແລະ ທົບທວນຄືນວາລະພັດທະນາເມືອງໃໝ່. ຂະບວນການຕ່າງໆຄວນນຳເຂົ້າໄປສູ່ການປະກອບສ່ວນທີ່ເຊື່ອຖືໄດ້ຂອງລະດັບຊາດ, ລະດັບພາກ ແລະ ລະດັບທ້ອງຖິ່ນຂອງໜ່ວຍງານລັດ ແລະ ຖືກຈັດຕັ້ງປະຕິບັດໂດຍການປະກອບສ່ວນຈາກລະບົບຂອງອົງການສະຫະປະຊາຊາດ, ບັນດາອົງການຈັດຕັ້ງລະດັບພາກພື້ນ ແລະ ລະດັບພາກ, ກຸ່ມຮ່ວມງານຫຼັກ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ, ແລະ ຄວນເປັນຂະບວນທີ່ຕໍ່ເນື່ອງຈຸດປະສົງເພື່ອປະດິດສ້າງ ແລະ ສ້າງຄວາມເຂັ້ມແຂງໃຫ້ບັນດາຄູ່ຮ່ວມງານທ່າມກາງທຸກໆພາກສ່ວນທີ່ກ່ຽວຂ້ອງ ແລະ ສະໜັບສະໜູນການແລກປ່ຽນວິທີການແກ້ໄຂບັນຫາ ແລະ ຮຽນຮູ້ຮ່ວມກັນກ່ຽວກັບຕົວເມືອງ.

163. ພວກເຮົາຮັບຮູ້ຄວາມສຳຄັນຂອງລັດຖະບານທ້ອງຖິ່ນ ໃນຖານະຄູ່ຮ່ວມພັດທະນາທີ່ ຫ້າວຫັນໃນການຕິດຕາມ ແລະ ທົບທວນຄືນວາລະພັດທະນາເມືອງໃໝ່ຢູ່ທຸກໆຂັ້ນ ແລະ ຊຸກຍູ້ໃຫ້ພວກເຂົາພັດທະນາ, ໂດຍຮ່ວມກັບພາກລັດທັງລະດັບຊາດ ແລະ ລະດັບພາກພື້ນ, ຕາມຄວາມເໝາະສົມ, ປະຕິບັດການຕິດຕາມ ແລະ ທົບທວນຄືນບັນດາກົນໄກຕ່າງໆຢູ່ຂັ້ນທ້ອງຖິ່ນ, ໂດຍຜ່ານບັນດາສະມາຄົມທີ່ກ່ຽວຂ້ອງ ແລະ ຮູບແບບທີ່ເໝາະສົມ. ພວກເຮົາຈະພິຈາລະນາຄວາມເຂັ້ມແຂງ, ບ່ອນທີ່ເໝາະສົມ, ຄວາມສາມາດຂອງເຂົາເຈົ້າທີ່ຈະປະກອບສ່ວນເຂົ້າໃນວຽກງານນີ້.

164. ພວກເຮົາເນັ້ນຢໍ້າວ່າການຕິດຕາມ ແລະ ການທົບທວນຄືນວາລະພັດທະນາເມືອງໃໝ່ ຕ້ອງມີການເຊື່ອມໂຍງກັນທີ່ມີປະສິດທິພາບກັບການຕິດຕາມ ແລະ ການທົບທວນວາລະ ປີ 2030 ເພື່ອການພັດທະນາແບບຍືນຍົງເພື່ອຮັບປະກັນການປະສານງານ ແລະ ຄວາມສອດຄ່ອງກັນໃນການຈັດຕັ້ງປະຕິບັດຂອງພວກເຂົາ.

165. ພວກເຮົາຂໍຢືນຢັນເຖິງບົດບາດ ແລະ ຄວາມຊໍານານງານຂອງອົງການສະຫະປະຊາຊາດ-ສະພາບແວດລ້ອມ, ພາຍໃນບົດບັນຍັດ, ເຊິ່ງເປັນຈຸດທີ່ສໍາຄັນໃນການພັດທະນາຕົວເມືອງ ແລະ ການຄຸ້ມຄອງຊັບພະຍາກອນມະນຸດແບບຍືນຍົງ, ໂດຍການຮ່ວມມືກັບລະບົບນິຕິບຸກຄົນອື່ນໆຂອງອົງການສະຫະປະຊາຊາດ, ຮັບຮູ້ການເຊື່ອມໂຍງກັນລະຫວ່າງການພັດທະນາຕົວເມືອງແບບຍືນຍົງ ແລະ, ພາກສ່ວນອື່ນໆ, ການພັດທະນາແບບຍືນຍົງ, ການຫຼຸດຜ່ອນຄວາມສ່ຽງທາງໄພພິບັດ ແລະ ອາກາດປ່ຽນແປງ.

166. ພວກເຮົາເຊື້ອເຊີນສະມັດຊາໃຫຍ່ຮຽກຮ້ອງເລຂາທິການໃຫຍ່, ກັບຄໍາເຫັນຂອງອາສາສະໝັກທີ່ມາຈາກປະເທດ ແລະ ພາກພື້ນທີ່ກ່ຽວຂ້ອງ ແລະ ອົງການຈັດຕັ້ງສາກົນ, ລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຂອງວາລະການພັດທະນາເມືອງສະບັບໃໝ່ໃນທຸກໆສີ່ປີ, ກັບການລາຍງານຄັ້ງທໍາອິດທີ່ຖືກສະເໜີ/ຍື່ນລະຫວ່າງກອງປະຊຸມສະໄໝທີ 72 ຂອງສະມັດຊາໃຫຍ່.

167. ການລາຍງານຈະຕອບສະໜອງການວິເຄາະທາງຄຸນນະພາບ ແລະ ປະລິມານ ຂອງຄວາມຄືບໜ້າທີ່ໄດ້ມາຈາກການຈັດຕັ້ງປະຕິບັດຂອງວາລະການພັດທະນາເມືອງສະບັບໃໝ່ ແລະ ເປົ້າໝາຍທີ່ເປັນເອກະພາບ/ຕົກລົງກັນໃນລະດັບສາກົນ ແລະ ເປົ້າໝາຍທີ່ກ່ຽວພັນໃນການຕັ້ງຖິ່ນຖານຂອງມະນຸດ ແລະ ຕົວເມືອງແບບຍືນຍົງ. ການວິເຄາະຈະອີງໃສ່ ການເຄື່ອນໄຫວຂອງລັດຖະບານແຫ່ງຊາດ, ພາກ ແລະ ທ້ອງຖິ່ນ, ອົງການການພັດທະນາທີ່ພັກອາໄສຂອງ ສປຊ, ພາກສ່ວນທີ່ກ່ຽວຂ້ອງອື່ນໆຂອງລະບົບ ສປຊ, ພາກສ່ວນທີ່ກ່ຽວຂ້ອງໃນການສະໜັບສະໜູນການຈັດຕັ້ງປະຕິບັດຂອງວາລະການພັດທະນາເມືອງສະບັບໃໝ່ ແລະ ບົດລາຍງານຂອງສະພາ/ຄະນະກໍາມະການ ປົກຄອງຂອງການພັດທະນາທີ່ພັກອາໄສຂອງ ສປຊ. ບົດລາຍງານຄວນຈະເອົາເຂົ້າລວມກັນ, ໃນດ້ານຂອບເຂດທີ່ອາດເປັນໄປໄດ້, ຄໍາເຫັນຂອງອົງການຈັດຕັ້ງ ແລະ ຂັ້ນຕອນຫຼາຍຝ່າຍຕາມສະຖານທີ່ເໝາະສົມ, ສັງຄົມສິງເຄາະ, ພາກສ່ວນເອກະຊົນ ແລະ ວິທະຍາການ. ສິ່ງນີ້ຄວນຈະສ້າງບົນຂັ້ນຕອນ ແລະ ເວທີທີ່ມີຢູ່ ເຊັ່ນ: ສະພາເມືອງຂອງໂລກທີ່ຮຽກປະຊຸມ/ເຕົ້າໂຮມໂດຍໜ່ວຍງານການພັດທະນາທີ່ພັກອາໄສຂອງ ສປຊ. ບົດລາຍງານຄວນຈະຫຼີກລ່ຽງການເຮັດສໍາເນົາ (ການເຮັດຊໍ້າກັນ), ຕອບສະໜອງສະພາບການ ແລະ ກົດໝາຍ/ນິຕິກໍາ, ຄວາມສາມາດ, ຄວາມຕ້ອງການ ແລະ ສິດທິພິເສດຂອງທ້ອງຖິ່ນ, ພາກ ແລະ ປະເທດ.

168. ການກະກຽມຂອງການລາຍງານຈະຖືກປະສານກັນ ໂດຍໜ່ວຍງານການພັດທະນາທີ່ພັກອາໄສຂອງສປຊ ໂດຍການຮ່ວມມືຢ່າງໃກ້ຊິດກັບພາກສ່ວນອື່ນໆທີ່ກ່ຽວຂ້ອງໃນລະບົບຂອງ ສປຊ, ເພື່ອຮັບປະກັນຂັ້ນຕອນການປະສານກັນດ້ານລະບົບທີ່ກ້ວາງໄກຂອງສປຊແບບມີສ່ວນຮ່ວມ. ບົດລາຍງານຈະຖືກຍື່ນຕໍ່ໃຫ້ສະມັດຊາໃຫຍ່ໂດຍຜ່ານສະພາສັງຄົມ ແລະ ເສດຖະກິດ.[18] ບົດລາຍງານຍັງຈະກະຈາຍຂ່າວ/ປ້ອນຂໍ້ມູນເຂົ້າໃນສະພາການເມືອງລະດັບສູງເພື່ອການພັດທະນາແບບຍືນຍົງ ໄດ້ຮຽກປະຊຸມພາຍໃຕ້ການອຸປະຖໍາຂອງສະມັດຊາໃຫຍ່, ດ້ວຍຄວາມມຸ້ງໝັ້ນວ່າຈະຮັບປະກັນຄວາມສອດຄ່ອງ, ການປະສານກັນ ແລະ ການເຊື່ອມຕໍ່ຮ່ວມມືກັບການຕິດຕາມ ແລະ ກວດຄືນຂອງວາລະການພັດທະນາແບບຍືນຍົງ ປີ2030.

169. ພວກເຮົາຈະສືບຕໍ່ສ້າງຄວາມເຂັ້ມແຂງໃນການລະດົມຄວາມພະຍາຍາມຜ່ານຄວາມສໍາພັນກັນ, ການສະໜັບສະໜູນ ແລະ ກິດຈະກໍາການເພີ່ມຈິດສໍານຶກ ທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດຂອງວາລະການພັດທະນາເມືອງສະບັບໃໝ່ໂດຍການນໍາໃຊ້ການລິເລີ່ມທີ່ມີຢູ່ ເຊັ່ນ: ວັນຂອງທີ່ພັກອາໄສໂລກ ແລະ ວັນຂອງເມືອງໂລກ, ຈະພິຈາລະນາການສ້າງຕັ້ງການລິເລີ່ມໃໝ່ໃນການລະດົມ ແລະ ກໍາເນີດການສະໜັບສະໜູນຈາກສັງຄົມສິງເຄາະ, ພົນລະເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ. ພວກເຮົາຮັບຮູ້ເຖິງຄວາມສໍາຄັນຂອງການສືບຕໍ່ກະຕຸ້ນໃນການຕິດຕາມ ແລະ ກວດຄືນວາລະການພັດທະນາເມືອງສະບັບໃໝ່ກັບສະມາຄົມລັດຖະບານພາກ ແລະ ທ້ອງຖິ່ນທີ່ໄດ້ເປັນຕົວແທນຂອງລັດຖະບານທ້ອງຖິ່ນ ແລະ ພາກພື້ນໃນສະພາໂລກ/ທີ່ໄດ້ສະແດງໃຫ້ເຫັນໃນສະພາໂລກຂອງລັດຖະບານທ້ອງຖິ່ນ ແລະ ພາກພື້ນ.

[18] The report is intended to replace the report of the Secretary-General to the Economic and Social Council on the coordinated implementation of the Habitat Agenda. It is also intended to be part of, and not additional to, the report of the Secretary-General requested by the General Assembly in its resolution under the relevant agenda item.

170. ພວກເຮົາຢັ້ງຢືນຄືນມະຕິຂອງສະມັດຊາໃຫຍ່ 51/177 ລົງວັນທີ 16 ທັນວາ 1996, 56/206 ລົງວັນທີ 21 ທັນວາ 2001, 67/216, 68/239 ແລະ 69/226, ແລະ ມະຕິອື່ນໆຂອງສະພາທີ່ກ່ຽວຂ້ອງ, ລວມທັງ ມະຕິ 31/109 ລົງວັນທີ 16 ທັນວາ 1976 ແລະ 32/162 ລົງວັນທີ 19 ທັນວາ 1977. ພວກເຮົາກ່າວຢໍ້າຄວາມສໍາຄັນຂອງທີ່ຕັ້ງສໍານັກງານໃຫຍ່ Nairobi ຂອງອົງການພັດທະນາທີ່ພັກອາໄສຂອງ ສປຊ.

171. ພວກເຮົາເນັ້ນຄວາມສໍາຄັນຂອງອົງການພັດທະນາທີ່ພັກອາໄສຂອງ ສປຊ, ໃຫ້ບົດບາດຂອງໜ່ວຍງານນີ້ຢູ່ໃນລະບົບຂອງ ສປຊ ເປັນຈຸດກາງໃນການຕັ້ງຖິ່ນຖານຂອງມະນຸດ ແລະ ເມືອງ ແບບຍືນຍົງ, ລວມທັງໃນການຈັດຕັ້ງປະຕິບັດ, ຕິດຕາມ ແລະ ກວດຄືນຂອງວາລະການພັດທະນາເມືອງແບບຍືນຍົງ, ໃນການຮ່ວມມືກັບພາກສ່ວນລະບົບອື່ນໆຂອງ ສປຊ.

172. ໃນທັດສະນະຂອງວາລະການພັດທະນາເມືອງສະບັບໃໝ່ ແລະ ດ້ວຍຄວາມມຸ້ງໝາຍວ່າ ຈະເພີ່ມທະວີການບັນລຸວັດຖຸປະສົງຕາມຄວາມເປັນຈິງຂອງການພັດທະນາທີ່ພັກອາໄສຂອງ ສປຊ, ພວກເຮົາຂໍຮ້ອງເລຂາທິການໃຫຍ່ໃຫ້ຍື່ນຜົນການປະເມີນຂອງອົງການພັດທະນາທີ່ພັກອາໄສຂອງ ສປຊ ທີ່ມີເອກະລາດ ແລະ ອີງຫຼັກຖານ ຕໍ່ສະມັດຊາໃຫຍ່ໃນລະຫວ່າງກອງປະຊຸມຄັ້ງ ທີ 71. ຜົນຂອງການປະເມີນຈະແມ່ນບົດລາຍງານທີ່ປະກອບດ້ວຍການສະເໜີແນະເພື່ອເພີ່ມທະວີການການບັນລຸວັດຖຸປະສົງຕາມຄວາມເປັນຈິງ, ມີຜົນ, ມີຄວາມຮັບຜິດຊອບ ແລະ ມີການຄວບຄຸມ ຂໍ້ຜິດພາດຂອງອົງການພັດທະນາທີ່ພັກອາໄສຂອງ ສປຊ, ໃນເລື່ອງນີ້ ຜົນຂອງການປະເມີນ ຄວນຈະວິເຄາະ ດັ່ງລຸ່ມນີ້:

(a) ຄໍາສັ່ງ/ການແຕ່ງຕັ້ງຂອງການພັດທະນາທີ່ພັກອາໄສຂອງ ສປຊ ທີ່ມີມາດຕະຖານ ແລະ ສາມາດການປະຕິບັດງານໄດ້;

(b) ໂຄງຮ່າງການປົກຄອງຂອງການພັດທະນາທີ່ພັກອາໄສຂອງ ສປຊ ສໍາລັບການຕັດສິນໃຈທີ່ມີປະສິດທິພາບ, ມີຄວາມຮັບຜິດຊອບ, ແລະ ໂປ່ງໃສ, ຈະພິຈາລະນາເຖິງທາງເລືອກ/ອີກທາງໜຶ່ງ, ລວມທັງການເຮັດໃຫ້ມີຢູ່ທົ່ວໄປຂອງຈໍານວນສະມາຊິກຂອງຄະນະກໍາມະການ/ສະພາການປົກຄອງ;

(c) ການເຮັດວຽກຂອງການພັດທະນາທີ່ພັກອາໄສຂອງ ສປຊ ກັບລັດຖະບານປະເທດ, ພາກ ແລະ ທ້ອງຖິ່ນ ກັບພາກສ່ວນອື່ນທີ່ກ່ຽວຂ້ອງເພື່ອແຈ້ງຂ່າວໃຫ້ຮູ້ເຖິງຄວາມສໍາຄັນເຕັມສ່ວນຂອງຄວາມສໍາພັນກັນ;

(d) ຄວາມສາມາດທາງດ້ານການເງິນຂອງອົງການພັດທະນາທີ່ພັກອາໄສຂອງ ສປຊ.

173. ພວກເຮົາຕັດສິນໃຈຖືເອົາກອງປະຊຸມລະດັບສູງສອງວັນຂອງສະພາໃຫຍ່, ທີ່ຖືກເຕົ້າໂຮມ/ຮຽກປະຊຸມໂດຍປະທານຂອງສະມັດຊາໃຫຍ່ໃນລະຫວ່າງກອງປະຊຸມຄັ້ງທີ 71, ເພື່ອປຶກສາຫາລືການຈັດຕັ້ງປະຕິບັດຂອງວາລະການພັດທະນາເມືອງສະບັບໃໝ່ຢ່າງມີຜົນ ແລະ ການຈັດວາງຂອງການພັດທະນາທີ່ພັກອາໄສຂອງ ສປຊ ໃນເລື່ອງນີ້. ກອງປະຊຸມຈະປຶກສາຫາລື ເຊັ່ນ: ການປະຕິບັດງານທີ່ດີທີ່ສຸດ, ເລື່ອງທີ່ປະສົບຜົນສໍາເລັດ ແລະ ມາດຕະການທີ່ກໍານົດຢູ່ໃນບົດລາຍງານ. ການສະຫຼຸບຂອງປະທານກອງປະຊຸມຈະໃຊ້ເປັນຄວາມເຫັນໃຫ້ຄະນະກໍາມະການຄັ້ງທີ່ສອງລະຫວ່າງ ກອງປະຊຸມຄັ້ງທີ 72 ສໍາລັບການພິຈາລະນາຂອງການດໍາເນີນງານ/ແຜນງານທີ່ຖືກນໍາເຂົ້າໃນທັດສະນະຂອງຄໍາຄິດຄໍາເຫັນທີ່ລະບຸຢູ່ໃນການປະເມີນທີ່ເປັນກາງຢູ່ໃນມະຕິສາມັນ/ປະຈໍາປີພາຍໃຕ້ຫົວຂໍ້ຢູ່ໃນວາລະທີ່ກ່ຽວຂ້ອງ.

174. ພວກເຮົາກະຕຸ້ນໃຫ້ສະມັດຊາໃຫຍ່ເພື່ອພິຈາລະນາການຖືເອົາກອງປະຊຸມການພັດທະນາທີ່ພັກອາໄສ ແລະ ເມືອງແບບຍືນຍົງ (Habitat IV) ຂອງ ສປຊ ໃນຄັ້ງໜ້າໃນປີ 2036 ໃນຄໍາໝັ້ນສັນຍາທາງການເມືອງທີ່ໄດ້ຟື້ນຟູ/ຕໍ່ອາຍຸເພື່ອປະເມີນ ແລະ ລວບລວມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວາລະການພັດທະນາຕົວເມືອງສະບັບໃໝ່.

175. ພວກເຮົາຂໍຮ້ອງໃຫ້ເລຂາທິການໃຫຍ່, ໃນບົດລາຍງານຂອງທ່ານໃນທຸກໆ 4 ປີ ຕ້ອງໄດ້ຖືກນໍາສະເໜີໃນ ປີ2026 ເພື່ອໃຫ້ເປັນໄປຕາມວັກ 166 ຢູ່ຂ້າງເທິງ, ຈະປະເມີນຄວາມຄືບໜ້າ ແລະ ສິ່ງທີ່ທ້າທາຍທີ່ໄດ້ພະເຊີນໜ້າໃນການຈັດຕັ້ງປະຕິບັດຂອງວາລະການພັດທະນາເມືອງສະບັບໃໝ່ຕັ້ງແຕ່ການຮັບຮອງໃຊ້ ແລະ ຊອກຫາຂັ້ນຕອນຕໍ່ໄປເພື່ອແກ້ໄຂໃຫ້ສິ່ງທ້າທາຍເຫຼົ່ານັ້ນ.

HABITAT III

QUITO 17-20 OCTOBER 2016

United Nations Conference on Housing and Sustainable Urban Development

United Nations

**www.habitat3.org**

#NewUrbanAgenda #Habitat3